ແຜນຈັດສັນ
ການນຳໃຊ້ທີ່ດິນ

ບ້ານເພຍກ່າ, ບ້ານສີວິໄລ ແລະ ບ້ານດົງເມືອງ - ການຄຸ້ມຄອງ
ຈັດສັນທີ່ດິນ ແລະ ການປະເມີນການພັດທະນາທີ່ສົມບູນແບບ
ເພື່ອການວາງແຜນແບບຍືນຍົງ.

ບົດລາຍງານ
ວິຊາການ

ຈັດຕັ້ງປະຕິບັດໂດຍ

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ
ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບ
ນ້ຳເຊບັ້ງຫຽງ ແລະ ຕົວເມືອງຫລວງພະບາງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

“ບ້ານສີວິໄລ” ເມືອງຈຳພອນ ແຂວງສະຫວັນນະເຂດ



ກະກຽມໂດຍ:

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ

ພະຈິກ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເມືອງຈໍາພອນ

ເລກທີ **725** /ຈມ.ຈພ
ເມືອງຈໍາພອນ, ວັນທີ 21 ພະຈິກ 2025

ຂໍ້ຕົກລົງ
ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນບ້ານ ສີວິໄລ, ເມືອງຈໍາພອນ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019;
- ອີງຕາມ ແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025;
- ອີງຕາມ ໜັງສືສະເໜີຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ, ສະບັບເລກທີ 188/ ຫກສມ.ຈພ, ວັນທີ 20 ພະຈິກ 2025.

ເຈົ້າເມືອງຈໍາພອນ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນ ຂອງ ບ້ານສີວິໄລ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນໍາການຈັດຕັ້ງປະຕິບັດໄປຕາມແຜນທີ່ກໍານົດໄວ້ ແລະ ແຜນສະບັບນີ້ເປັນນິຕິກໍາຄຸ້ມຄອງເພື່ອຮັບປະກັນສິດໃນການນໍາໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມ ຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກໍາ ແລະ ປ່າໄມ້, ທຸກ ການປ່ຽນແປງ ຫຼື ການຫັນປ່ຽນປະເພດການນໍາໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກໍານົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ ເຈົ້າເມືອງ

ຄໍາຕາ ສົນນະສອນ
Khamta SINNASONE

ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມີຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2025 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານສີວິໄລ ສະບັບນີ້ ຈະເປັນເອກະສານພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານ ຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານສີວິໄລ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ແລະ ອົງການປົກຄອງເມືອງຈຳພອນ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານສີວິໄລ ສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຈຳພອນ, ວັນທີ 20 ພະຈິກ 2025

ຫົວໜ້າຫ້ອງການ

ຄອນສະຫວັນ ຄວາມາລາ

ສັງລວມຫຍໍ້

ບ້ານ ສີວິໄລ ຕັ້ງຫ່າງຈາກເທດສະບານເມືອງ ຈໍາພອນ ໄປທາງທາງທິດຕາເວັນອອກສ່ຽງໃຕ້ຂອງເມືອງ, ມີໄລຍະທາງແຕ່ປະມານ 23 ກິໂລແມັດ, ມີລະດັບຄວາມສູງ ສະເລ່ຍ 169 ແມັດ ທຽບໃສ່ລະດັບນໍ້າທະເລ, ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ ມີ 1784.876 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງຈໍາພອນ ແລະ ບັນດາບ້ານຂອງເມືອງໃກ້ຄຽງ ຄື: ທິດເໜືອ ຕິດກັບ ບ້ານຂອນແຕ້-ບ້ານຫ້ວຍຍາງ ເມືອງຈໍາພອນ, ທິດໃຕ້ຕິດກັບ ບ້ານຫຼັກ35, ເມືອງຈໍາພອນ, ທິດຕາເວັນອອກ ຕິດກັ ບ້ານຫຼັກ 35, ບ້ານຄໍານ້ອຍ ແລະ ບ້ານນານິກຂຽນ, ເມືອງຈໍາພອນ ທິດຕາເວັນຕົກ ຕິດກັບ ບ້ານຫ້ວຍຍາງ, ເມືອງຈໍາພອນ.

ບ້ານ ສີວິໄລ ມີພົນລະເມືອງທັງໝົດ 1,683 ຄົນ, ຍິງ 860 ຄົນ, ປະກອບມີ 15 ໜ່ວຍ, ມີ 218 ຫລັງຄາເຮືອນ,ມີ 343 ຄອບຄົວ. ມີ 2 ຊົນເຜົ່າຄື: ຊົນເຜົ່າ ບຮູ ມີຮີດຄອງປະເພນີ ມີ 86 ຄອບຄົວ, ມີ 54 ຫຼັງຄາເຮືອນ, ມີ ຍິງ 228 ຄົນ ແລະ ເຜົ່າລາວ, ມີບຸນປະເພນີ ມີ 257 ຄອບຄົວ, ມີ 164 ຫຼັງຄາເຮືອນ. ຊາວບ້ານປະກອບອາຊີບກະສິກໍາເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ປູກພືດ ແລະ ສໍາຮອງລ້ຽງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ຄ້າຂາຍ.

ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ບ້ານສີວິໄລ ປະກອບມີ 6 ປະເພດການນໍາໃຊ້ຫຼັກ ຊຶ່ງປະກອບມີດັ່ງນີ້: ເຂດທີ່ດິນກະສິກໍາ ມີປະມານ 1090.21 ເຮັກຕາ ກວມເອົາ 61.03% (ໃນນີ້ ນາ, ນາສາມາດເຮັດຊົນລະປະທານ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 63.5061 ເຮັກຕາ ກວມເອົາ 3.56% (ໃນນີ້, ມີດິນປຸກສ້າງບຸກຄົນ, ໂຮງຮຽນ, ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທໍາ ມີເນື້ອທີ່ 14.02 ເຮັກຕາ ກວມເອົາ 0.79% (ໃນນີ້, ປ່າມະເຫສັກ, ແລະ ປ່າຊ້າ), ດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີເນື້ອທີ່ 34.43 ເຮັກຕາ ກວມເອົາ 1.93% (ໃນນີ້ມີດິນປ້ອງກັນຊາດ), ທີ່ດິນຄົມມະນາຄົມ ມີເນື້ອທີ່ 18.09 ເຮັກຕາ. ກວມເອົາ 1.01% (ໃນນີ້, ເສັ້ນທາງເລກທີ 13 ໃຕ້ ແລະ ເສັ້ນທາງຮ່ອມ) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 203.096 ເຮັກຕາ ກວມເອົາ 11.37% (ໃນນີ້, ອ່າງເກັບນໍ້າຍອດຫ້ວຍບັກ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຮວ່ມກັບຄະນະຮັບຜິດຊອບ ແລະ ວິຊາການຈັດສັນທີ່ດິນ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສໍາຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ-ສັດປ່າ ແລະ ການກະທໍາທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

ສາລະບານ

ຄຳນຳ i

ສັງລວມຫຍໍ້..... ii

I. ຈຸດປະສົງ ແລະ ລະດັບຄາດໝາຍ..... 7

1.1 ຈຸດປະສົງ 7

1.2 ລະດັບຄາດໝາຍ..... 7

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ 8

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ..... 8

II. ສະພາບລວມຂອງບ້ານ..... 9

2.1 ປະຫວັດຄວາມເປັນມາຂອງບ້ານ 9

2.2 ທີ່ຕັ້ງພູມສັນຖານ..... 9

2.3 ດ້ານການປົກຄອງ..... 9

2.4 ດ້ານເສດຖະກິດ-ສັງຄົມ..... 10

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ 10

III. ສະພາບການນຳໃຊ້ທີ່ດິນປະຈຸບັນ 10

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ..... 10

3.2 ເຂດຄຸ້ມຄອງຂອງບ້ານສີວິໄລ ມີເຂດຄຸ້ມຄອງຕິດກັບ 6 ບ້ານຄື:..... 11

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ 14

IV. ການຈັດສັນການນຳໃຊ້ທີ່ດິນ..... 16

4.1 ການກຳນົດເຂດທີ່ດິນຂອງບ້ານ ສີວິໄລ..... 16

4.1.1 ເຂດທີ່ດິນອະນຸລັກ..... 16

4.1.2 ເຂດທີ່ດິນນຳໃຊ້ນຳ..... 16

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ 17

4.2 ການກຳນົດປະເພດທີ່ດິນຂອງບ້ານ 18

V. ທ່າແຮງໃນການພັດທະນາທີ່ດິນ..... 22

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ..... 22

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານສີວິໄລ 22

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ..... 22

6.1 ການຄຸ້ມຄອງ ທີ່ດິນກະສິກຳ 22

6.2 ການຄຸ້ມຄອງທີ່ດິນປຸກສ້າງ 22

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ..... 22

6.4 ການຄຸ້ມຄອງ ທີ່ດິນປ່າໄມ້..... 23

6.5 ການຄຸ້ມຄອງ ທີ່ດິນຄົມມະນາຄົມ 23
6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ 23
VII. ການຫັນປ່ຽນປະເພດທີ່ດິນ 23
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ 23
8.1. ການຈັດຕັ້ງ 24
8.2. ບຸກຄະລາກອນ 24
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ 24
8.4. ຂອບເຂດສິດ 24
8.5. ລະບອບແບບແຜນວິທີເຮັດວຽກ 25
8.6. ການຕິດຕາມກວດກາ 25
ເອກະສານອ້າງອິງ 26
ເອກະສານຊ້ອນທ້າຍ 27
ເອກະສານຊ້ອນທ້າຍທີ່ 1: ໜັງສືສະເໜີ 28
ເອກະສານຊ້ອນທ້າຍທີ່ 2: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫว่າງບ້ານຕໍ່ບ້ານ 29
ເອກະສານຊ້ອນທ້າຍທີ່ 3: ກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ 34
ເອກະສານຊ້ອນທ້າຍທີ່ 4: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫว่າງບ້ານສີວິໄລຕິດກັບບ້ານຫ້ວຍຍາງ, ບ້ານຂອນແຕ້, ບ້ານນານົກຂຽນ, ບ້ານຄຳນ້ອຍ, ບ້ານຫຼັກ35 36
ເອກະສານຊ້ອນທ້າຍທີ່ 5: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ 40
ເອກະສານຊ້ອນທ້າຍທີ່ 6: ເອກະສານສຳພາດຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານໂດຍການເຊັນຮັບຮອງຈາກນາຍບ້ານ 42
ເອກະສານຊ້ອນທ້າຍທີ່ 7: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການ 49
ເອກະສານຊ້ອນທ້າຍທີ່ 8: ເອກະສານແຈ້ງການກ່ຽວກັບການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນແຂວງສະຫວັນນະເຂດ 51

ສາລະບານຕາຕະລາງ

ຕາຕະລາງທີ 1 ສະແດງດ້ານສາດສະໜາ.....10
ຕາຕະລາງທີ 2 ຄ່າພິກັດບ້ານຫ້ວຍຍາງ-ບ້ານຂອນແຕ້,ເມືອງຈໍາພອນ ແຂວງສະຫວັນນະເຂດ 11
ຕາຕະລາງທີ 3 ຄ່າພິກັດບ້ານຂອນແຕ້-ບ້ານນານົກຂຽນ ເມືອງຈໍາພອນ ແຂວງສະຫວັນນເຂດ.....11
ຕາຕະລາງທີ 4 ຄ່າພິກັດບ້ານບ້ານນານົກຂຽນ-ບ້ານຄໍານ້ອຍ, ເມືອງຈໍາພອນ ແຂວງສະຫວັນນະເຂດ 12
ຕາຕະລາງທີ 5 ຄ່າພິກັດບ້ານຄໍານ້ອຍ-ບ້ານຫຼັກ35 ເມືອງຈໍາພອນ ແຂວງ ສະຫວັນນະເຂດ 12
ຕາຕະລາງທີ 7 ສັງລວມປະເພດການນໍາໃຊ້ທີ່ດິນປະຈຸບັນ ບ້ານສີວິໄລ ເມືອງຈໍາພອນ ແຂວງສະຫວັນນະເຂດ ...15
ຕາຕະລາງທີ 8 ສັງລວມປະເພດການຈັດສັນນໍາໃຊ້ທີ່ດິນບ້ານສີວິໄລ, ເມືອງຈໍາພອນ ແຂວງສະຫວັນນະເຂດ 19
ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນໍາໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ.....21

ສາລະບານຮູບພາບ

ຮູບທີ 1 ສະພາບພູມສັນຖານຂອງບ້ານສີວິໄລ ເມືອງຈໍາພອນ ແຂວງສະຫວັນນະເຂດ 9
ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານສີວິໄລ, ເມືອງຈໍາພອນ ແຂວງສະຫວັນນະເຂດ 14
ຮູບທີ 3 ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ບ້ານສີວິໄລ ເມືອງຈໍາພອນ ແຂວງສະຫວັນນະເຂດ 16
ຮູບທີ 4 ແຜນທີ່ຈັດສັນການນໍາໃຊ້ທີ່ດິນ ບ້ານສີວິໄລ ເມືອງຈໍາພອນ ແຂວງສະຫວັນນະເຂດ 20
ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ລະຫວ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ21
ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ.....21

I. ຈຸດປະສົງ ແລະ ລະດັບຄາດໝາຍ

1.1 ຈຸດປະສົງ

- ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ;
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກຳນົດພື້ນທີ່, ເຂດທີ່ເປັນທ່າແຮງກ່ຽວກັບເປົ້າໝາຍໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດສາມາດນຳຜົນປະໂຫຍດສູງສຸດ;
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ;
- ເພື່ອຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆ ເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງອອກ;
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ;
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບ ປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢູ່ໃນແຕ່ລະທ້ອງຖິ່ນໄດ້.

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- ຂັ້ນຕອນທີ 1: ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະ ແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ;
- ຂັ້ນຕອນທີ 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການຈາກພາກສ່ວນ/ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ;
- ຂັ້ນຕອນທີ 3: ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງ ເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້;
- ຂັ້ນຕອນທີ 4: ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ;
- ຂັ້ນຕອນທີ 5: ກະກຽມບັນດາເອກະສານຕ່າງ ທີ່ກ່ຽວພັນກັບທີ່ດິນເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະ ລະບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ, ນິຕິບຸກຄົນ, ບໍລິສັດ ຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ;
- ຂັ້ນຕອນທີ 6: ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມຢູ່ແຕ່ລະບ້ານ ແລະ ເມືອງ;
- ຂັ້ນຕອນທີ 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ.

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການ ກ່ຽວກັບ ການນຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງບ້ານ-ກຸ່ມບ້ານ ໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະ ສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະປະເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອນເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະ ມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການ;
- ຜ່ານແຜນການຈັດສັນທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງ ແລະ ປະກາດໃຊ້ແຜນດັ່ງກ່າວຢ່າງເປັນທາງການ.

II. ສະພາບລວມຂອງບ້ານ

2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານສີວິໄລ ອີງຕາມການບອກເລົ່າຈາກອໍານາດການປົກຄອງບ້ານໃນເມື່ອກ່ອນ ສ້າງຕັ້ງຂຶ້ນໃນປີ 1962 ຜູ້ນໍາພາສ້າງຕັ້ງຂຶ້ນມີພໍ່ເຖົ້າດໍາ, ພໍ່ເຖົ້າເນືອດ, ພໍ່ເຖົ້າເລາະ, ພໍ່ເຖົ້າຈານຈັນ, ພໍ່ເຖົ້ານ້າວ ສ້າງຕັ້ງທໍາອິດແມ່ນຊື່ບ້ານໃໝ່ສີວິໄລ ສ່ວນໃຫຍ່ແມ່ນຍົກຍ້າຍອອກຈາກບ້ານດົງຄັນຄູ ແມ່ນຕັ້ງເຮືອນຢູ່ຕາມສາຍທາງເລກທີ 13 ໃຕ້ ມີ 3 ຄຸ້ມໂຮມເຂົ້າກັນຄື: ຄຸ້ມສີວິໄລ, ຄຸ້ມໂນນນາດີ, ຄຸ້ມໂຊກໄຊ ເອີ້ນເປັນຊື່ບ້ານສີວິໄລ ຈົນມາຮອດປະຈຸບັນ.

2.2 ທີ່ຕັ້ງພູມສັນຖານ

ບ້ານສີວິໄລ ຕັ້ງຢູ່ທິດຕາເວັນຕົກ ຂອງເມືອງຈໍາພອນ, ແຂວງສະຫວັນນະເຂດ ຫ່າງຈາກເທດສະບານເມືອງ ປະມານ 23 ກິໂລແມັດ ແລະ ມີລະດັບຄວາມສູງທຽບໃສ່ລະດັບໜ້ານ້ໍາທະເລ 169 ແມັດ. ສະ ພາບພູມສັນຖານ ເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ. ດັ່ງສະແດງໃນຮູບພາບລຸ່ມນີ້:

ພາບຖ່າຍໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1 ສະພາບພູມສັນຖານຂອງບ້ານສີວິໄລ ເມືອງຈໍາພອນ ແຂວງສະຫວັນນະເຂດ

2.3 ດ້ານການປົກຄອງ

ສີວິໄລ ມີພົນລະເມືອງທັງໝົດ 1,683 ຄົນ, ຍິງ 860 ຄົນ, ປະກອບມີ 15 ໜ່ວຍ, ມີ 218 ຫລັງຄາເຮືອນ,ມີ 343 ຄອບຄົວ. ມີ 2 ຊົນເຜົ່າຄື: ຊົນເຜົ່າ ບຮູ ມີຮີດຄອງປະເພນີ ມີ 86 ຄອບຄົວ, ມີ 54 ຫຼັງຄາເຮືອນ, ມີຍິງ 228 ຄົນ ແລະ ເຜົ່າລາວ, ມີບຸນປະເພນີ ມີ 257 ຄອບຄົວ, ມີ 164 ຫຼັງຄາເຮືອນ ໄດ້ຮັບນາມມະຍົດເປັນບ້ານໜ່ວຍພັກອດໃສ, ເຂັ້ມແຂງ, ໜັກແໜ້ນ.

ວຽກງານການສຶກສາທົ່ວການປະຈຸບັນໃນບ້ານມີໂຮງຮຽນປະຖົມສົມບູນ 02 ຫຼັງ (ນັບທັງອານຸບານ) ຫ້ອງຮຽນແມ່ນພຽງພໍກັບຄວາມຕ້ອງການ. ມີຈຳນວນນັກຮຽນ 112 ຄົນ, ຍິງ 58 ຄົນ, ມີຄູສອນ 4 ຄົນ, ຍິງ 3 ຄົນ ຫລັງຈາກຮຽນຈົບຊັ້ນປະຖົມ ແມ່ນໄດ້ປະສົກສາຕໍ່ມັດທະຍົມຕົ້ນ ແລະ ມັດທະຍົມປາຍ ຢູ່ຈຸດສຸມຊະແຍະ.

ວຽກງານສາທາລະນະສຸກບ້ານແມ່ນມີສຸກສາລາ 01 ແຫ່ງຊື່ສຸກສາລາຂອນແຕ້ແຕ່ຕັ້ງຢູ່ດິນບ້ານສີວິໄລ ຕັ້ງຢູ່ບ້ານສີວິໄລ (ຄຸ້ມໂຊກໄຊກ), ປະຊາຊົນໄດ້ຊົມໃຊ້ນ້ຳບາດານ ແລະ ຊົມໃຊ້ວິດຖ່າຍ 100%. ນອກຈາກນັ້ນ, ອົງການຈັດຕັ້ງບ້ານໄດ້ລະດົມ ໃຫ້ແຕ່ລະຄອບຄົວປະຕິບັດຫລັກການອານາໄມ 3 ສະອາດ, ລົບລ້າງການປົ່ນປົວຕາມຄວາມເຊື່ອຖືໄຊຍະສາດ ແລະ ລະດົມໃຫ້ປະຊາຊົນຫັນມາປົ່ນປົວ ໂດຍໃຊ້ຢາຫລວງ ແລະ ແບບວິທະຍາສາດ, ເດັກນ້ອຍໄດ້ຮັບການສັກຢາ, ຢອດຢາກັນພະຍາດ 100%. ຜູ້ຍິງຖືພາໄດ້ຮັບການຝາກທ້ອງ ແລະ ປະຕິບັດຕາມຫລັກການແນະນຳຂອງແພດໝໍເປັນປົກກະຕິ ສືບຕໍ່ນຳເອົາບັນດາແຈ້ງການ, ນິຕິກຳຕ່າງໆ ລົງເຜີຍແຜ່ໃຫ້ພໍ່ແມ່ປະຊາ ຊົນໄດ້ຮັບຊາບ ໂດຍສະເພາະແມ່ນ ໂພສະນາການດ້ານສຸຂະພາບ, ການກິນ, ການຢູ່, ຕ້ານພະຍາດແຜ່ລະບາດ, ຖອກທ້ອງ, ໄຂ້ຍຸງ.

2.4 ດ້ານເສດຖະກິດ-ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສຳຮອງລົງມາແມ່ນມາຈາການຄ້າຂາຍ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະ ຫຍາຍຕົວເພີ້ມຂຶ້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 133 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 02 ຄອບຄົວ.

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ

ປະຊາຊົນບ້ານ ສີວິໄລ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີບັນພະບຸລຸດຂອງປະຊາຊົນລາວບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນ ບຸນປີໃໝ່ລາວ ແລະ ອື່ນໆ.

ຕາຕະລາງທີ 1 ສະແດງດ້ານສາດສະໜາ

ລ/ດ	ປະເພດຊົນເຜົ່າ	ສາດສະໜາ	ຈຳນວນຄອບຄົວ	ໝາຍເຫດ
1	ລາວ	ພຸດ	257	
2	ບຮູ	ພຸດ	86	
ລວມທັງໝົດ			343	

III. ສະພາບການນຳໃຊ້ທີ່ດິນປະຈຸບັນ

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຊຶ່ງກຳນົດຈຸດໃຈກາງບ້ານ GPS ມີຄ່າພິກັດ: ເສັ້ນແວງທີ X = 526708 m; ເສັ້ນຂະໜານທີ Y = 1826682 m ແລະ ມີລວງຮອບທັງໝົດ = 23.51 ກິໂລແມັດ, ມີເນື້ອທີ່ທັງໝົດ = 1786.2148 ເຮັກຕາ.

3.2 ເຂດຄຸ້ມຄອງຂອງບ້ານສີວິໄລ

ເຂດຄຸ້ມຄອງຂອງບ້ານສີວິໄລ ມີເຂດຄຸ້ມຄອງຕິດກັບ 6 ບ້ານຄື:

- ທິດເໜືອ (N) ຕິດກັບ ບ້ານຫ້ວຍາງ-ບ້ານຂອນແຕ້ ເມືອງຈໍາພອນ
- ທິດໃຕ້ (S) ຕິດກັບ ບ້ານຫຼັກ35-ບ້ານຄໍານ້ອຍເມືອງຈໍາພອນ
- ທິດຕາເວັນອອກ (E) ຕິດກັບ ບ້ານນານົກຂຽນ,ບ້ານຄໍານ້ອຍ ເມືອງຈໍາພອນ
- ທິດຕາເວັນຕົກ (W) ຕິດກັບ ບ້ານຫຼັກ35-ບ້ານຫ້ວຍຍາງ ເມືອງຈໍາພອນ

ຕາຕະລາງທີ 2 ຄ່າພິກັດບ້ານຫ້ວຍຍາງ-ບ້ານຂອນແຕ້,ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	505977	1830285		ກໍານົດຈຸດເລີ້ມຈາກນາທ້າວ ຫຼົງ(ປະຊາຊົນບ້ານຄໍານ້ອຍ) ໄປຫານານາງ ໝື່ນ, ນານາງ ຫຼອຍ, ນານາງ ແຫວນ, ນາທ້າວ ຖັນ, ນານາງ ນົກ ຂ້າມທາງໄປຫານາທ້າວ ລ້ວນ, ນາທ້າວ ຕະ, ນານາງ ແສງໄປຕາມທາງໄລ່ອ້ອຍກ້ຽວໄປຕາມໄລ່ອ້ອຍຮອດປ່າຊ້າໄປຕາມຫານານາງ ກັອດ, ນາທ້າວ ຕ່ະ, ນານາງ ໝູ, ນານາງຫຼ້ານ້ອຍ, ນາງນາງ ແດງ, ນາທ້າວ ກິ, ນານາງ ແຫຼມ, ນາທ້າວ ຈັນ, ນານາງ ສູນ, ນານາງ ແວ່ນ, ນານາງ ໃບຕອງ, ນາທ້າວ ເລ, ນານາງ ຖັນ, ນາງທ້າວ ພຽນ, ນາທ້າວ ດອນໄປຕາມທາງຮ່ອມ ຮອດນາທ້າວ ໂຕ້ນຕິດບ້ານຫຼັກ35, ບ້ານຫ້ວຍຍາງ, ບ້ານສີວິໄລ.
2	502530	1829736		ກໍານົດຈຸດເລີ້ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອເລາະຕາມກາງນໍ້າໄປຫານາທ້າວ ໝານເລາະໄປຊຶ່ໄປໃສ່ກົກຈິກນາທ້າວ ໂລດ ຂ້າມທາງເລກທີ 13 ໃຕ້ໄປຫານາທ້າວ ຫຼົງ (ປະຊາຊົນຄໍານ້ອຍ).
ລວມໄລຍະ			4.277	

ຕາຕະລາງທີ 3 ຄ່າພິກັດບ້ານຂອນແຕ້-ບ້ານນານົກຂຽນ ເມືອງຈໍາພອນ ແຂວງສະຫວັນນເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	502530	1829736		ເລີ້ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອເລາະຕາມກາງນໍ້າໄປຫານາທ້າວ ໝານເລາະໄປຊຶ່ໄປໃສ່ກົກຈິກນາທ້າວ

				ໂລດ ຂ້າມທາງເລກທີ 13 ໃຕ້ໄປຫານາທ້າວ ຫຼົ້ງ(ປະຊາຊົນຄຳນ້ອຍ).
2	504911	1826505		ເລີ້ມແຕ່ທາງແດງລະຫວ່າງແດນນາທ້າວ ຕາ ກັບ ນາທ້າວ ຂັນ ຂຶ້ນໃສ່ຮ່ອງຫ້ວຍຕາດເລາະໄປຕາມສາຍຮ່ອງຫ້ວຍຕາດຕົກໃສ່ອ່າງຍອດຫ້ວຍບັກຊື່ໄປໃສ່ກາງຍອດຫ້ວຍບັກເປັນຈຸດຊາຍແດນ ຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້.
ລວມໄລຍະ			4.285	

ຕາຕະລາງທີ 4 ຄ່າພິກັດບ້ານບ້ານນານົກຂຽນ-ບ້ານຄຳນ້ອຍ, ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	504911	1826505		ເລີ້ມແຕ່ທາງແດງລະຫວ່າງແດນນາທ້າວ ຕາ ກັບ ນາທ້າວ ຂັນ ຂຶ້ນໃສ່ຮ່ອງຫ້ວຍຕາດເລາະໄປຕາມສາຍຮ່ອງຫ້ວຍຕາດຕົກໃສ່ອ່າງຍອດຫ້ວຍບັກຊື່ໄປໃສ່ກາງຍອດຫ້ວຍບັກເປັນຈຸດຊາຍແດນ ຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້.
2	505977	1830285		ກຳນົດຈຸດເລີ້ມແຕ່ນາທ້າວ ຂັນໄປຕາມທາງໄປທາງຕາເວັນຕົກ ຫານາທ້າວ ເກົ້ອ
ລວມໄລຍະ			438	

ຕາຕະລາງທີ 5 ຄ່າພິກັດບ້ານຄຳນ້ອຍ-ບ້ານຫຼັກ35 ເມືອງຈຳພອນ ແຂວງ ສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	505977	1830285		ກຳນົດຈຸດເລີ້ມແຕ່ນາທ້າວ ຂັນໄປຕາມທາງໄປທາງຕາເວັນຕົກ ຫານາທ້າວ ເກົ້ອ
2	504790	1826473		ເລີ້ມຈາກນາທ້າວ ເກົ້ອໄປຕາມທາງຫານາທ້າວ ຕາ ຫານາທ້າວ ກ່າຍ ແລ້ວລົງໄປໃສ່ຮ່ອງຫ້ວຍຕາດ ໄປຕາມຮ່ອງຫ້ວຍຕາດໃສ່ນານາງ ແກ້ວ ອອກໄປໃສ່ທາງຮ່ອມຕ່ຳໃນດົນທ້າວ ແດງ, ນາງ ພອງ ຕິດທາງເລກທີ 13 ໃຕ້ ຂຶ້ນໄປໃສ່ແຈແດນດົນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວໄປຕາມທາງຮ່ອມໄປຫານານາງ ນ້ອຍ, ນານາງ ລຳພອນ, ນາທ້າວ ພູຂົ້ງ, ນານາງ ກ່ອຍ,

				ນາທ້າວ ພູຂົ້ງ, ນາງ ນາງ ພ່ອນ , ນາທ້າວ ແສງເດືອນ, ນານາງ ເພັດ, ນາທ້າວ ອອມ, ນາທ້າວ ແສງດາວ, ນາທ້າວ ພົ້ງ, ນາທ້າວ ແອັດໄປຕາມເຂດແດນນາທ້າວໂທນ, ນາງ ແກ້ວຕໍ່ໃສນານາງນາ, ນາງ ຫ້ຼາ, ທ້າວ ໜິ້ງ, ນາທ້າວ ຮັກ, ນາທ້າວ ໂຕ້ນຮອດສາມແຍກ ຕິດສາມບ້ານຄື: ບ້ານຫ້ຼັກ35, ບ້ານຫ້ວຍຍາງ ແລະ ບ້ານສີວິໄລ
ລວມໄລຍະ			7.388	

ຕາຕະລາງທີ 6 ຄ່າພິກັດບ້ານຫ້ຼັກ35-ບ້ານຫ້ວຍຍາງ ເມືອງຈໍາພອນ ແຂວງ ສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	504790	1826473		ເລີ້ມຈາກນາທ້າວ ເກືອໄປຕາມທາງຫານາທ້າວ ຕາ ຫານາທ້າວ ກ່າຍ ແລ້ວລົງໄປໃສ່ຮ່ອງຫ້ວຍຕາດ ໄປຕາມຮ່ອງຫ້ວຍຕາດໃສ່ນານາງ ແກ້ວ ອອກໄປໃສ່ທາງຮ່ອມຕ່ໍາໃນດົນທ້າວ ແດງ, ນາງ ພອງ ຕິດທາງເລກທີ 13 ໃຕ້ ຂຶ້ນໄປໃສ່ແຈແດນດົນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວໄປຕາມທາງຮ່ອມໄປຫານານາງ ນ້ອຍ, ນານາງ ລໍາພອນ, ນາທ້າວ ພູຂົ້ງ, ນານາງ ກ່ອຍ, ນາທ້າວ ພູຂົ້ງ, ນາງ ນາງ ພ່ອນ , ນາທ້າວ ແສງເດືອນ, ນານາງ ເພັດ, ນາທ້າວ ອອມ, ນາທ້າວ ແສງດາວ, ນາທ້າວ ພົ້ງ, ນາທ້າວ ແອັດໄປຕາມເຂດແດນນາທ້າວ ໂທນ, ນາງ ແກ້ວຕໍ່ໃສນານາງ ນາ ,ນາງ ຫ້ຼາ, ທ້າວ ໜິ້ງ, ນາທ້າວ ຮັກ, ນາທ້າວ ໂຕ້ນຮອດ ສາມແຍກຕິດສາມບ້ານຄື: ບ້ານຫ້ຼັກ35, ບ້ານຫ້ວຍຍາງ ແລະ ບ້ານສີວິໄລ
2	505977	1830285		ກໍານົດຈຸດເລີ້ມຈາກນາທ້າວ ຫ້ຼົງ(ປະຊາຊົນບ້ານຄໍານ້ອຍ) ໄປຫານານາງ ໝື່ນ, ນານາງ ຫ້ວຍ, ນານາງ ແຫວນ, ນາທ້າວ ຖົ່ນ, ນານາງ ນິກ ຂ້າມທາງໄປຫານາທ້າວ ລ້ວນ, ນາທ້າວ ຕະ, ນານາງ ແສງໄປຕາມທາງໄລ່ອ້ອຍກ້ຽວໄປຕາມໄລ່ອ້ອຍຮອດປ່າຊ້ໍາໄປ ຕາມຫານານາງ ກ້ອດ, ນາທ້າວ ຕ່ະ, ນານາງ ໜູ, ນານາງຫ້ຼາ ນ້ອຍ, ນາງນາງ ແດງ, ນາທ້າວ ກົ, ນານາງ ແຫ້ມ, ນາທ້າວ ຈັນ, ນານາງ ສູນ, ນານາງ ແວ່ນ, ນານາງ ໃບຕອງ, ນາທ້າວ ເລ, ນານາງ ຖົ່ນ, ນາງທ້າວ ພຽນ, ນາທ້າວ ດອນໄປຕາມທາງຮ່ອມ ຮອດນາທ້າວ ໂຕ້ນຕິດບ້ານຫ້ຼັກ35, ບ້ານຫ້ວຍຍາງ, ບ້ານສີວິໄລ.
ລວມໄລຍະ			7.122	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງຈໍາພອນ ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ ປີ 2025

ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານສີວິໄລ, ເມືອງຈຳພອນ ແຂວງສະຫວັນນະເຂດ

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຖືອາຊີບເຮັດນາເປັນສ່ວນໃຫຍ່ ແລະ ຖືເອົາການເຮັດກະສິກຳປູກຝັງລ້ຽງສັດເປັນສຳຮອງ ໃນໄລຍະຜ່ານມາ ການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ດັ່ງກ່າວສ່ວນໃຫຍ່ເປັນຮາບພຽງ ແລະ ມີພື້ນທີ່ເປັນລຸບໂນນຈຳນວນໜຶ່ງ ເຊິ່ງມີຄວາມເໝາະສົມສຳລັບການເຮັດກະສິກຳ ໂດຍສະເພາະການເຮັດນາ ແລະ ລ້ຽງສັດໃຫຍ່ເປັນຕົ້ນແມ່ນ ລ້ຽງງົວ, ລ້ຽງຄວາຍ ແລະ ສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** ເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນການຜະລິດກະສິກຳເຊັ່ນ: ເນື້ອທີ່ ດິນນາ ແລະ ດິນປູກພືດກະສິກຳ ທົ່ວໄປເພື່ອຮັບປະກັບທາງດ້ານສະບຽງອາຫານໃຫ້ແກ່ປະຊາຊົນພາຍໃນບ້ານກໍ່ຄືພາຍໃນເມືອງ ແມ່ນມີຂໍ້ຈຳກັດ ດັງນັ້ນຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຜະລິດ ບໍ່ມີສາຍນ້ຳພຽງພໍ, ບໍ່ມີລະບົບຊົນລະປະທານ ເປັນສາເຫດ ໃຫ້ການປູກຝັງລ້ຽງສັດຂ້ອນຂ້າງຫຍຸ້ງຍາກ.

ຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຍຶດຖືເອົາການເຮັດກະສິກຳເປັນຕົ້ນ ດັ່ງນັ້ນເປີເຊັນການນຳໃຊ້ທີ່ດິນສ່ວນໃຫຍ່ແມ່ນເນື້ອທີ່ດິນກະສິກຳກວມເຖິງ 1,084.52 ເຮັກຕາ ກວມເອົາ 60,72% ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫລືອ ແມ່ນເນື້ອທີ່ດິນປະເພດອື່ນໆ.

ຕາຕະລາງທີ 6 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານສີວິໄລ ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ສີ	ເນື້ອທີ່ (ຮຕ)	ເປີເຊັນ %
I	ດິນກະສິກຳ	A		1,084.52	60.72
1	ດິນນາ	A_1		927.5034	51.93
2	ທີ່ດິນປູກພືດກະສິກຳ ທົ່ວໄປ	A_2		157.0157	8.79
II	ດິນປຸກສ້າງ	B		43.6780	2.45
1	ດິນປຸກສ້າງບຸກດິນ	B_1		41.9559	2.35
2	ທີ່ດິນປຸກສ້າງລັດ ຫຼື ດິນລວມບ້ານ	B_2		1.7220	0.096
III	ດິນວັດທະນະທຳ	C		14.02	0.79
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	C_1		0.9026	0.05
2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	C_2		13.1197	0.73
IV	ດິນ ປກສ-ປກຊ	C		34.42	1.93
1	ທີ່ດິນທີ່ຕັ້ງຄ້າຍ, ສຳນັກງານ, ຫ້ອງການ (ຕຳຫຼວດ)	D_1		34.4160	1.93
V	ດິນປ່າໄມ້	F		419.34	23.48
1	ທີ່ດິນປ່າຊົມໃຊ້ທົ່ວໄປ	F_1		419.3419	23.48
VI	ທີ່ດິນຄົມມະນາຄົມ	R		14.75	0.83
1	ທີ່ດິນທາງປູຢາງ/ເປຕິງ	R_1		3.4090	0.19
2	ທີ່ດິນທາງດິນແດງ ແລະ ທາງປູຢາງ	R_2		11.3439	0.64
VII	ດິນບໍລິເວນນ້ຳ	W		175.485	9.82
1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	W_1		2.5694	0.14
2	ທີ່ດິນໜອງນ້ຳທຳມະຊາດ	W_2		47.9479	2.68
3	ທີ່ດິນອ່າງເກັບນ້ຳ	W_3		124.9672	7.00
ລວມທັງໝົດ				1,786.2148	100.00

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 3 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານສີວິໄລ ເມືອງຈຳພອນ ແຂວງສະຫວັນນະເຂດ

IV. ການຈັດສັນການນຳໃຊ້ທີ່ດິນ

4.1 ການກຳນົດເຂດທີ່ດິນຂອງບ້ານ ສີວິໄລ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງ ຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມ ໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດ ດັ່ງນີ້:

4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ ແມ່ນປະກອບມີ: ທີ່ດິນປ່າຊ້າ, ປ່າສັກສິດ ແລະ ດິນປ່າມະເຫສັກ;

ຂ. ທີ່ດິນປ່າໄມ້ ປະກອບມີ: ປ່າຊຶມໃຊ້ທົ່ວໄປຂອງບ້ານ.

ຄ. ດິນບໍລິເວນນ້ຳຂອງບ້ານ ປະກອບມີ: ທີ່ດິນແມ່ນ້ຳ, ຫ້ວຍນ້ຳ, ທີ່ດິນໜອງນ້ຳທຳມະຊາດ, ທີ່ດິນອ່າງເກັບນ້ຳ.

4.1.2 ເຂດທີ່ດິນນຳໃຊ້ນຳ

- **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງ ບ້ານສີວິໄລ ປະກອບມີ: ດິນນາ, ດິນປູກພືດກະສິກຳ ທົ່ວໄປແມ່ນ ຢູ່ທາງທິດເໜືອ, ທິດໃຕ້, ທິດຕາເວັນອອກ, ຕິດຕາເວັນຕົກຂອງບ້ານ, ທີ່ດິນສາມາດສົ່ງເສີມການລ້ຽງສັດ ແລະ ໜອງປາລວມບ້ານໃນອານາຄົດແມ່ນກຳນົດເອົາຢູ່ທາງທິດຕາເວັນຕົກ ແລະ ທິດຕາເວັນອອກຂອງ ບ້ານ.
- **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**: ແມ່ນຕັ້ງຢູ່ແຄມທາງເລກທີ 13 ໃຕ້.
- **ດິນປຸກສ້າງຂອງລັດປະກອບມີ:** ດິນໂຮງຮຽນ ປະຖົມສົມບູນ ບ້ານສີວິໄລ ແລະ ໂຮງຮຽນ ປະຖົມມູນ (ຄຸ້ມໂນນນາດີ)

❖ **ເຂດທີ່ດິນເພື່ອພັດທະນາ**

ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງ ຂອງບ້ານເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນໃນອະນາຄົດ, ການຂະຫຍາຍພື້ນທີ່ດິນດັ່ງກ່າວ ແມ່ນໄດ້ກຳນົດເອົາລຽບຕາມແຄມສອງຝາກທາງເລກທີ 13 ໃຕ້.

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ເພື່ອຮັກສາແຫຼ່ງນ້ຳ, ຊີວະນາໆພັນ ແລະ ຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະ ພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າໂຄກ. ຂົງເຂດເຫຼົ່ານີ້, ລ້ວນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້,ເຄື່ອງປ່າຂອງດົງ ແລະ ອາຫານຈາກທຳມະຊາດຕາມຫ້ວຍ, ໜອງ, ບຶງ ແລະ ແມ່ນ້ຳລຳເຊຕ່າງໆ, ທີ່ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກມີການປ່ຽນແປງ ປະຊາຊົນກໍຈະມີຄວາມຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂຶ້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການຕ້ອງນຳໃຊ້ທີ່ດິນ ແລະຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຖ້າຫາກບໍ່ມີການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນແລະວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາແລະນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດແລະແຫຼ່ງນ້ຳໃຫ້ເຂົ້າສູ່ລະບຽບຫຼັກການແລະກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດແລະແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ແລະ ນອກຈາກນີ້ຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະ ກະສິກຳອື່ນໆ,ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະບາຍນ້ຳຢ່າງເໝາະສົມ.
- **ຄວາມຄ້ອຍຊັນແຕ່ 5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ(ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກຕ້ອງເຮັດຄັນຄູດິນຕາມແນວລະດັບຂວາງເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫ້ຍາລ້ຽງສັດ,ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-5%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດຫຼືຖ້າຈະປູກພືດປະສົມປະສານກັບການປູກປ່າຫຼືຈະປູກໄມ້ຊຸມຊົນກໍໄດ້,ຖ້າຈະປູກຫ້ຍາລ້ຽງສັດກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສວນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.
- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນ້ຳແລະປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.

- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສຳລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ,ປ່າປ້ອງກັນ ແຫຼ່ງນ້ຳ, ຊີວະນາງພັນແລະປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສຳຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນຳໃຊ້ທີ່ດິນຂອງບ້ານສີວິໄລ ໃຫຍ່ ອອກເປັນ 6 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ **ການກຳນົດ ທີ່ດິນກະສິກຳ**

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງທາງດ້ານກະສິກຳ. ເຂດທີ່ດິນກະສິກຳຂອງບ້ານສີວິໄລ ປະກອບມີ: ດິນນາ, ດິນປູກພືດກະສິກຳທົ່ວໄປ, ເຂດ ລ້ຽງສັດ ແລະ ໝອງລວມບ້ານແມ່ນກຳນົດເອົາຢູ່ທາງທິດເໜືອ ແລະ ທິດຕາເວັນຕົກຂອງບ້ານ.

❖ **ການກຳນົດ ທີ່ດິນປຸກສ້າງ**

ທີ່ດິນປຸກສ້າງແມ່ນທີ່ດິນທີ່ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນ ການປຸກສ້າງທີ່ຢູ່ອາໄສສຳນັກງານ, ອົງການ ແລະ ສະຖານທີ່ສາທາລະນະ. ເຂດທີ່ດິນປຸກສ້າງຂອງບ້ານ ແມ່ນລຽບຢູ່ຕາມສອງຝາກທາງເຂົ້າບ້ານ.

- ທີ່ດິນປຸກສ້າງທີ່ຢູ່ອາໃສປະຈຸບັນ:ກຳນົດຢູ່ແຄມເຊບັ້ງຫຽງ ແລະ ແຄມດົງສະມັນ.
- ດິນປຸກສ້າງຂະຫຍາຍໃໝ່ໄດ້ກຳນົດຕາມສອງຝາກທາງແຍກໄປບ້ານກະທອງເຊ ແລະ ໝອງແຂ້.
- ດິນປຸກສ້າງຂອງລັດປະກອບມີ: ດິນຫ້ອງການບ້ານ ແລະ ດິນປຸກສ້າງໂຮງຮຽນ ຕິດກັບແຄມເຊບັ້ງຫຽງ.

❖ **ການກຳນົດ ທີ່ດິນວັດທະນະທຳ**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງ ຂອງມໍລະດົກທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ວັດຖຸບູຮານ, ປູສະນີຍະສະຖານ, ທົ່ວທັດທຳມະຊາດ, ສິ່ງປຸກສ້າງດ້ານວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ. ທີ່ດິນວັດທະນະທຳຂອງບ້ານສີວິໄລ ປະກອບມີ:

- ດິນປ່າຊ້າ ກຳນົດຢູ່ທາງທິດໃຕ້, ທິດຕາເວັນອອກ, ທິດຕາເວັນຕົກຂອງບ້ານ.
- ດິນປ່າມະເຫສັກ ກຳນົດຢູ່ທາງທິດຕາເວັນອອກຂອງບ້ານ.

❖ **ການກຳນົດ ທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ເຊິ່ງລັດກຳນົດໃຫ້ເປັນທີ່ດິນປ່າໄມ້ຂອງບ້ານ ແມ່ນປະກອບມີ: ປ່າຊົມໃຊ້ທົ່ວໄປ.

❖ **ການກຳນົດ ທີ່ດິນຄົມມະນາຄົມ**

ທີ່ດິນຄົມມະນາຄົມ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດສະຫງວນ ແລວທາງ, ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານການຂົນສົ່ງ ປະກອບມີ 2 ປະເພດ:

- ເສັ້ນທາງ ເລກທີ 13 ໃຕ້ຄວາມກວ້າງ 50 ແມັດ
- ເສັ້ນທາງ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;

❖ **ການກຳນົດ ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ທີ່ດິນບໍລິເວນນ້ຳຂອງບ້ານ ແມ່ນປະກອບມີ: ຫ້ວຍ ແລະ ຮ່ອງຕ່າງໆ ຕ້ອງໄດ້ກຳນົດປ່າປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳຍອດຫ້ວຍບັກ, ແຄມຮ່ອງຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 7 ສັງລວມປະເພດການຈັດສັນນຳໃຊ້ທີ່ດິນບ້ານສີວິໄລ, ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ສີ	ເນື້ອທີ່ (ຮຕ)	ເປີເຊັນ %
I	**ດິນກະສິກຳ**	**AZ**		**1,090.21**	**61.03**
1	ທີ່ດິນນາ	AZ_1		849.3643	47.55
2	ທີ່ດິນປູກພືດກະສິກຳ ທົ່ວໄປ	AZ_2		139.2614	7.80
3	ທີ່ດິນແຮຂະຫຍາຍການຜະລິດ	AZ_5		101.5823	5.69
II	**ດິນປຸກສ້າງ**	**BZ**		**63.5061**	**3.56**
1	ດິນປຸກສ້າງບຸກຄົນ	BZ_1		33.3407	1.87
2	ທີ່ດິນປຸກສ້າງລັດ ແລະ ດິນລວມບ້ານ	BZ_2		1.7220	0.096
3	ທີ່ດິນແຮຂະຫຍາຍ ປຸກສ້າງ	BZ_3		28.4434	1.592
III	**ດິນວັດທະນະທຳ**	**CZ**		**14.02**	**0.79**
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	CZ_1		0.9026	0.05
2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	CZ_2		13.1197	0.73
IV	**ດິນ ປກສຊ-ປກຊ**	**DZ**		**34.42**	**1.93**
1	ທີ່ດິນທີ່ຕັ້ງຄ້າຍ, ສຳນັກງານ, ຫ້ອງການ (ຕຳຫຼວດ)	DZ_1		34.4160	1.93
IV	**ດິນປ່າໄມ້**	**FZ**		**362.88**	**20.32**
1	ທີ່ດິນປ່າຊິ້ມໃຊ້ທົ່ວໄປ	FZ_1		362.8800	20.32
V	**`ທີ່ດິນຄົ້ນມະນາຄົ້ນ**	**RZ**		**18.09**	**1.01**
1	ທີ່ດິນທາງປູຢາງ/ເປຕົງ	RZ_1		3.3925	0.19
2	ທີ່ດິນທາງດິນແດງ	RZ_2		11.2756	0.63
2	ທີ່ດິນແຮຂະຫຍາຍເສັ້ນທາງ	RZ_3		3.4186	0.19
Vl	**ດິນບໍລິເວນນ້ຳ**	**WZ**		**203.096**	**11.37**

1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	WZ_1		2.5694	0.14
2	ທີ່ດິນໜອງນ້ຳທຳມະຊາດ	WZ_2		45.1672	2.53
3	ທີ່ດິນອ່າງເກັບນ້ຳ	WZ_3		124.9672	7.00
3	ທີ່ດິນສະຫງວນແຄມນ້ຳ	WZ_4		30.3917	1.70
ລວມທັງໝົດ				**1,786.2148**	**100.00**

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 4 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານສີວິໄລ ເມືອງຈຳພອນ ແຂວງສະຫວັນນະເຂດ

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານສີວິໄລ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂຶ້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

1 ທີ່ດິນກະສິກຳ ເນື້ອທີ່ດິນກະສິກຳຫລຸດລົງຍ້ອນວ່າ: ບ້ານໄດ້ກຳນົດເຂດຈະຂະຫຍາຍການປຸກສ້າງ.

2 ທີ່ດິນປຸກສ້າງ ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າ: ໄດ້ມີການກຳນົດເຂດຈະຂະຫຍາຍການປຸກສ້າງເພີ່ມຂຶ້ນ ເພື່ອຮອງຮັບການຍ້າຍບ້ານໃນອະນາຄົດ.

3 ທີ່ດິນວັດທະນະທຳ ແມ່ນຄົງທີ່ບໍ່ມີການເພີ່ມຂຶ້ນ.

4 ທີ່ດິນປ່າໄມ້ ມີເນື້ອທີ່ບໍ່ເພີ່ມຂຶ້ນ.

5 ທີ່ດິນຄົມມະນາຄົມ ມີເນື້ອທີ່ບໍ່ມີການເພີ່ມຂຶ້ນຍ້ອນບໍ່ໄດ້ມີການຂະຫຍາຍທາງ

6 ທີ່ດິນບໍລິເວນນ້ຳ ມີເນື້ອທີ່ບໍ່ໄດ້ເພີ່ມຂຶ້ນ

ຕາຕະລາງທີ 8 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ

ລ/ດ	ປະເພດການນຳໃຊ້	ເນື້ອທີ່ນຳໃຊ້ ປະຈຸບັນ(ha)	ກວມສ່ວນ ຮ້ອຍ (%)	ເນື້ອທີ່ແຜນ ຈັດສັນ (ha)	ກວມສ່ວນ ຮ້ອຍ (%)	ເປີເຊັນການ ປ່ຽນແປງ(%)
1	ທີ່ດິນທີ່ດິນກະສິກຳ	1084.52	60.72	1090.21	61.03	0.31
2	ທີ່ດິນປຸກສ້າງ	43.6780	2.45	63.5061	3.56	1.11
3	ທີ່ດິນວັດທະນະທຳ	14.02	0.79	14.02	0.79	0
4	ທີ່ດິນປ່າໄມ້	419.34	23.48	362.88	20.32	-3.16
5	ທີ່ດິນຄົມມະນາຄົມ	14.75	0.83	18.09	1.01	0.18
6	ທີ່ດິນບໍລິເວນນ້ຳ	175.485	9.52	203.096	11.37	1.85
7	ທີ່ດິນປກສ-ປກຊ	34.43	1.93	34.43	1.93	0
ລວມເນື້ອທີ່ທັງຫມົດ		1786.2148	100.00	1786.2148	100	

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025

ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ລະຫວ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025

ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ

V. ທ່າແຮງໃນການພັດທະນາທີ່ດິນ

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານ ສີວິໄລ ເປັນບ້ານໜຶ່ງທີ່ມີທ່າແຮງໃນການປູກພືດອາຍຸສັ້ນ ເປັນຕົ້ນແມ່ນ ປູກເຂົ້າ ແລະ ພືດກະສິກຳທົ່ວໄປ ນອກຈາກນີ້ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ.

1) ການປູກເຂົ້າ, ໝາກໂມ ແລະ ສາລີ
2) ການລ້ຽງສັດໃຫ່ຍປະເພດງົວຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານສີວິໄລ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານ ເຄີງ ໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນກະສິກຳ
- ສືບຕໍ່ໂຄງການປັບປຸງໜອງລວມຂອງບ້ານ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜ່າງເສັ້ນທາງພາຍໃນບ້ານ.

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜນງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ ເພື່ອລົບລ້າງຄວາມທຸກຈົນຂອງທ້ອງຖິ່ນ ຕາມແນວທາງນະ�โยบายຂອງພັກ ແລະ ລັດຖະບານວາງອອກ.

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນ ບັນດາຂະແໜງ ການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງກົດລະບຽບ ໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

6.1 ການຄຸ້ມຄອງ ທີ່ດິນກະສິກຳ

ທີ່ດິນກະສິກຳຂອງບ້ານສີວິໄລ ປະກອບມີ: ດິນນາ, ດິນສວນ, ດິນປູດພືດກະສິກຳທົ່ວໄປ, ດິນສິ່ງເສີມການລ້ຽງສັດນ້ອຍ, ການຄຸ້ມຄອງດິນກະສິກຳແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ.

6.2 ການຄຸ້ມຄອງທີ່ດິນປຸກສ້າງ

ດິນປຸກສ້າງຂອງບ້ານສີວິໄລ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ ແລະ ດິນແຮຂະຫຍາຍການປຸກສ້າງ; ການຄຸ້ມຄອງປົກປັກຮັກສາແມ່ນໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໂດຍສະເພາະ ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ

ທີ່ດິນວັດທະນະທຳ ແມ່ນໄດ້ກຳນົດເປັນທີ່ດິນສັກສິດຂອງບ້ານສີວິໄລ ຕາມລະບຽບການຄວາມເຊື່ອຖືໃຫ້ຖືກຕ້ອງຕາມກົດໝາຍ, ທີ່ດິນປະຫວັດສາດ, ປົກປັກຮັກສາຄວາມອຸດົມສົມບູນຂອງພູມີປະເທດໃຫ້ຖືກຕາມ

ລະບຽບກົດໝາຍ. ບ້ານສີວິໄລປະກອບມີ: ດິນປ່າຊ້າ ແລະ ດິນປ່າມະເຫສັກ. ການຄຸ້ມຄອງປົກປັກຮັກສາແມ່ນ ມອບໃຫ້ການຈັດຕັ້ງຂອງບ້ານ ເປັນຜູ້ຄຸ້ມຄອງຕາມລະບຽບກົດໝາຍ ແລະ ຮິດຄອງປະເພນີ ຫ້າມນຳໃຊ້ທີ່ດິນ ດັ່ງກ່າວໃນຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

6.4 ການຄຸ້ມຄອງ ທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີຄື: ປ່າຊົມໃຊ້ທົ່ວໄປ. ທີ່ດິນປ່າໄມ້ແມ່ນຊັບພະຍາກອນອັນລ້ຳຄ່າ, ມີລະບົບນິເວດ ສະເພາະຂອງມັນ ຊຶ່ງປະກອບມີຊີວະນາງພັນແຫຼ່ງນ້ຳ, ສັດປ່າ ແລະ ຕົ້ນໄມ້ຫຼາຍຊະນິດທີ່ເກີດຕາມທຳມະຊາດ; ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງທ້ອງຖິ່ນ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງ ຂັ້ນເມືອງ ແລະ ຂັ້ນແຂວງ ອອກລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາ.

6.5 ການຄຸ້ມຄອງ ທີ່ດິນຄົມມະນາຄົມ

ລະບົບຕະໜ່າງເສັ້ນບ້ານສີວິໄລ ເມືອງຈຳພອນ ແຂວງສະຫວັນນະເຂດ ແມ່ນປະກອບມີ 02 ປະເພດຄື:

- **<u>ທາງປະເພດທີ 1:</u>** ເສັ້ນເລກທີ 13 ໃຕ້ ກຳນົດ 50 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 25 ແມັດ.
- **<u>ທາງປະເພດທີ 2:</u>** ເສັ້ນທາງເຊື່ອມຈາກບ້ານຫາບ້ານກຳນົດ 10 ແມັດ , ຄືອອກຈາກໃຈກາງທາງເບື້ອງ ລະ 5 ແມັດ .
- **<u>ທາງປະເພດທີ 3:</u>** ແມ່ນເສັ້ນທາງຮ່ອມ, ທາງຊອຍພາຍໃນບ້ານ ແລະ ໄປເຂດທຳການຜະລິດ, ແມ່ນໄດ້ ກຳນົດເອົາຄວາມກ້ວາງ 4 ຫາ 8 ແມັດ, ຄືອອກຈາກໃຈກາງທາງເບື້ອງລະ 2 ຫຼື 4 ແມັດ.

ທີ່ດິນປະເພດດັ່ງກ່າວມອບໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຜູ້ຄຸ້ມຄອງຕາມກົດໝາຍ.

6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ

ສຳລັບທີ່ດິນບໍລິເວນນ້ຳ ປະກອບມີ: ອ່າງເກັບນ້ຳຍອດຫ້ວຍບັກ, ນອກນັ້ນຍັງມີການສະຫງວນແຄມຫ້ວຍ ຕ່າງໆໄວ້ເບື້ອງລະ 50 ແມັດ, ຮ່ອງຫ້ວຍຕາດມີການສະຫງວນແຄມຫ້ວຍໄວ້ເບື້ອງລະ 20 ແມັດ. ເພື່ອເປັນການ ປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ຳ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ. ດິນບໍລິເວນ ນ້ຳຂອງບ້ານ ແມ່ນໄດ້ກຳນົດຕາມແຜນຈັດສັນທີ່ ໝາຍໄວ້ຢູ່ໃນແຜນທີ່ ແລະ ມອບໃຫ້ບ້ານເປັນຜູ້ຄຸ້ມຄອງອອກ ລະບຽບການ ແລະ ມາດຕາການໃນການຄຸ້ມຄອງ.

VII. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນຳໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກຳນົດໄວ້ໃນບົດແຜນຈັດສັນທີ່ ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງ ຂະແໜງ ການກະສິກຳ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນຳສະເພາະ).

VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນຳໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອ ໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ອຳນາດການປົກຄອງ ເມືອງ, ອຳນາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່

ດິນກະສິກຳ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນຳ - ນຳພາ ແລະ ຕິດຕາມກວດກາ ການຈັດຕັ້ງ ປະຕິບັດແຜນດັ່ງນີ້:

8.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕຳແໜ່ງທີ່ສຳຄັນໃນອຳນາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນຳ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07).

8.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼວນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄຳສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນຳໃຊ້ທີ່ດິນແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທຳການຜະລິດ ໃຫ້ແຕ່ລະຄອບຄົວ,ຊີ້ນຳແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້, ຟື້ນຟູປ່າ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສຳຄັນ ແລະ ຄຸນປະ�โຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ,ສັດປ່າ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກຳສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານ ປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.
- ສົ່ງເສີມການເຮັດອາຊີບກະສິກຳຄົງທີ່ ໃຫ້ປະຊາຊົນພາຍໃນບ້ານ ແນໃສ່ຈຳກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທຳລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ.

8.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ເຊັ່ນ: ການທຳລາຍຕໍ່ຊັບພະຍາກອນປ່າໄມ້, ສັດນ້ຳ, ສັດປ່າ ແລະ ແຫຼ່ງນ້ຳຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ .

- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

8.5. ລະບອບແບບແຜນວິທີເຮັດວຽກ

- ແບບແຜນວິທີເຮັດວຽກຂອງຄະນະຮັບຜິດຊອບວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນຂອງບ້ານມີດັ່ງນີ້:
- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ມີແຜນການ, ແຜນກົດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ເປົ້າໝາຍ ແລະ ຄາດໝາຍ.
- ການເຄື່ອນໄຫວວຽກງານ ບົນພື້ນຖານການປະສານສົມທົບ ແລະ ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕີລາຄາຜົນໄດ້ ຜົນເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານເປັນປະຈຳ.

8.6. ການຕິດຕາມກວດກາ

ການຕິດຕາມກວດກາຈັດຕັ້ງປະຕິບັດ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນໄດ້ມີການຈັດພິທີປະກາດມອບຮັບ. ເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈານາຄືນ ແລະ ດັດແປງ ເພື່ອໃຫ້ອົງການ ຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີ ໃນໄລຍະທຳອິດຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍ ເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ແຂວງ , ເມືອງ, ກຸ່ມບ້ານຕະຫລອດຮອດໂຄງ ການທີ່ກ່ຽວຂ້ອງ.

ເອກະສານອ້າງອີງ

1. ກົດໝາຍວ່າດ້ວຍທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍວ່າດ້ວຍທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
3. ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດ ສະພາ 2017, 2020 ແລະ 2022
4. ກົດໝາຍວ່າດ້ວຍປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
5. ດຳລັດວ່າດ້ວຍປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດວ່າດ້ວຍ ທີ່ດິນບໍລິເວນນ້ຳ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳກ່ຽວກັບສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍທີ່ 1: ໜັງສືສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ ເລກທີ **84** /ຫກສມ.ຈພ

ເມືອງຈໍາພອນ, ວັນທີ 20 ພະຈິກ 2025

ໜັງສືສະເໜີ

ຮຽນ: ທ່ານເຈົ້າເມືອງຈໍາພອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ສະເໜີທ່ານເຈົ້າເມືອງອອກຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນໍາໃຊ້ທີ່ດິນບ້ານ ສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ເມືອງຈໍາພອນ, ແຂວງສະຫວັນນະເຂດ.

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ/ນະຄອນ.
- ອີງຕາມ ແຜນກິດຈະກໍາຂອງໂຄງການຄຸ້ມຄອງຊັບພະຍາກອນແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.
- ອີງຕາມ ບົດບັນທຶກຜ່ານ(ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ແລະ ຮັງຮອງເອົາແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານຄັ້ງວັນທີ 18 ພະຈິກ 2025.

ຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ ຂໍຖືເປັນກຽດຢ່າງສູງຮຽນສະເໜີມາຍັງທ່ານເຈົ້າເມືອງ ພິຈາລະນາລົງລາຍເຊັນໃສ່ຂໍ້ຕົກລົງຮັບຮອງ ແລະ ປະກາດໃຊ້ແຜນຈັດສັນທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນໍ້າແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນໍ້າເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ເພື່ອເຮັດໃຫ້ວຽກງານດັ່ງກ່າວດໍາເນີນໄປດ້ວຍຄວາມສະດວກ ແລະ ໃຫ້ມີຜົນສໍາເລັດ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມລະບຽບການດ້ວຍ.

ຫົວໜ້າຫ້ອງການ

ຄອນສະຫວັນ ດວງມາລາ

ເອກະສານຊ້ອນທ້າຍທີ່ 2: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານສີວິໄລ

ເລກທີ 148/ນບ

ທີ່ບ້ານສີວິໄລ, ວັນທີ 17/10/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານ ສີວິໄລ ຕິດກັບບ້ານນານົກຂຽນ

ໃນຄັ້ງວັນທີ 17/10/2025 ເວລາ 09:ໂມງ.30 ນາທີ ທີ່ຫ້ອງການບ້ານສີວິໄລ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານສີວິໄລ ແລະ ອໍານາດການປົກຄອງບ້ານຂອນແຕ້ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 21 ທ່ານ, ຍິງ 04 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານສີວິໄລ, ການຈັດຕັ້ງບ້ານນານົກຂຽນ, ເຖົ້າແກ່ແນວໂຮມບ້ານສີວິໄລ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

ຊາຍແດນຕິດຈອດບ້ານສີວິໄລກັບບ້ານຂອນແຕ້ທິດຕາເວັນສ່ຽງເໜືອ ເລີ່ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອໄປເລາະປຕາມກາງນໍ້າໄປຫານາທ້າວ ໝານເລາະໄປຊຶ່ໄປໃສ່ກົກຈິກນາທ້າວ ໂລດ ຊຶ່ໄປຕາມທາງເລກທີ 13 ໃຕ້ໄປຫາກົກຈິກນາທ້າວ ເມືອງຂຶ້ນໄປໃສ່ນາທ້າວ ຫຼົ່ງ(ປະຊາຊົນບ້ານຄໍານ້ອຍ)ໄປສຸດໃສ່ຊາຍແດນ 03 ບ້ານຄື: ບ້ານຫ້ວຍຍາງ, ຂອນແຕ້ ແລະ ບ້ານສີວິໄລ.

ສະນັ້ນ ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນາຍບ້ານສີວິໄລ	ນາຍບ້ານຂອນແຕ້	ຜູ້ບັນທຶກ
ສັ້ນ ພວນວິໄລ	ແຫ້ວ ທີ່ດາສຸ	ສີພາລາ ສີລະດາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານສີວິໄລ

ເລກທີ 150/ນບ

ທີ່ບ້ານສີວິໄລ, ວັນທີ 17/10/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານ ສີວິໄລ ຕິດກັບບ້ານຂອນແຕ້

ໃນຄັ້ງວັນທີ 17/10/2025 ເວລາ 09:ໂມງ.30 ນາທີ ທີ່ຫ້ອງການບ້ານສີວິໄລ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານສີວິໄລ ແລະ ອໍານາດການປົກຄອງບ້ານຂອນແຕ້ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 21 ທ່ານ, ຍິງ 04 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນ ຮ່ວມກັບການຈັດຕັ້ງບ້ານສີວິໄລ, ການຈັດຕັ້ງບ້ານນານິກຂຽນ, ເຖົ້າແກ່ແນວໂຮມບ້ານສີວິໄລ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

ຊາຍແດນຕິດຈອດບ້ານສີວິໄລກັບບ້ານຂອນແຕ້ທິດຕາເວັນສ່ຽງເໜືອ ເລີ່ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານິກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອເລາະຕາມກາງນ້ຳໄປຫານາທ້າວ ໝານເລາະ ໄປຊຶ່ໄປໃສ່ກົກຈິກນາທ້າວ ໂລດ ຂ້າມທາງເລກທີ 13 ໃຕ້ໄປຫານາທ້າວ ຫຼົ່ງ(ປະຊາຊົນຄໍານ້ອຍ).

ສະນັ້ນ ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນາຍບ້ານສີວິໄລ	ນາຍບ້ານຂອນແຕ້	ຜູ້ບັນທຶກ
ສົນ ພອນວິໄລ	ສຸລຽງ ກໍາພານິດ	ວິພາດເງັນ ວິນຕາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານສີວິໄລ

ເລກທີ 151/ນບ

ທີ່ ບ້ານສີວິໄລ, ວັນທີ 18/10/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫว่างບ້ານ ສີວິໄລ ຕິດກັບບ້ານຫລັກ 35

ໃນຄັ້ງວັນທີ 18/10/2025 ເວລາ 13:ໂມງ.30 ນາທີ ທີ່ຫ້ອງການບ້ານສີວິໄລ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫว่างອໍານາດການປົກຄອງບ້ານສີວິໄລ ແລະ ອໍານາດການປົກຄອງບ້ານຫລັກ 35 ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫว่างບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 23 ທ່ານ, ຍິງ 05 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທางນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແจ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານສີວິໄລ, ການຈັດຕັ້ງບ້ານ ຫລັກ 35, ເຖົ້າແກ່ແນວໂຮມບ້ານສີວິໄລ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

ຊາຍແດນຕິດຈອດບ້ານສີວິໄລກັບບ້ານ ຫລັກສາມສິບຫ້າທິດໃຕ້ ເລີ່ມຈາກນາທ້າວ ເກື້ອໄປຕາມທາງຫານາທ້າວ ຕາ ຫານາທ້າວ ກ່າຍ ແລ້ວລົງໄປໃສ່ຮ່ອງຫ້ວຍຕາດ ໄປຕາມຮ່ອງຫ້ວຍຕາດໃສ່ນານາງ ແກ້ວ ອອກໄປໃສ່ທາງຮ່ອມຕໍ່ໃນດິນທ້າວ ແດງ, ນາງ ພອງ ຕິດທາງເລກທີ 13 ໃຕ້ ຂຶ້ນໄປໃສ່ແจແດນດິນດິນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວໄປຕາມທາງຮ່ອມຮອດນາທ້າວ ແອັດໄປຕາມເຂດແດນນາທ້າວ ໂທນ ແລະ ນາງ ແກ້ວຕໍ່ໃສນານາງ ນາ ,ນາງ ຫຼ້ານ, ແລະ ທ້າວ ໜິງຮອດສາມແຍກຕິດສາມບ້ານຄື: ບ້ານຫຼັກ35, ບ້ານຄໍາສະຫວາງ ແລະ ບ້ານສີວິໄລ

ສະນັ້ນ ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນາຍບ້ານສີວິໄລ	ນາຍບ້ານ ຫລັກ 35	ຜູ້ບັນທຶກ
ສັ້ນ ພວນວິໄລ	ນາຍບ້ານ ບ້ານ ຫຼັກ 35	ວິທະຍາສອນ ນະຫວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານສີວິໄລ

ເລກທີ 153/ນບ

ທີ່ ບ້ານສີວິໄລ, ວັນທີ 19/10/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານ ສີວິໄລ ຕິດກັບບ້ານຫ້ວຍຍາງ

ໃນຄັ້ງວັນທີ 19/10/2025 ເວລາ 10:ໂມງ.30 ນາທີ ທີ່ຫ້ອງການບ້ານສີວິໄລ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານສີວິໄລ ແລະ ອໍານາດການປົກຄອງບ້ານ ຍາງສູງ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 20 ທ່ານ, ຍິງ 07 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານສີວິໄລ, ການຈັດຕັ້ງບ້ານ ຍາງສູງ, ເຖົ້າແກ່ແນວໂຮມບ້ານສີວິໄລ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

ຊາຍແດນຕິດຈອດບ້ານສີວິໄລກັບບ້ານຫ້ວຍຍາງ ທິດໃຕ້ເລີ່ມຈາກນາທ້າວ ຫຼົງ(ປະຊາຊົນບ້ານຄໍານ້ອຍ) ໄປຫານານາງ ໝື່ນ, ນານາງ ຫຼວຍ, ນານາງ ແຫວນ, ນາທ້າວ ຄຸ້ນ, ນານາງ ນິກ ຂ້າມທາງໄປຫານາທ້າວ ລ້ວນ, ນາທ້າວ ຕະ, ນານາງ ແສງໄປຕາມທາງໄລ່ອ້ອຍກ້ຽວໄປຕາມໄລ່ອ້ອຍຮອດປ່າຊ້າໄປຕາມຫານານາງ ກ້ອດ, ນາທ້າວ ຕ່ະ, ນານາງ ໜຸ, ນານາງຫຼ້ານ້ອຍ, ນາງນາງ ແດງ, ນາທ້າວ ກິ, ນານາງ ແຫຼມ, ນາທ້າວ ຈັນ, ນານາງ ສຸນ, ນານາງ ແວ່ນ, ນານາງ ໃບຕອງ, ນາທ້າວ ເລ, ນານາງ ຄຸ້ນ, ນາງທ້າວ ພຽນ, ນາທ້າວ ດອນໄປຕາມທາງຮ່ວມຮອດນາທ້າວ ໂຕ້ນຕິດບ້ານຫຼັກ35, ບ້ານຫ້ວຍຍາງ, ບ້ານສີວິໄລ.

ສະນັ້ນ ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ນາຍບ້ານສີວິໄລ	ນາຍບ້ານຫ້ວຍຍາງ	ຜູ້ບັນທຶກ
ຄັນ ພອນວິໄລ	ນ້ອ: ເລີ່ມ	ວິທະວາຮັບ ວິນທະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານສີວິໄລ

ເລກທີ 18 /ນບ

ທີ່ ບ້ານສີວິໄລ, ວັນທີ 20/10/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫว่างບ້ານ ສີວິໄລ ຕິດກັບບ້ານຄໍານ້ອຍ

ໃນຄັ້ງວັນທີ 20/10/2025 ເວລາ 13:ໂມງ.30 ນາທີ ທີ່ຫ້ອງການບ້ານສີວິໄລ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫว่างອໍານາດການປົກຄອງບ້ານສີວິໄລ ແລະ ອໍານາດການປົກຄອງບ້ານ ຄໍາສະຫວາງ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫว่างບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແจ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນ ຮ່ວມກັບການຈັດຕັ້ງບ້ານສີວິໄລ, ການຈັດຕັ້ງບ້ານ ຄໍາສະຫວາງ, ເຖົ້າແກ່ແນວໂຮມບ້ານສີວິໄລ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

ຊາຍແດນຕິດຈອດບ້ານສີວິໄລກັບບ້ານ ຄໍານ້ອຍທິດຕາເວັນອອກເລີ່ມແຕ່ນາທ້າວ ຂັນໄປຕາມທາງໄປທາງ ຕາເວັນຕົກຫານາທ້າວ ເກົ້ອ

ນາຍບ້ານສີວິໄລ	ນາຍບ້ານຄໍານ້ອຍ	ຜູ້ບັນທຶກ
ສົ້ນ ພວນວິໄລ	ເພັດ ຊຸດຖະເສນ	ວິພາລະດ ໂພທິ

ເອກະສານຊ້ອນທ້າຍທີ່ 3: ກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ບົດບັນທຶກ ກອງປະຊຸມປຶກສາຫາລື
ກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ

ໃນຕອນເຊົ້າຂອງວັນພຸດ ວັນທີ 15 ຕຸລາ 2025 ເວລາ 8 ໂມງ 30 ນາທີ, ສະຖານທີ່ວັດບ້ານສີວິໄລ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ, ໂດຍການເປັນປະທານຂອງທ່ານ ຄຳຕາ ສິນນະສອນ ຮອງເລຂາຄະນະບໍລິຫານງານພັກເມືອງ ຮັກສາການເຈົ້າເມືອງ, ຂັ້ນເມືອງແຂວງມີຕາງໜ້າຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່, ຂະແໜງຊັບພະຍາກອນນ້ຳ, ຂັ້ນເມືອງມີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງວ່າການເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຊາວໜຸ່ມເມືອງ, ຫ້ອງການສະຫະພັນແມ່ຍິງເມືອງ, ຫ້ອງການຍຸຕິທຳເມືອງ, ບ້ານການການເງິນເມືອງ, ກອງບັນຊາການ ປກສ ເມືອງ, ກອງບັນຊາການ ປກຊ ເມືອງ, ການຈັດຕັ້ງບ້ານສີວິໄລ ແລະ ການຈັດຕັ້ງບ້ານຕິດແປະ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ານສີວິໄລ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 74 ຄົນ, ຍິງ 23 ຄົນ, ມີລາຍຊື່ລະອຽດຕາມໃບລົງທະບຽນ:

ຈາກນັ້ນທ່ານ ຄຳຕາສິນນະສອນ ຮອງເລຂາຄະນະບໍລິຫານງານພັກເມືອງ ຮັກສາການເຈົ້າເມືອງ ໄດ້ມີຄຳເຫັນພ້ອມທັງນຳພາດຳເນີນກອງປະຊຸມ ສະເໜີໃຫ້ແຕ່ລະພາກສ່ວນທີ່ເຂົ້າຮ່ວມກອງປະຊຸມມີຄຳເຫັນຢ່າງກົງໄປກົງມາ ຊຶ່ງກອງປະຊຸມໄດ້ເຫັນດີເປັນເອກະພາບກັນດັ່ງນີ້:

1. ເຫັນດີໃຫ້ທີມງານວິຊາການພາກສະໜາມຮ່ວມກັນເກັບກຳກ່ຽວກັບບັນດາຂໍ້ມູນທີ່ກ່ຽວພັນກ່ຽວກັບວຽກງານດັ່ງກ່າວ ເປັນຕົ້ນແມ່ນແຜນພັດທະນາເສດທະກິດ-ສັງຄົມຂອງບ້ານ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ.
2. ເຫັນດີໃຫ້ທີມງານວິຊາການພາກສະໜາມແນະນຳແຕ່ລະຂັ້ນຕອນການຈັດຕັ້ງປະຕິບັດວຽກງານຢູ່ພາກສະໜາມເຊັ່ນ: ຂັ້ນຕອນການສຳຫຼວດ, ຕົກແຕ່ງແຕ້ມແຜນທີ່, ຂັ້ນຕອນສັງລວມຂໍ້ມູນ ແລະ ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ຂັ້ນຕອນການສ້າງປື້ມແຜນຈັດສັນ ຮ່ວມປະກອບຄຳເຫັນແຕ່ລະຂັ້ນຕອນ.
3. ເຫັນດີໃຫ້ທີມງານວິຊາການພາກສະໜາມສ້າງບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານລວມ ພ້ອມທັງສະເໜີການຕົກລົງ ແລະ ເຊັນເອົາຮັບຮອງເອົາບົດບັນທຶກຂອບເຂດແດນບ້ານ.
4. ເຫັນດີທີມງານວິຊາການພາກສະໜາມສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ເຮັດບົດບັນທຶກເພື່ອສະເໜີການຮັບຮອງເອົາແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ.

5. ສັງລວມຂໍ້ມູນທັງໝົດຂອງບ້ານເປັນຕົ້ນຂໍ້ມູນທາງດ້ານເອກະສານ ແລະ ຂໍ້ມູນການແຕ້ມ ເຂົ້າໃນຖານຂໍ້ມູນ ຂອງບ້ານ (Master Planning).

ກອງປະຊຸມໄດ້ດຳເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນ ດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ | **ຜູ້ບັນທຶກ**

ລັດຕະນາ ໄຊຍະບັນຊາ
Lathtana XAIYABANXA

ເອກະສານຊ້ອນທ້າຍທີ່ 4: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານສີວິໄລຕິດກັບບ້ານຫ້ວຍຍາງ, ບ້ານຂອນແຕ້, ບ້ານນານົກຂຽນ, ບ້ານຄຳນ້ອຍ, ບ້ານຫຼັກ35

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ

ບ້ານສີວິໄລ ທີ່ ບ້ານສີວິໄລ, ວັນທີ 23 ຕຸລາ 2025

ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານສີວິໄລ ຕິດກັບບ້ານຫ້ວຍຍາງ, ບ້ານຂອນແຕ້, ບ້ານນານົກຂຽນ, ບ້ານຄຳນ້ອຍ, ບ້ານຫຼັກ35

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າເມືອງຈໍາພອນ ສະບັບເລກທີ 613/ຈມ, ລົງວັນທີ 14 ຕຸລາ 2025, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍຂອງໂຄງການ(ຮ່ວມກັບໂຄງການ IWRM ປີ 2025)
- ອີງຕາມ ກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດຮ່ວມກັບບ້ານອ້ອມຂ້າງ ເຊິ່ງໄດ້ຈັດຂຶ້ນຄັງວັນທີ 14 ຕຸລາ 2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ແຕ່ລະບ້ານມີຂອບເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັນກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະທີມງານວິຊາການຈາກພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈໍາພອນ, ການຈັດຕັ້ງທີ່ກ່ຽວຂ້ອງຂັ້ນເມືອງ ໃນນາມວິຊາການໄດ້ສົມທົບກັບອົງການຈັດຕັ້ງບ້ານ, ພໍ່ແມ່ປະຊາຊົນ ແລະ ບ້ານໃກ້ຄຽງທີ່ມີເຂດແດນຕິດຈອດກັນ ໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານດັ່ງນີ້:

❖ ຄ່າພິກັດບ້ານຂອນແຕ້-ນານົກຂຽນ-ຄຳນ້ອຍ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	505977	1830285		ກຳນົດຈຸດເລີ້ມຈາກນາທ້າວ ຫຼົ່ງ(ປະຊາຊົນບ້ານຄຳນ້ອຍ) ໄປ ຈົນຮອດນາທ້າວ ໂຕ້ນຕິດບ້ານຫຼັກ35, ບ້ານຫ້ວຍຍາງ, ບ້ານ ສີວິໄລ.
2	502530	1829736		ກຳນົດຈຸດເລີ້ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອ

				ເລາະຕາມກາງນ້ຳໄປຫານາທ້າວ ໝານເລາະໄປຊື່ໄປໃສ່ກົກຈິກນາທ້າວ ໂລດ ຂ້າມທາງເລກທີ 13 ໃຕ້ໄປຫານາທ້າວ ຫຼົ້ງ (ປະຊາຊົນຄຳນ້ອຍ).
ລວມໄລຍະ			4.277	

❖ ຄ່າພິກັດບ້ານຂອນແຕ້-ບ້ານນານົກຂຽນ ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	502530	1829736		ເລີ້ມແຕ່ຊາຍແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້ ຂຶ້ນທາງທິດເໜືອເລາະຕາມກາງນ້ຳໄປຫານາທ້າວໝານ ເລາະໄປຊື່ໄປໃສ່ກົກຈິກນາທ້າວ ໂລດ ຂ້າມທາງເລກທີ 13 ໃຕ້ໄປຫານາທ້າວ ຫຼົ້ງ(ປະຊາຊົນຄຳນ້ອຍ).
2	504911	1826505		ເລີ້ມແຕ່ທາງແດງລະຫວ່າງແດນນາທ້າວ ຕາ ກັບ ນາທ້າວ ຂັນ ຂຶ້ນໃສ່ຮ່ອງຫ້ວຍຕາດເລາະໄປຕາມສາຍຮ່ອງຫ້ວຍຕາດຕົກໃສ່ອ່າງຍອດຫ້ວຍບັກຊື່ໄປໃສ່ກາງຍອດຫ້ວຍບັກເປັນຈຸດຊາຍແດນ ຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້.
ລວມໄລຍະ			4.285	

❖ ຄ່າພິກັດບ້ານບ້ານນານົກຂຽນ-ບ້ານຄຳນ້ອຍ, ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	504911	1826505		ເລີ້ມແຕ່ທາງແດງລະຫວ່າງແດນນາທ້າວ ຕາ ກັບ ນາທ້າວ ຂັນ ຂຶ້ນໃສ່ຮ່ອງຫ້ວຍຕາດເລາະໄປຕາມສາຍຮ່ອງຫ້ວຍຕາດຕົກໃສ່ອ່າງຍອດຫ້ວຍບັກຊື່ໄປໃສ່ກາງຍອດຫ້ວຍບັກເປັນຈຸດຊາຍ ແດນຕິດຈອດລະຫວ່າງ 03 ບ້ານຄື: ບ້ານສີວິໄລ, ບ້ານນານົກຂຽນ ແລະ ຂອນແຕ້.
2	505977	1830285		ກຳນົດຈຸດເລີ້ມແຕ່ນາທ້າວ ຂັນໄປຕາມທາງໄປທາງຕາເວັນຕົກ ຫານາທ້າວ ເກົ້ອ
ລວມໄລຍະ			438	

❖ ຄ່າພິກັດບ້ານຄຳນ້ອຍ-ບ້ານຫຼັກ35ເມືອງຈໍາພອນ ແຂວງ ສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	505977	1830285		ກຳນົດຈຸດເລີ້ມແຕ່ນາທ້າວ ຂັນໄປຕາມທາງໄປທາງຕາເວັນຕົກ ຫານາທ້າວ ເກື້ອ
2	504790	1826473		ເລີ້ມຈາກນາທ້າວ ເກື້ອໄປຕາມທາງຫານາທ້າວ ຕາ ຫານາທ້າວ ກ່າຍ ແລ້ວລົງໄປໃສ່ຮ່ອງຫ້ວຍຕາດ ໄປຕາມຮ່ອງຫ້ວຍຕາດໃສ່ນານາງ ແກ້ວ ອອກໄປໃສ່ທາງຮ່ອມຕ່ຳໃນດົນທ້າວ ແດງ, ນາງ ພອງຕິດທາງເລກທີ 13 ໃຕ້ຂຶ້ນໄປໃສ່ແຈແດນດົນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວໄປຕາມທາງຮ່ອມໄປຫານານາງ ນ້ອຍ, ນານາງ ລຳພອນ, ນາທ້າວ ພູຂົງ, ນານາງ ກ່ອຍ, ນາທ້າວ ພູຂົງ, ນາງ ນາງ ພ່ວນ , ນາທ້າວ ແສງເດືອນ, ນານາງ ເພັດ, ນາທ້າວ ອອມ, ນາທ້າວ ແສງດາວ, ນາທ້າວ ພົງ, ນາທ້າວ ແອັດໄປຕາມເຂດແດນນາທ້າວ ໂທນ, ນາງ ແກ້ວຕໍ່ໃສນານາງ ນາ, ນາງ ຫຼ້າ, ທ້າວ ໝົງ, ນາທ້າວ ຮັກ, ນາທ້າວ ໂຕ້ນຮອດສາມແຍກຕິດສາມບ້ານຄື: ບ້ານຫຼັກ35, ບ້ານຫ້ວຍຍາງ ແລະ ບ້ານສີວິໄລ
ລວມໄລຍະ			7.388	

❖ ຄ່າພິກັດບ້ານຫຼັກ35-ບ້ານຫ້ວຍຍາງ ເມືອງຈໍາພອນ ແຂວງ ສະຫວັນນະເຂດເລີ້ມຈາກນາທ້າວ ເກື້ອໄປຕາມທາງຫານາທ້າວ ຕາ ຫານາທ້າວ ກ່າຍ ແລ້ວລົງໄປໃສ່ຮ່ອງຫ້ວຍຕາດ ໄປຕາມຮ່ອງຫ້ວຍຕາດໃສ່ນານາງ ແກ້ວ ອອກໄປໃສ່ທາງຮ່ອມຕ່ຳໃນດົນທ້າວ ແດງ, ນາງ ພອງ ຕິດທາງເລກທີ 13 ໃຕ້ ຂຶ້ນໄປໃສ່ແຈແດນດົນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລ້ວໄປຕາມທາງຮ່ອມໄປຫານານາງ ນ້ອຍ, ນານາງ ລຳພອນ, ນາທ້າວ ພູຂົງ, ນານາງ ກ່ອຍ, ນາທ້າວ ພູຂົງ, ນາງ ນາງ ພ່ວນ , ນາທ້າວ ແສງເດືອນ, ນານາງ ເພັດ, ນາທ້າວ ອອມ, ນາທ້າວ ແສງດາວ, ນາທ້າວ ພົງ, ນາທ້າວ ແອັດໄປຕາມເຂດແດນນາທ້າວ ໂທນ, ນາງ ແກ້ວຕໍ່ໃສນານາງ ນາ, ນາງ ຫຼ້າ, ທ້າວ ໝົງ, ນາທ້າວ ຮັກ, ນາທ້າວ ໂຕ້ນຮອດສາມແຍກຕິດສາມບ້ານຄື: ບ້ານຫຼັກ35, ບ້ານຫ້ວຍຍາງ ແລະ ບ້ານສີວິໄລ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	504790	1826473		
2	505977	1830285		ກຳນົດຈຸດເລີ້ມຈາກນາທ້າວ ຫຼົງ(ປະຊາຊົນບ້ານຄຳນ້ອຍ) ໄປຫານານາງ ໜື່ນ, ນານາງ ຫຼອຍ, ນານາງ ແຫວນ, ນາທ້າວ ຄຸ້ນ, ນານາງ ນົກ ຂ້າມທາງໄປຫານາທ້າວ ລ້ວນ, ນາທ້າວ ຕະ, ນານາງ ແສງໄປຕາມທາງໄລ່ອ້ອຍກ້ຽວໄປຕາມໄລ່ອ້ອຍຮອດປ່າຊ້ຳໄປຕາມຫານານາງ ກ້ອດ, ນາທ້າວ ຕ່ະ, ນານາງ ໜູ, ນານາງຫຼ້າ ນ້ອຍ, ນາງນາງ ແດງ, ນາທ້າວ ກົ, ນານາງ ແຫຼມ, ນາທ້າວ ຈັນ, ນານາງ ສູນ, ນານາງ ແວ່ນ, ນານາງ ໃບຕອງ, ນາທ້າວ ເລ, ນານາງ ຄຸ້ນ, ນາງ, ທ້າວ

				ພຽນ, ນາທ້າວ ດອນໄປຕາມທາງຮ່ອມຮອດນາທ້າວ ໂຕ້ນ ຕິດບ້ານຫຼັກ35, ບ້ານຫ້ວຍຍາງ, ບ້ານສີວິໄລ.
ລວມໄລຍະ			7.122	

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ ປີ 2025

ກອງປະຊຸມໄດ້ດຳເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນ ດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ

ລັດຕະນາ ໄຊຍະບັນຊາ
Lathtana XAIYABANXA

ຜູ້ບັນທຶກ

ເອກະສານຊ້ອນທ້າຍທີ່ 5: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ບົດບັນທຶກ

ກອງປະຊຸມຜ່ານ (ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານເປົ້າໝາຍ ເມືອງຈໍພອນ

ໃນຕອນເຊົ້າຂອງວັນຄານ ວັນທີ 18 ພະຈິກ 2025 ເວລາ 8 ໂມງ 30 ນາທີ, ສະຖານທີ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ກອງປະຊຸມຜ່ານ (ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານ ແລະ ນຳສະເໜີທ່ານເຈົ້າເມືອງ ພິຈາລະນາ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ. ໂດຍການເປັນປະທານຂອງທ່ານ ລັດຕະນາ ໄຊຍະບັນ ຊາ ຄະນະປະຈຳພັກເມືອງ ຮອງປະທານຄະນະກຳມະການປົກຄອງເມືອງ, ຂັ້ນເມືອງແຂວງມີຕາງໜ້າຈາກຂະແໜງ ຄຸ້ມຄອງ ແລະ ພັດທະນາທີ່, ຂະແໜງຊັບພະຍາກອນນ້ຳ, ຂັ້ນເມືອງມີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງວ່າການເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຊາວໜຸ່ມເມືອງ, ຫ້ອງການສະຫະພັນແມ່ຍິງເມືອງ, ຫ້ອງການຍຸຕິທຳເມືອງ, ບ້ານການການເງິນເມືອງ, ກອງບັນຊາການປກສເມືອງ, ກອງບັນຊາການປກຊເມືອງ, ການຈັດຕັ້ງບ້ານສີວິໄລ ແລະ ການຈັດຕັ້ງບ້ານຕິດແປະ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ນສີວິໄລ ເຊິ່ງມີ ຜູ້ເຂົ້າຮ່ວມທັງໝົດ 59 ຄົນ, ຍິງ 07 ຄົນ, ມີລາຍຊື່ລະອຽດຕາມໃບລົງທະບຽນ:

I. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອ

1. ເພື່ອສະເໜີຜ່ານແຜນຈັດສັນການກຳນົດເຂດ, ກຳນົດປະເພດການນຳໃຊ້ທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ.
2. ເພື່ອໃຫ້ບັນດາທ່ານຕ່າງໜ້າຈາກພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຕ່າງໜ້າຈາກທີມງານໂຄງການ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ພາກສ່ວນຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ, ເລຂາກຸ່ມບ້ານ, ການຈັດຕັ້ງບ້ານທັງ 03 ບ້ານ ແລະ ການຈັດຕັ້ງບ້ານຕິດແປະ ໃຫ້ຊ່ວຍປະກອບຄຳເຫັນ, ຊ່ວຍປັບປຸງແຜນ ການກຳນົດເຂດ, ການກຳນົດປະເພດທີ່ດິນຂອງບ້ານ ແລະ ບົດແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ເພື່ອ ເຮັດໃຫ້ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ມີຄວາມເໝາະສົມຕາມທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງແນ່ໃສ່ປົກປັກຮັກສາສິ່ງແວດລ້ອມທາງດ້ານທຳມະຊາດໃຫ້ມີຄວາມຍືນຍົງ ແລະ ສອດ ຄ່ອງກັບລະບຽບກົດໝາຍ.
3. ເພື່ອໃຫ້ບັນດາຂະແໜງການຕ່າງໆມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ ແລະ ເຫັນດີເປັນເອກະພາບຕໍ່ ແຜນຈັດສັນ.

II. ເນື້ອໃນການດຳເນີນກອງປະຊຸມ:

ຜ່ານການສະເໜີລາຍງານຂອງການຈັດສັນທີ່ດິນຂອງບ້ານ 03 ບ້ານ ຈາກຄະນະທີມງານວິຊາການ ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ເອົາໃຈໃສ່ຕິດຕາມ ແລະ ປະກອບຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງຢ່າງກົງໄປກົງມາ ແລະ ມີຄວາມຮັບຜິດຊອບສູງ ເພື່ອໃຫ້ແຜນຈັດສັນມີຄວາມສົມບູນ, ເໝາະສົມ ເຊິ່ງໂດຍລວມແລ້ວເຫັນດີເປັນເອກະພາບກັນດັ່ງນີ້:

1. ເຫັນດີເປັນເອກະພາບກັນຮັບຮອງເອົາບົດບັນທຶກເຂດຄຸ້ມຄອງຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ລົງວັນທີ 18 ພະຈິກ 2025.
2. ເຫັນດີເປັນເອກະພາບກ່ຽວກັບແຜນຈັດສັນທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າທີ່ທີມງານວິຊາການສະເໜີຜ່ານ.

ກອງປະຊຸມໄດ້ດຳເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ	ຜູ້ບັນທຶກ
ລັດຕະນາ ໄຊຍະບັນຊາ Lathtana XAIYABANXA	ວິທະວົງ ສົງຕາວົງ

ເອກະສານຊ້ອນທ້າຍທີ່ 6: ເອກະສານສຳພາດຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານໂດຍການເຊັນຮັບຮອງຈາກນາຍບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແບບພິມເກັບກຳຂໍ້ມູນ
ເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານ

1. ປະຫວັດຄວາມເປັນມາ

* ໃຫ້ເກັບກຳຂໍ້ມູນປະຫວັດຄວາມເປັນມາຂອງບ້ານເຊັ່ນ: (ບ້ານມີຊື່ເດີມວ່າແນວໃດ? ສ້າງຕັ້ງຂຶ້ນປີໃດ? ຍົກຍ້າຍມາ ແຕ່ໃສ? ໃຜເປັນຜູ້ນຳພາສ້າງຕັ້ງຂຶ້ນ?

- ❖ ປະກອບມີ..15..ໜ່ວຍ;.....218..... ຫຼັງຄາເຮືອນ; .....343..... ຄອບຄົວ
- ❖ ພົນລະເມືອງທັງໝົດ .....1683..... ຄົນ, ຍິງ .....860.....ຄົນ;
- ❖ ປະກອບມີ. .....02..... ຊົນເຜົ່າ;

  1.ຊົນເຜົ່າ. ບຸຣ. ມີ ....86... ຄອບຄົວ; ....54....ຫຼັງຄາເຮືອນ,ຍິງ...228.....ຄົນ; ສາສະໜາ..ພຸດ...

  2. ຊົນເຜົ່າ.ລາວ ມີ...257....ຄອບຄົວ; .ຫຼັງຄາເຮືອນ,..164..; ຍິງ...632..ຄົນ; ສາສະໜາ...ພຸດ.....

  3.ຊົນເຜົ່າ..... ມີ ..... ຄອບຄົວ; .....ຫຼັງຄາເຮືອນ,ຍິງ.....ຄົນ; ສາສະໜາ..ພຸດ.....

  4. ຊົນເຜົ່າ..... ມີ.....ຄອບຄົວ; .ຫຼັງຄາເຮືອນ,.....; ຍິງ.....ຄົນ; ສາສະໜາ...ພຸດ...
- ❖ ໄດ້ຮັບນາມມະຍົດເປັນບ້ານໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ
  - ການເກີດ.....15..... ..ຄົນ/ປີ;
  - ການຕາຍ.....13..... .....ຄົນ/ປີ.
  - ການຍົກຍ້າຍເຂົ້າ.....05..... ..ຄົນ/ປີ,
  - ການຍ້າຍອອກ.....02..... ຄົນ/ປີ.
- ❖ ໂຄງປະກອບ ການຈັດຕັ້ງຂອງບ້ານ.
  - ນາຍບ້ານຄົນ;.....01.....ຄົນ; ຮອງນາຍບ້ານ 04 ຄົນ, ຍິງ.....0.....ຄົນ.
  - ສະມາຊິກພັກ....12.....ຄົນ; ຍິງ....04.....ຄົນ;
  - ຊາວໜຸ່ມ.....05.....ຄົນ; ຍິງ ....04.....ຄົນ
  - ກຳມະບານ.....ຄົນ ຍິງ.....ຄົນ:
  - ສະຫະພັນແມ່ຍິງ.....05.....ຄົນ

2. ທີ່ຕັ້ງ ແລະ ພູມສັນຂອງບ້ານ.

* ທີ່ຕັ້ງ: ເປັນບ້ານອັນດັບທີ.....75.....ຂອງເມືອງ, (ຖ້າບໍ່ມີໃຫ້ເອົານຳຫ້ອງວ່າການປົກຄອງເມືອງ). ຕັ້ງຢູ່ທິດໃດ ຂອງເມືອງ.....ທິດຕາເວັນຕົກ.....ຖ້າບໍ່ມີເບິ່ງໃນແຜນທີ່)

* ນອນໃນກຸ່ມບ້ານ.....ທີ 07.....ກຸ່ມທີ.....
ມີເຂດຄຸ້ມຄອງຕິດກັບ;

- ທິດເໜືອ (N) ຕິດກັບ ບ້ານຫ້ວຍາງ-ບ້ານຂອນແຕ້ ເມືອງຈຳພອນ

- ທິດໃຕ້ (S) ຕິດກັບ ບ້ານຫຼັກ35-ບ້ານຄຳນ້ອຍເມືອງຈຳພອນ
- ທິດຕາເວັນອອກ (E) ຕິດກັບ ບ້ານນານິກຂຽນ,ບ້ານຄຳນ້ອຍ ເມືອງຈຳພອນ
- ທິດຕາເວັນຕົກ (W) ຕິດກັບ ບ້ານຫຼັກ35-ບ້ານຫ້ວຍຍາງ ເມືອງຈຳພອນ

* ເນື້ອທີ່ທັງໝົດຂອງ ບ້ານ 1.786.2148 ເຮັກຕາ (ເອົາເນື້ອທີ່ປະຈຸບັນ ຖ້າມີ)

✓ ມີສາຍນ້ຳນ້ຳເຊ: ມີ ☐; ບໍ່ມີ ☐ ; ມີ.....ສາຍຄື

1.....; 4.....

2.....; 5.....

3.....; 6.....

✓ ມີຫ້ວຍ: ມີ ☐ ບໍ່ມີ ☐ ; ມີ.....ສາຍຄື:

1.....; 4.....

2.....; 5.....

3.....; 6.....

✓ ມີເສັ້ນທາງຄົມມະນາຄົມຈັກເສັ້ນ....01.....ເສັ້ນ; ທາງຮ່ອມ.....05..... ເສັ້ນ

✓ ມີຊົນລະປະທານບໍ່? ມີ ☐: ບໍ່ມີ ☐. ຈັກແຫ່ງ.... .....0.....ແຫ່ງ

✓ ໜອງລວມບ້ານ ມີ ☐: ບໍ່ມີ ☐. ຈັກໜອງ.... .....03.....ແຫ່ງ

3. ສະນະພູມສດຖະກິດຂອງບ້ານ

- ລາຍຮັບຕົ້ນຕໍມີຫຍັງແດ່? (1).....ປູກເຂົ້າ.....(2).....(3).....
- ລາຍຮັບສຳຮອງມີຫຍັງແດ່?: (1).....ຄ້າຂາຍ.....(2).....(3).....
- ສະເລ່ຍປີ.....20 ລ້ານ/ຄອບຄົວ.....

❖ ແຮງງານຕົ້ນຕໍມີຈັກຄົນ: 1159..ຄົນ;ຍິງ.580.ຄົນ, ແຮງງານສຳຮອງມີ.135..ຈັກຄົນ: ຍິງ..66.ຄົນ
ຈຳນວນຄົວເຮືອນທີ່ລຸດພົ້ນອອກຈາກຄວາມທຸກຍາກມີ343 ຄອບຄົວ, ຍັງບໍ່ທັນພົ້ນມີ ...0....ຄອບຄົວ.

4. ຂໍ້ມູນດ້ານພື້ນຖານໂຄງລ່າງຂອງບ້ານ

✓ ມີທາງເຂົ້າບ້ານບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ເສັ້ນ

✓ ໄຟຟ້າເຂົ້າເຖິງບ້ານບໍ ມີ ☐ : ບໍ່ມີ ☐.

✓ ມີສຸກສາລາຫຼືໂຮງໝໍຕັ້ງຢູ່ເຂດບ້ານ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີຖີ່ງຢາປະຈຳບ້ານບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີໂຮງຮຽນປະຖົມ/ມັດທະຍົມຕົ້ນ/ປາຍ?ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ.. .....ແຫ່ງ

✓ ມີຕະຫຼາດຊື້ຂາຍ ບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີຫ້ອງການບ້ານ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ລະບົບນ້ຳສະອາດ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີຄົວລົດ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີບ່ອນບຳບັດຂີ້ເຫຍື້ອ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີທ່າເຮືອ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ອື່ນໆ.....

5. ຂໍ້ມູນດ້ານ ຄອບຄົວພາຍໃນບ້ານ

ລ/ດ	ລາຍການ	ຈຳນວນ	ຫົວໜ່ວຍ	ໝາຍເຫດ
01	ຄອບຄົວຄ້າຂາຍ		ຄ/ຄ	
02	ຄອບຄົວເຮັດກະສິກຳ	217	ຄ/ຄ	

03	ຄອບຄົວເຮັດອຸດສະຫະກຳ	01	ຄ/ຄ	
04	ຄອບຄົວເຮັດຫັດຖະກຳ	01	ຄ/ຄ	
05	ຄອບຄົວພະນັກງານລັດ	23	ຄ/ຄ	
06	ຄອບຄົວອື່ນໆ		ຄ/ຄ	

6. ອາຊີບຕົ້ນຕໍ່ພາຍໃນບ້ານ

ລ/ດ	ລາຍການ	ຈຳນວນຄົນ	ຍິງ/ຄົນ	ໝາຍເຫດ
01	ເຮັດນາ	1159	580	
02	ໄຮ່. (ໄຮ່ເຂີ້.ສວນໝາກໄມ້	0		
03	ພະນັກງານລັດ	23	02	
04	ພະນັກງານວິສະຫະກິດ	0		
05	ພະນັກງານລັດວິສະຫະກິດ	0		
06	ກຳມະກອນທົ່ວໄປ	35	12	
07	ຄ້າຂາຍ			
08	ນັກຮຽນ, ນັກສຶກສາ	146	78	
09	ອາຊີບອື່ນໆ			
ລວມທັງໝົດ				

7. ເກັບກຳຂໍ້ມູນການນຳໃຊ້ທີ່ດິນແຕ່ປະເພດພາຍໃນບ້ານ

7.1. ດິນລັດ, ດິນຊຸມຊົນ ແລະ ດິນລວມບ້ານ

- ❖ ດິນ ໂຮງຮຽນ.....02..... ຕອນ; ຊັ້ນໃດ .....ອະນຸບານຫາປະຖົມ.....
  - ○ ໂຮງຮຽນ....ປະຖົມສົມບູນ.....; ເນື້ອທີ່ ....., ມີເອກະສານຢັ້ງຢືນ ☐
  - ○ ໂຮງຮຽນ....ໂຮງຮຽນປະຖົມມູນ... .....; ເນື້ອທີ່.....ມີເອກະສານຢັ້ງຢືນ ☐

* ດິນ ຫ້ອງການບ້ານ. .....01.....ຕອນ; ເນື້ອທີ່ ....500..... ມີເອກະສານຢັ້ງຢືນ ☐

* ດິນ ປ່າຊ້າ.....01..... .ຕອນ; ເນື້ອທີ່ .....0.1197.....ມີເອກະສານຢັ້ງຢືນ ☐

* ດິນ ປ່າສັກສິດ/ຕີດິນມະເຫສັກ...01....ຕອນ; ເນື້ອທີ່ ...13.0000..... ມີເອກະສານຢັ້ງຢືນ ☐

* ດິນ ວັດ.....01.....ຕອນ; ເນື້ອທີ່.....0.9026 .....ມີເອກະສານຢັ້ງຢືນ ☐

* ດິນ ລວມບ້ານ (ດິນເປົ່າຫວ່າງ)..... ຕອນ; ເນື້ອທີ່.....; ມີເອກະສານຢັ້ງຢືນ ☐

* ດິນ ລວມບ້ານ (ທີ່ມອບໃຫ້ບຸກຄົນນຳໃຊ້).....ຕອນ; ເນື້ອທີ່.....ມີເອກະສານຢັ້ງຢືນ ☐

* ດິນຊຸມຊົນ.....ຕອນ;ເນື້ອທີລວມ.....ມີເອກະສານຢັ້ງຢືນ ☐

ຕອນທີ1: ນຳໃຊ້ເຮັດຫຍັງ.....ເນື້ອທີ.....ມີເອກະສານຢັ້ງຢືນ ☐

ຕອນທີ2: ນຳໃຊ້ເຮັດຫຍັງ.....ເນື້ອທີ.....ມີເອກະສານຢັ້ງຢືນ ☐

7.2. ດິນເຊົ້າ - ສຳປະທານ (ດິນລັດ ແລະ ດິນລວມບ້ານ).

* ດິນ ເຊົ່າພາຍໃນບ້ານ..... ຕອນ; ໃຜເປັນຜູ້ເຊົ່າ.....

ຕອນທີ 1: ເນື້ອທີ່..... ເຮັກຕາ; ເຊົ່າຈັກປີ .....ປີ; ແຕ່ປີ.....ຫາ.....(ຖ້າມີ)

ເຊົ່າເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

ຕອນທີ2: ເນື້ອທີ່..... ເຮັກຕາ, ເຊົ່າຈັກ.....ປີ; ແຕ່ປີ.....ຫາ.....(ຖ້າມີ)

ເຊົ່າເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

* ດິນ ສໍາປະທານພາຍໃນບ້ານ..... ຕອນ; ໃຜເປັນຜູ້ສໍາປະທານ.....

ຕອນທີ1: ເນື້ອທີ່.....ເຮັກຕາ, ຈັກປີ.....ປີ. ແຕ່ປີ.....ຫາ.....(ຖ້າມີ)

ເຊົ້ຳເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

ຕອນທີ1: ເນື້ອທີ່.....ເຮັກຕາ; ຈັກປີ.....ປີ; ແຕ່ປີ.....ຫາ.....(ຖ້າມີ)

ເຊົ້ຳເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

7.3. ການນໍາໃຊ້ດິນແຕ່ລະປະເພດພາຍໃນບ້ານ

I. ດິນກະສິກໍາ:

1. ທີ່ດິນນາ.....285.....ຕອນ; ເນື້ອທີ່.....927.5034..... ເຮັກຕາ.
2. ດິນຄັ້ງລ້ຽງສັດ..... ຕອນ; ເນື້ອທີ່..... ເຮັກຕາ.
3. ດິນໄຮ່.....ຕອນ ; ເນື້ອທີ່..... ເຮັກຕາ.
4. ດິນສວນ..... .....ຕອນ; ເນື້ອທີ່..... ເຮັກຕາ.
5. ດິນກະສິກໍາທົ່ວໄປ.....ຕອນ; ເນື້ອທີ່.....157.0157.....ເຮັກຕາ.
6. ດິນປູກໄມ້.....ຕອນ; ເນື້ອທີ່..... ເຮັກຕາ.
7. ດິນຊົນລະປະທານ.....ຕອນ; ເນື້ອທີ່..... ເຮັກຕາ.
8. ດິນເຂດສະຫງວນພັນພືດ..... .....ຕອນ; ເນື້ອທີ່..... ເຮັກຕາ.
9. ອື່ນໆ

II. ດິນປຸກສ້າງ:

1. ດິນປຸກສ້າງບຸກຄົນ.....213.....ຕອນ; ເນື້ອທີ່.....41.9559.....ເຮັກຕາ.
2. ດິນປຸກສ້າງຂອງລັດ.....3..... ຕອນ; ເນື້ອທີ່.....1.7220..... ເຮັກຕາ.
3. ດິນລວມບ້ານ..... ຕອນ; ເນື້ອທີ່..... ເຮັກຕາ.
4. ດິນເປົ່າຫວ່າງ.....ຕອນ; ເນື້ອທີ່..... ເຮັກຕາ.
5. ດິນຈັບຈອງ..... ຕອນ; ເນື້ອທີ່..... ເຮັກຕາ.

III. ດິນວັດທະນະທໍາ

1. ດິນປ່າສັກສິດ (ປ່າຊ້ຳ).....01..... ຕອນ; ເນື້ອທີ່..... 0.1197..... ເຮັກຕາ.
2. ດິນວັດ.....01.....ຕອນ; ເນື້ອທີ່..... 0.9026..... ເຮັກຕາ.
3. ດິນສະຖານທີ່ທ່ອງທ່ຽວທາງດ້ານທໍາມະຊາດ, ວັດທະນະທໍາປະຫວັດສາດ.....ຕອນ. ເນື້ອ.....ເຮັກຕາ

IV. ດິນປ້ອງກັນຊາດ

1. ດິນຕັ້ງຄ້າຍສໍານັກງານອົງການ, ກົມກອງບ່ອນພັກເຊົ່ຳ, ໂຮງຮຽນ,ສະໜາມບິນ, ໂຮງໝໍ..... .ຕອນ, ເນື້ອທີ່..... ເຮັກຕາ.
2. ດິນທໍາການຜະລິດ.....ຕອນ; ເນື້ອທີ່..... ...ເຮັກຕາ.
1. ດິນສະໜາມ ຝຶກຊອບທາງຍຸດທະສາດ.....ຕອນ; ເນື້ອທີ່. .....ເຮັກຕາ.
4. ດິນທໍາການຜະລິດ.....ຕອນ; ເນື້ອທີ່..... .....ເຮັກຕາ.

V. ປ້ອງກັນຄວາມສະຫງົບ

ດິນຕັ້ງຄ້າຍສໍານັກງານອົງການ, ກົມກອງບ່ອນພັກເຊົ່ຳ, ໂຮງຮຽນ, ສະໜາມບິນ, ສາງ, ໂຮງໝໍ.....ຕອນ ເນື້ອທີ່ທີ..... .ເຮັກຕາ

2. ດິນທໍາການຜະລິດ..... ..... ຕອນ; ເນື້ອທີ່..... ເຮັກຕາ.

3. ດິນສະໜາມຝຶກຊອບທາງຍຸດທະສາດ..... ຕອນ; ເນື້ອທີ່..... ເຮັກຕາ.

4. ດິນທຳການຜະລິດ..... ຕອນ; ເນື້ອທີ່..... ເຮັກຕາ.

VI. ດິນປ່າໄມ້

1. ດິນປ່າຜະລິດແຫ່ງຊາດ, ອົງຄະເພາ

2. ດິນປ່າຜະລິດຂອງແຂວງ..... ..... ຕອນ; ເນື້ອທີ່.....ເຮັກຕາ.

3. ດິນປ່າຜະລິດຂອງເມືອງ.. .....ຕອນ; ເນື້ອທີ່..... .....ເຮັກຕາ.

4. ດິນປ່າຜະລິດບ້ານ..... ຕອນ; ເນື້ອທີ່..... ..ເຮັກຕາ.

5. ດິນປ່າສະຫງວນແຫ່ງຊາດ..... ຕອນ; ເນື້ອທີ່..... ເຮັກຕາ.

6. ດິນປ່າສະຫງວນ ຂອງແຂວງ. .....ຕອນ; ເນື້ອທີ່..... ເຮັກຕາ.

7. ດິນປ່າສະຫງວນຂອງເມືອງ..... ຕອນ; ເນື້ອທີ່..... ເຮັກຕາ.

8. ດິນປ່າສະຫງວນບ້ານ..... ຕອນ; ເນື້ອທີ່..... ເຮັກຕາ.

9. ດິນປ່າປ້ອງກັນແຫ່ງຊາດ.....;;;;;... ຕອນ, ເນື້ອທີ່..... ເຮັກຕາ.

10. ດິນປ່າປ້ອງກັນ ຂອງແຂວງ..... ຕອນ; ເນື້ອທີ່..... ເຮັກຕາ.

11. ດິນປ່າປ້ອງກັນຂອງເມືອງ..... ຕອນ; ເນື້ອທີ່..... ເຮັກຕາ.

12. ດິນປ່າປ້ອງກັນບ້ານ..... .... ຕອນ;ເນື້ອທີ່..... ເຮັກຕາ.

13. ດິນປ່າປ້ອງກັນອື່ນໆ..... ຕອນ; ເນື້ອທີ່..... ເຮັກຕາ.

14. ດິນປ່າປູກໄມ້ອຸດສາຫະກຳ, ໄມ້ວິກ, ໄມ້ຢາງພາລາ, ໄມ້ສັກ, ໄມ້ເກດສະໜາ ແລະ ໄມ້ອື່ນໆ. ..... ຕອນ, ເນື້ອທີ່ທີ..... ..ເຮັກຕາ.

15. ດິນປ່າຟື້ນຟູ.. ..... ຕອນ;ເນື້ອທີ່..... ເຮັກຕາ.

VII. ດິນອຸດສາຫະກຳ

1. ເຂດທີ່ດິນອຸດສາຫະກຳ (ໂຮງຈັກ, ໂຮງງານຂະໜາດໃຫ່ຍ,ເຄື່ອງໄຟຟ້ານ້ຳຕົກ, ອື່ນໆ) ຈັກຕອນ..... ຕອນ, ເນື້ອທີ່ທີ..... .ເຮັກຕາ.

2. ແລວສາຍໄຟຟ້າ.....ຕອນ; ເນື້ອທີ່..... ເຮັກຕາ.

3. ສະຖານທີ່ບ່ອນຖິ້ມຂີ້ເຫຍື້ອ. .....ຕອນ; ເນື້ອທີ່..... ເຮັກຕາ.

VIII. ດິນຄົມມະນາຄົມ

1. ທ່າເຮືອ. ທ່າບັກ.....ຕອນ; ເນື້ອທີ່..... ເຮັກຕາ.

2. ບໍ່ຫີນ, ບໍລິນ, ບໍ່ຊາຍ, ແລະ ສະຖານທີ່ຄົບຫີນ... .....ຕອນ; ເນື້ອທີ່..... ເຮັກຕາ.

3. ຄິວລົດ..... ຕອນ; ເນື້ອທີ່..... ..ເຮັກຕາ.

4. ສະໜາມບິນ..... ຕອນ; ເນື້ອທີ່ທີ..... .ເຮັກຕາ.

5. ສະຖານທີ່ຕັ້ງຫລັກສັນຍານ.....ຕອນ; ເນື້ອທີ່..... ເຮັກຕາ.

6. ສາງຕ່າງໆ:.....ຕອນ; ເນື້ອທີ່..... ເຮັກຕາ.

7. ແລວທາງລົດໄຟ: ມີຈັກແລວ.....

8. ໂອງມົງ: ມີຈັກບ່ອນ.....

9. ເຂດສະຫງວນທາງ: ມີຈັກເສັ້ນ.....

10. ທາງເບຕົງ/ປູຢາງ: ມີຈັກເສັ້ນ.....01.....

11. ທາງດິນແດງ: ມີຈັກເສັ້ນ.....5.....

IX. ທີ່ດິນບໍລິເວນນ້ຳ

1. ສາຍນ້ຳມີຈັກສາຍ:.....ສາຍ

2. ສາຍຫ້ວຍມີຈັກສາຍ:.....ສາຍ
3. ດິນໜອງນ້ຳທຳມະຊາດ (ໜອງລວມບ້ານ) .....02.....ຕອນ; ເນື້ອທີ່...47.9479..... ເຮັກຕາ.
4. ວັງສະຫງວນຂອງບ້ານ..... ຕອນ, ເນື້ອທີ່..... ເຮັກຕາ.
5. ອ່າງເກັບນ້ຳ.....ຕອນ; ເນື້ອທີ່..... ເຮັກຕາ.
6. ດອນທາມ.....ຕອນ; ເນື້ອທີ່..... ເຮັກຕາ.
7. ເກາະດອນ.....ຕອນ, ເນື້ອທີ່..... ເຮັກຕາ.
8. ເຂດທີ່ຖືກຜົນກະທົບຕໍ່ໄພພິບັດ
1. ເຂດພື້ນທີ່ນ້ຳຖ້ວມ
> ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພນ້ຳຖ້ວມຄືແນວໃດ? ທຸກໆປີ ☐; 2-3ປີ ☐; ແລະອື່ນໆ ☐
.....ບໍ່ເຄີຍ.....
.....
ເຂດທີ່ຖືກນ້ຳຖ້ວມມີຈັກບ່ອນ.....ຢູ່ເຂດໃດຂອງບ້ານ.....
.....
.....
ຈຳນວນ.....ຫຼັງຄາເຮືອນ, ສິ່ງປຸກສ້າງໃນເຂດສາທາລະນະອື່ນໆ.....
> ປະເພດດິນທີ່ຖືກນ້ຳຖ້ວມມີຄືແນວໃດ?
ດິນປຸກສ້າງ.....ຮຕ, ດິນນາ.....ຮຕ, ດິນສວນພືດລົ້ມລຸລູກ.....ຮຕ,
ດິນສວນໄມ້ໃຫ້ໝາກ.....ຮຕ, ດິນສວນໄມ້ອຸດສາຫະກຳ.....
ດິນອື່ນໆ..... ..ຮຕ, ດິນຄົ້ງລ້ຽງສັດ.....ຮຕ
ລະດັບ ແລະ ໄລຍະນ້ຳຖ້ວມ.
ລະດັບ ນ້ຳຖ້ວມຂຶ້ນສູງສຸດ. .....ແມັດ ແລະ ຕ່ຳສຸດ .....ແມັດ.
ລະດັບນ້ຳສົ່ງຜົນຕໍ່ການຄົມມະນາຄົມຂອງບ້ານ.....
.....
.....
ໄລຍະນ້ຳຖ້ວມສູງສຸດ.....ວັນ ແລະ ຕ່ຳສຸດ.....ວັນ.
ຫ້ວຍມີນ້ຳຕະຫຼອດປີມີ.....ຫ້ວຍ ແລະ ສະເພາະລະດູຝົນມີ.....ຫ້ວຍ.
ລະດັບນ້ຳຫ້ວຍໃນລະດູຝົນສູງສຸດແມ່ນ.....ແມັດ ແລະ ຕ່ຳສຸດ.....ແມັດ.
2. ເຂດພື້ນທີ່ແຫ້ງແລ້ງ.
ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພແຫ້ງແລ້ງຄືແນວໃດ? ທຸກໆປີ € ; 2-3ປີ €; ແລະອື່ນໆ €
.....
.....
ເຂດພື້ນທີ່ແຫ້ງແລ້ງມີ..... ບ່ອນ. ຢູ່ເຂດໃດຂອງບ້ານ.....
ສາເຫດທີ່ພາໃຫ້ເກີດດິນແຫ້ງແລ້ງ.....
> ເຂດແຫ້ງແລ້ງມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?
ດິນນາ.....ຮຕ, ດິນສວນພືດລົ້ມລູກ.....ຮຕ, ດິນສວນໄມ້ໃຫ້ໝາກ..... ຮຕ,:
ດິນສວນໄມ້ອຸດສາຫະກຳ.. .....ຮຕ; ດິນຄົ້ງລ້ຽງສັດ..... ..ຮຕ
ດິນອື່ນໆ.....
3. ເຂດພື້ນທີ່ດິນເຊາະເຈື່ອນ.

ໄລຍະຜ່ານມາບ້ານຖືກຜົນກະທົບຈາກດິນເຊາະເຈື່ອນຄືແນວໃດ? ທຸກໆປີ € ; 2-3ປີ €;ແລະອື່ນໆ €
ເຂດພື້ນທີ່ດິນເຊາະເຈື່ອນມີ.. .....ບ່ອນ. ຢູ່ເຂດໃດຂອງບ້ານ.....
.....
ສາເຫດທີ່ພາໃຫ້ເກີດດິນເຊາະເຈື່ອນ.....
.....
> ເຂດເຊາະເຈື່ອນມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?
ດິນນາ.....ຮຕ, ດິນສວນພືດລົ້ມລຸກ..... ຮຕ, ດິນສວນໄມ້ໃຫ້ໝາກ..... .ຮຕ;
ດິນຄັງລ້ຽງສັດ .....ຮຕ;
ດິນສວນໄມ້ອຸດສາຫະກຳ.....ຮຕ; ດິນຄັງລ້ຽງສັດ .....ຮຕ;
ດິນອື່ນໆ.....
4. ເຂດທີ່ມີຄວາມສຽງຈາກລະເບີດບໍ່ທັນແຕກ
ໄລຍະຜ່ານມາບ້ານຖືກຜົນກະທົບຈາກລະເບີດບໍ່ທັນແຕກຄືແນວໃດ? ທຸກໆປີ☐;2-3ປີ☐ ແລະອື່ນໆ ☐
.....ບໍ່ມີ.....

3. ເຂດພື້ນທີ່ໃນລະເບີດບໍ່ທັນແຕກມີ.....ບໍ່ມີ.....ບ່ອນ. ຢູ່ເຂດໃດຂອງບ້ານ.....
.....
ມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?
ດິນນາ.....ຮຕ; ດິນສວນພືດລົ້ມລຸກ.....ຮຕ: ດິນສວນໄມ້ໃຫ້ໝາກ.....ຮຕ,
ດິນສວນໄມ້ອຸດສາຫະກຳ.....ຮຕ; ດິນດັ່ງລ້ຽງສັດ.....ຮຕ
ດິນອື່ນໆ.....

4. ເຂດພື້ນທີ່ທີ່ຖືກຜົນກະທົບດ້ານອື່ນໆ.....
.....
>ໂຄງການເຊົ່າ ແລະ ສຳປະທານທີ່ດິນພາຍໃນບ້ານມີຄືແນວໃດ?
ໂຄງການຂຸດຄົ້ນບໍ່ແຮ່.....
ໂຄງການກໍ່ສ້າງຕ່າງໆ.....
ແລະ ໂຄງການອື່ນໆ.....
> ບ້ານເຮົາມີໂຮງຈັກໂຮງງານ, ດິນເຊົ່າສຳປະທານ ແລະອື່ນໆ.....
ຖ້າມີໄດ້ສົ່ງຜົນກະທົບໃສ່ບ້ານ (ຄ້ວນ, ນ້ຳເສຍ, ສານພິດ, ສຽງ ແລະອື່ນໆ).....

5. ວິທີການປ້ອງກັນ ແລະ ແກ້ໄຂຕໍ່ຜົນກະທົບຕ່າງໆ:

ປັບປຸງອ່າງເກັບນ້ຳໜອງຝາຍລວມຂອງບ້ານໃຫ້ເລິກລົງ ແລະ ກວ້າງອອກສາມາດກັກເກັບນ້ຳໄດ້ຫຼາຍກວ່າເກົ່າ ແລະ ໄດ້ວາງແຜນໃນການຊົມໃຊ້ນ້ຳໃຫ້ພຽງພໍໃນການຜະລິດກະສິກຳ ແລະ ລ້ຽງສັດ.

ຮັບຮູ້ ແລະຢັ້ງຢືນ ນາຍບ້ານ	ຜູ້ໃຫ້ຂໍ້ມູນ	ຜູ້ບັນທຶກ
ສົ້ນ ພວນວິໄລ	ຄຳພ້ອຍ	ໂອພາດ ສົມບັດ

ເອກະສານຊ້ອນທ້າຍທີ່ 7: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ຈຳພອນ

ເຈົ້າເມືອງ ເລກທີ **613**/ຈມ

ວັນທີ 23 ຕຸລາ 2025

ຂໍ້ຕົກລົງ
ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານ ເປົ້າໝາຍໂຄງການ(ຮ່ວມມືກັບໂຄງການ IWRM ປີ 2025)

- ອີງຕາມ ມາດຕາ 40, ຂໍ້ 07 ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ: ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019.
- ອີງຕາມ ແຜນກົດຈະກຳຂອງໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະ ບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.
- ອີງຕາມ: ໜັງສືສະເໜີຂອງຫ້ອງການກະສິກຳແລະສິ່ງແວດລ້ອມເມືອງຈຳພອນສະບັບເລກທີ 09/ຫກສມ, ລົງວັນທີ 09 ຕຸລາ 2025.

ເພື່ອຈັດຕັ້ງປະຕິບັດວຽກງານຈັດສັນການນຳໃຊ້ທີ່ດິນຂັນບ້ານ 08 ປະເພດ ໃນ 03 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ໃຫ້ດຳເນີນໄປຢ່າງມີຜົນສຳເລັດ.

ເຈົ້າເມືອງຕົກລົງ:

ມາດຕາ 1 ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນເມືອງ ເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ບ້ານ 03 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ໂດຍຕຳແໜ່ງດັ່ງນີ້:

1. ທ່ານ ລັດຕະນາ ໄຊຍະບັນຊາ ຮອງປະທານຄະນະກຳມະການປົກຄອງເມືອງ ຊີ້ນຳ
2. ທ່ານ ຄອນສະຫວັນ ດວງມາລາ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ຫົວໜ້າ
3. ທ່ານ ນາງ ແກ້ວອຸດອນ ຈຸນລະມຸນຕຣີ ຮອງຫົວໜ້າຫ້ອງການ ກສ ເມືອງ ຮອງ
4. ທ່ານ ສຸພາລັກ ເພັດສະພົນ ຮອງຫົວໜ້າຫ້ອງວ່າການເມືອງ ຄະນະ
5. ທ່ານ ນາງ ອຸໄລວັນ ໄຊຍະວົງສາ ຮອງປະທານສະຫະພັນແມ່ຍິງເມືອງ ຄະນະ
6. ທ່ານ ຄຳສອນ ລຸນລາທິສັກ ຮອງເລຂາຄະນະບໍລິຫານງານຊາວໜຸ່ມເມືອງ ຄະນະ
7. ທ່ານ ສູນທອນ ສີລາດ ຮອງຫົວໜ້າຫ້ອງການວັດຖະນະທຳ ແລະ ທ່ອງທ່ຽວເມືອງ ຄະນະ

8. ທ່ານ ພູວຽງ ຈັນທະລີໄຊ ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ຄະນະ
9. ທ່ານ ນາງ ສີພະຈັນ ກຸນລະວົງ ຮອງຫົວໜ້າຫ້ອງການການເງິນເມືອງ ຄະນະ
10. ທ່ານ ນາງ ໝີ່ວຄຳ ແກ້ວວິໄລ ຮອງຫົວໜ້າຫ້ອງການຍຸຕິທຳເມືອງ ຄະນະ
11. ທ່ານ ພົງສະຫວັນ ຕຣິໂອ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ຄະນະ
12. ທ່ານ ຄອນສະຫວັນ ວົງສີລາ ກອງບັນຊາການທະຫານເມືອງ ເມືອງ ຄະນະ
13. ທ່ານ ນາຍບ້ານ 03 ບ້ານເປົ້າໝາຍໂຄງການ ຄະນະ

ມາດຕາ 2 ແຕ່ງຕັ້ງຄະນະທີມງານພາກສະໜາມ ໂດຍຕຳແໜ່ງ ດັ່ງນີ້:

1. ທ່ານ ສຸລິສັນ ສີສົມສະຫວັດ ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ຫົວໜ້າ
2. ທ່ານ ນາງ ວິມາລາວັນ ວິນດາວົງ ຫົວໜ້າໜ່ວຍງານ ຄຸ້ມຄອງ ແລະ ພັດທະນາທີ່ດິນ ຮອງ
3. ທ່ານ ບຸນຕາ ແສງແກ້ວມະຫາວົງ ຫົວໜ້າໜ່ວຍງານ ສິ່ງແວດລ້ອມ ແລະ ປ່າໄມ້ ຄະນະ
4. ທ່ານ ນາງ ວັນມະນີ ເດດວົງສາ ຫົວໜ້າໜ່ວຍງານຂົວທາງ-ເຄຫາຝັງເມືອງ ຄະນະ
5. ທ່ານ ສີແຫ້ ສົນທະວີໄຊ ຮອງຫົວໜ້າໜ່ວຍງານ ຄຸ້ມຄອງ ແລະ ພັດທະນາທີ່ດິນ ຄະນະ
6. ທ່ານ ສາຍຄຳ ບຸດກອງໃບ ຮອງຫົວໜ້າໜ່ວຍງານຊົນລະປະທານ,ນ້ຳ,ອຸຕຸນິຍົມແລະອຸທົກກະສາດ ຄະນະ
7. ທ່ານ ຈັນທະວົງໂງ່ນວົງສາ ວິຊາການຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ ຄະນະ
8. ທ່ານ ນາງ ແສງສຸວັນ ຄົມທິລາດ ວິຊາການຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ ຄະນະ
9. ທ່ານ ຈັນທີ ສຸວັນລາສີ ວິຊາການຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຄະນະ
10. ທ່ານ ອາເລັກ ສຸດທິວົງ ວິຊາການຫ້ອງວ່າການເມືອງ ຄະນະ

ມາດຕາ 3 ແຈ້ງໃຫ້ບັນດາຫ້ອງການ-ກົມກອງ ແລະ ຜູ້ທີ່ຖືກແຕ່ງຕັ້ງຈົ່ງໄດ້ຮັບຮູ້ ພ້ອມທັງເອົາໃຈໃສ່ປະຕິບັດໜ້າທີ່ ວຽກງານຕາມພາລະບົດບາດ, ສິດໜ້າທີ່ ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ ເຈົ້າເມືອງ

ຄຳຕາ ສົນນະສອນ
Khamta SINNASONE

ບ່ອນນຳສົ່ງ:
ຜູ້ຖືກແຕ່ງຕັ້ງ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
ຫ້ອງການບ້ານເປົ້າໝາຍ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
ເກັບຮັກໄວ້ 02 ສະບັບ.

ເອກະສານຊ້ອນທ້າຍທີ່ 8: ເອກະສານແຈ້ງການກ່ຽວກັບການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນແຂວງສະຫວັນນະເຂດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈຳພອນ

ເຈົ້າເມືອງ

ເລກທີ **591**/ຈມ

ວັນທີ 15 ຕຸລາ 2025

ແຈ້ງການ

ເຖິງ: ເລຂາໜ່ວຍພັກບ້ານ, ນາຍບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ

ເລື່ອງ: ການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019
- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ, ເມືອງ.
- ອີງຕາມ ແຜນກົດຈະກຳຂອງໂຄງການຄຸ້ມຄອງຊັບພະຍາກອນແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.

ເພື່ອປະຕິບັດຕາມແຜນພັດທະນາເສດຖະກິດຂອງເມືອງແຕ່ປີ 2025-2029 ທີ່ດິນທຸກປະເພດຕ້ອງໄດ້ມີການກຳນົດເຂດ, ປະເພດການນຳໃຊ້ຕ່າງໆ, ເປັນຕົ້ນແມ່ນເຂດດິນກະສິກຳ, ເຂດດິນປ່າໄມ້, ເຂດແຫຼ່ງນ້ຳ, ເຂດທີ່ຖືກກະທົບຈາກໄພທຳມະຊາດ ເຊັ່ນ: ເຂດນ້ຳຖ້ວມ, ເຂດແຫ້ງແລ້ງ, ເຂດເຊາະເຈື່ອນ ແລະ ອື່ນໆ ສ້າງເປັນແຜນທີ່ຈັດສັນທີ່ດິນ, ເພື່ອເປັນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ແນ່ໃສ່ເຮັດໃຫ້ທີ່ດິນໄດ້ຮັບການພັດທະນາແບບຍືນຍົງ.

ເຈົ້າເມືອງຈຳພອນ ອອກແຈ້ງການ:

1. ເລຂາໜ່ວຍພັກບ້ານ, ນາຍບ້ານ, ເຖົ້າແກ່ແນວໂຮມ, ຜູ້ເຮັດວຽກທີ່ດິນບ້ານ ຕ້ອງໄດ້ກະກຽມຂໍ້ມູນເນື້ອທີ່ດິນແຕ່ລະປະເພດການນຳໃຊ້ທີ່ດິນຕ່າງໆເຊັ່ນ: ດິນລັດ, ດິນລວມໝູ່, ດິນປ່າໄມ້, ດິນແຫຼ່ງນ້ຳ, ດິນວັດຖະນະທຳ ດິນປຸກສ້າງ, ດິນກະສິກຳ ແລະ ດິນດິນປະເພດອື່ນໆ ໃຫ້ມີບັນຊີຂໍ້ມູນທີ່ດິນລະອຽດ.
2. ໃຫ້ຮ່ວມກັນປຶກສາຫາລືກັບການຈັດຕັ້ງບ້ານໃກ້ຄຽງ ກ່ຽວກັບເຂດແດນເຊື່ອມຕໍ່ລະຫວ່າງບ້ານໃກ້ຄຽງໃຫ້ຈະແຈ້ງ ເພື່ອອຳນວຍຄວາມສະດວກແກ່ພະນັກງານວິຊາການທີ່ລົງເຮັດວຽກເດີນສຳຫຼວດຂອບເຂດບ້ານ ກໍລະນີເຂດບ້ານກັບບ້ານບໍ່ຈະແຈ້ງຕ້ອງພ້ອມກັນແກ້ໄຂໃຫ້ສຳເລັດກ່ອນການເດີນສຳຫຼວດຂອບເຂດ.

3. ໃຫ້ແຕ່ງຕັ້ງມອບໝາຍບຸກຄົນໃນຄະນະປົກຄອງບ້ານ, ຜູ້ຮັບຜິດຊອບວຽກທີ່ດິນ ຫຼື ອົງການຈັດຕັ້ງຕ່າງໆເຂົ້າຮ່ວມນຳທີມງານວິຊາການຈັດສັນການນຳໃຊ້ທີ່ດິນ, ລາຍລະອຽດແມ່ນພະນັກວິຊາການຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງເປັນໃຈກາງໃນການປະສານສົມທົບ.

ດັ່ງນັ້ນ; ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ສຳເລັດຕາມລະດັບຄາດໝາຍ.

ຮັກສາການ ເຈົ້າເມືອງ

ຄຳເກ ສົນນະສອນ
Khamla SINNASONE

ບ່ອນສົ່ງ:
- ຫ້ອງການ ກສມ; ບ່ອນລະ 01 ສະບັບ.
- ບ້ານ 03 ບ້ານ, ບ່ອນລະ 01 ສະບັບ.

ຈດຕາງບະຕບດ ເດຍ:

ສະໜັບສະໜູນໂດຍ:

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດ
ໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation
in the Xe Bang Hieng River Basin and Luang Prabang City Project

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ
"ບ້ານເພຍກ່າ" ເມືອງຈຳພອນ ແຂວງສະຫວັນນະເຂດ



ກະກຽມໂດຍ:

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ

ພະຈິກ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເມືອງຈໍາພອນ

ເລກທີ 725 /ຈມ.ຈພ
ເມືອງຈໍາພອນ, ວັນທີ 21 ພະຈິກ 2025

ຂໍ້ຕົກລົງ
ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນບ້ານ ສີວິໄລ, ເມືອງຈໍາພອນ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019;
- ອີງຕາມ ແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025;
- ອີງຕາມ ໜັງສືສະເໜີຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ, ສະບັບເລກທີ 188/ ຫກສມ.ຈພ, ວັນທີ 20 ພະຈິກ 2025.

ເຈົ້າເມືອງຈໍາພອນ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນ ຂອງ ບ້ານສີວິໄລ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນໍາການຈັດຕັ້ງປະຕິບັດໄປຕາມແຜນທີ່ກໍານົດໄວ້ ແລະ ແຜນສະບັບນີ້ເປັນນິຕິກໍາຄຸ້ມຄອງເພື່ອຮັບປະກັນສິດໃນການນໍາໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມ ຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກໍາ ແລະ ປ່າໄມ້, ທຸກ ການປ່ຽນແປງ ຫຼື ການຫັນປ່ຽນປະເພດການນໍາໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກໍານົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ ເຈົ້າເມືອງ

ຄໍາຕາ ສິນນະສອນ
Khamta SINNASONE

ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມີຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2025 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານເພຍກ່າ ສະບັບນີ້ ຈະເປັນເອກະສານພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານເພຍກ່າຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານເພຍກ່າສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ ແລະ ອົງການປົກຄອງເມືອງຈຳພອນ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານເພຍກ່າ ສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຈຳພອນ, ວັນທີ 29 ພະຈິກ 2025

ຫົວໜ້າຫ້ອງການ

ຄອນສະຫວັນ ດວງມາລາ

ສັງລວມຫຍໍ້

ບ້ານ ເພຍກ່າ ຕັ້ງຫ່າງຈາກເທດສະບານເມືອງ ຈໍາພອນ ໄປທາງທາງທິດເໜືອຂອງເມືອງ, ມີໄລຍະທາງແຕ່ປະມານ 09 ກິໂລແມັດ, ມີລະດັບຄວາມສູງ ສະເລ່ຍ 169 ແມັດ ທຽບໃສ່ລະດັບນໍ້າທະເລ, ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ ມີ 461.95 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງຈໍາພອນ ແລະ ບັນດາບ້ານຂອງເມືອງໃກ້ຄຽງ ຄື: ທິດເໜືອ ຕິດກັບ ບ້ານຊະຄຶນໃຕ້ ເມືອງຈໍາພອນ, ທິດໃຕ້ ຕິດກັບ ບ້ານຫົວເມືອງ, ເມືອງຈໍາພອນ, ທິດຕາເວັນອອກ ຕິດກັບ ບ້ານລໍາບອງ ເມືອງຈໍາພອນ ທິດຕາເວັນຕົກ ຕິດກັບ ບ້ານແກ້ງປູນ ແລະ ບ້ານໂນນສີທັນ, ເມືອງຈໍາພອນ.

ບ້ານ ເພຍກ່າ ມີພົນລະເມືອງທັງໝົດ 611 ຄົນ, ຍິງ 324 ຄົນ, ປະກອບມີ 07 ໜ່ວຍ, ມີ 104 ຫລັງຄາເຮືອນ, ມີ 117 ຄອບຄົວ. ມີ 01 ຊົນເຜົ່າຄື: ຊົນເຜົ່າລາວ, ຊາວບ້ານປະກອບອາຊີບກະສິກໍາເປັນຕົ້ນຕໍຄື: ແມ່ນຍຶດຖືເອົາການເຮັດນາ, ປູກພືດ ແລະ ສໍາຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາຂາຍເຂົ້າ ແລະ ຂາຍສັດລ້ຽງເຊັ່ນ: ງົວ, ຄວາຍ, ແບ້, ໝູ, ສັດປີກ, ສໍາຮອງລົງມາແມ່ນມາຈາກການຂາຍເຄື່ອງຍ່ອຍ ແລະ ອື່ນໆ, ມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 343 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 0 ຄອບຄົວ, ບ້ານເພຍກ່າເປັນບ້ານທີ່ມີເນື້ອທີ່ດິນກະສິກໍາເປັນສ່ວນໃຫຍ່ໂດຍສະເພາະແມ່ນດິນນາ ດັ່ງນັ້ນຈຶ່ງເປັນທ່າແຮງໃນການພັດທະນາເສດຖະກິດຂອງບ້ານ.

ແຜນຈັດສັນການນໍາໃຊ້ທີ່ດິນບ້ານເພຍກ່າ ສະບັບນີ້ ປະກອບມີ 6 ປະເພດການນໍາໃຊ້ຫຼັກ ຊຶ່ງປະກອບມີ ດັ່ງນີ້: ເຂດທີ່ດິນກະສິກໍາ ມີປະມານ 298.42 ເຮັກຕາ ກວມເອົາ 64.60% (ໃນນີ້ ນາ, ນາສາມາດເຮັດຊົນລະປະທານ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 14.4564 ເຮັກຕາ ກວມເອົາ 3.13% (ໃນນີ້, ມີດິນປຸກສ້າງບຸກຄົນ, ໂຮງຮຽນ, ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທໍາ ມີເນື້ອທີ່ 8.99 ເຮັກຕາ ກວມເອົາ 1.95% (ໃນນີ້, ດິນວັດ, ປ່າມະເຫສັກ, ແລະ ປ່າຊ້າ), ເຂດດິນປ່າໄມ້ ມີເນື້ອທີ່ 38.14 ເຮັກຕາ ກວມເອົາ 8.26% (ໃນນີ້ມີ ປ່າໄຜ່ກະຊະ, ປ່າເລົ່າອ່ອນ), ທີ່ດິນຄົມມະນາຄົມ ມີເນື້ອທີ່ 2.59 ເຮັກຕາ. ກວມເອົາ 0.56% (ໃນນີ້, ເສັ້ນທາງດິນແດງ) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 99.343 ເຮັກຕາ ກວມເອົາ 21.51% (ໃນນີ້, ຫ້ວຍ, ນໍ້າເຊຈໍາພອນ, ໜອງລວມບ້ານ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລອ້ມເມືອງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ ຮວ່ມກັບຄະນະກໍາມະການອະນຸລັກຂັ້ນບ້ານ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສໍາຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທໍາທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

ສາລະບານ

ຄຳນຳ i

ສັງລວມຫຍໍ້ ii

I. ຈຸດປະສົງ ແລະ ລະດັບຄາດໝາຍ 7

1.1 ຈຸດປະສົງ 7

1.2 ລະດັບຄາດໝາຍ 7

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ 8

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ 8

II. ສະພາບລວມຂອງບ້ານ 9

2.1 ປະຫວັດຄວາມເປັນມາຂອງບ້ານ 9

2.2 ທີ່ຕັ້ງພູມສັນຖານ 9

2.3 ດ້ານການປົກຄອງ 9

2.4 ດ້ານເສດຖະກິດ-ສັງຄົມ 10

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ 10

III. ສະພາບການນຳໃຊ້ທີ່ດິນປະຈຸບັນ 10

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ 10

3.2 ເຂດຄຸ້ມຄອງຂອງບ້ານເພຍກ່າ 11

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ 13

IV. ການຈັດສັນການນຳໃຊ້ທີ່ດິນ 15

4.1 ການກຳນົດເຂດທີ່ດິນຂອງບ້ານ ເພຍກ່າ 15

4.1.1 ເຂດທີ່ດິນອະນຸລັກ 15

4.1.2 ເຂດທີ່ດິນນຳໃຊ້ນຳ 15

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ 15

4.2 ການກຳນົດປະເພດທີ່ດິນຂອງບ້ານ 16

4.3 ເຂດທີ່ຖືກຜົນກະທົບຈາກໄພທຳມະຊາດ 19

4.3.1 ເຂດພື້ນທີ່ນ້ຳຖ້ວມ 19

4.3.2 ເຂດພື້ນທີ່ເຊາະເຈື່ອນ 19

V. ທ່າແຮງໃນການພັດທະນາທີ່ດິນ 21

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ 21

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານເພຍກ່າ 21

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ 22

6.1 ການຄຸ້ມຄອງ ທີ່ດິນກະສິກຳ 22

6.2 ການຄຸ້ມຄອງທີ່ດິນປຸກສ້າງ 22
6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ 22
6.4 ການຄຸ້ມຄອງ ທີ່ດິນປ່າໄມ້ 22
6.5 ການຄຸ້ມຄອງ ທີ່ດິນຄົມມະນາຄົມ 23
6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ 23
VII. ການຫັນປ່ຽນປະເພດທີ່ດິນ 23
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ 23
8.1. ການຈັດຕັ້ງ 23
8.2. ບຸກຄະລາກອນ 23
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ 23
8.4. ຂອບເຂດສິດ 24
8.5. ລະບອບແບບແຜນວິທີເຮັດວຽກ 24
8.6. ການຕິດຕາມກວດກາ 24
ເອກະສານອ້າງອີງ 25
ເອກະສານຊ້ອນທ້າຍ 26
ເອກະສານຊ້ອນທ້າຍທີ່ 1: ໜັງສືສະເໜີ 27
ເອກະສານຊ້ອນທ້າຍທີ່ 2: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫว่ານບ້ານດົງເມືອງ ຕິດກັບບັນດາບ້ານໃກ້ຄຽງ 28
ເອກະສານຊ້ອນທ້າຍທີ່ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ກຳນົດເຂດແລະກຳນົດທີ່ດິນ ແຕ່ລະປະເພດ 33
ເອກະສານຊ້ອນທ້າຍທີ່ 4: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫว่ານບ້ານເພຍກ່າຕິດກັບບ້ານຊະຄຶນໃຕ້, ບ້ານລຳບອງ, ບ້ານຫົວເມືອງ, ບ້ານໂນນສີທັນ, ບ້ານແກ້ງປູນ 35
ເອກະສານຊ້ອນທ້າຍທີ່ 5: ບົດບັນທຶກກອງປະຊຸມສະເໜີຜ່ານແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ ແລະ ສ້ານແຜນທີ່ການນຳໃຊ້ທີ່ດິນ 38
ເອກະສານຊ້ອນທ້າຍທີ່ 6: ເອກະສານສຳພາດຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານໂດຍການເຊັນ ຮັບຮອງຈາກນາຍບ້ານ 40
ເອກະສານຊ້ອນທ້າຍທີ່ 7: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການ 47
ເອກະສານຊ້ອນທ້າຍທີ່ 8: ເອກະສານແຈ້ງການກ່ຽວກັບການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນແຂວງສະຫວັນນະເຂດ 49

ສາລະບານຕາຕະລາງ

ຕາຕະລາງທີ 1 ສະແດງດ້ານສາດສະໜາ.....10
ຕາຕະລາງທີ 2 ຄ່າພິກັດບ້ານຊະຄຶນໃຕ້-ບ້ານລຳບອງ ເມືອງຈຳພອນ ແຂວງສະຫວັນນະເຂດ.....11
ຕາຕະລາງທີ 3 ຄ່າພິກັດບ້ານລຳບອງ-ບ້ານຫົວເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ.....11
ຕາຕະລາງທີ 4 ຄ່າພິກັດບ້ານຫົວເມືອງ-ບ້ານໂນນສີທັນ ເມືອງຈຳພອນ ແຂວງສະຫວັນນະເຂດ.....12
ຕາຕະລາງທີ 5 ຄ່າພິກັດບ້ານໂນນສີທັນ-ບ້ານແກ້ງປູນ ເມືອງຈຳພອນ ແຂວງສະຫວັນນະເຂດ.....12
ຕາຕະລາງທີ 6 ຄ່າພິກັດບ້ານແກ້ງປູນ-ບ້ານຊະຄຶນໃຕ້ ເມືອງຈຳພອນ ແຂວງສະຫວັນນະເຂດ.....12
ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ ..14
ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານເພຍກ່າ, ເມືອງຈຳພອນ ແຂວງສະຫວັນນະເຂດ.....17
ຕາຕະລາງ 9: ເນື້ອທີ່ດິນທີ່ຖືກຜົນກະທົບຈາກໄພທຳມະຊາດ.....19
ຕາຕະລາງທີ 10 ສົມທຽບລະຫว่ວ່ງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ.....20

ສາລະບານຮູບພາບ

ຮູບທີ 1 ສະພາບພູມສັນຖານຂອງບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ 9
ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ 13
ຮູບທີ 3 ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ 14
ຮູບທີ 4 ແຜນທີ່ຈັດສັນການນໍາໃຊ້ທີ່ດິນ ບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ 18
ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ລະຫວ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ21
ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ 21

I. ຈຸດປະສົງ ແລະ ລະດັບຄາດໝາຍ

1.1 ຈຸດປະສົງ

- ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ທັງນີ້, ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ;
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກຳນົດພື້ນທີ່, ເຂດທີ່ເປັນທ່າແຮງກ່ຽວກັບເປົ້າໝາຍໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດສາມາດນຳຜົນປະໂຫຍດສູງສຸດ;
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ;
- ເພື່ອຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆ ເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທົ່ວໄປ;
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ;
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນ ເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢູ່ໃນແຕ່ລະທ້ອງຖິ່ນໄດ້.

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- ຂັ້ນຕອນທີ 1: ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະ ແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ;
- ຂັ້ນຕອນທີ 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການຈາກພາກສ່ວນ/ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ;
- ຂັ້ນຕອນທີ 3: ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງ ເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້;
- ຂັ້ນຕອນທີ 4: ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ;
- ຂັ້ນຕອນທີ 5: ກະກຽມບັນດາເອກະສານຕ່າງ ທີ່ກ່ຽວພັນກັບທີ່ດິນ ເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະ ລະບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ, ນິຕິບຸກຄົນ, ບໍລິສັດ ຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ;
- ຂັ້ນຕອນທີ 6: ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ ຢູ່ແຕ່ລະບ້ານ ແລະ ເມືອງ;
- ຂັ້ນຕອນທີ 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ.

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການ ກ່ຽວກັບ ການນຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງບ້ານ-ກຸ່ມບ້ານ ໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະ ຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະປະເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອນເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະ ມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການ;
- ຜ່ານແຜນການຈັດສັນການນຳໃຊ້ທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງ ແລະ ປະກາດໃຊ້ແຜນດັ່ງກ່າວຢ່າງເປັນທາງການ.

II. ສະພາບລວມຂອງບ້ານ

2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານເພຍກ່າ ແມ່ນບ້ານໜຶ່ງທີ່ຂຶ້ນກັບກຸ່ມບ້ານທີ 03 ຂອງເມືອງຈໍາພອນ ເຊິ່ງໄດ້ຍົກຍ້າຍມາຈາກບ້ານວັງປາກ ສຸຍ ຫຼັງຈາກນັ້ນປ່ຽນຊື່ມາເປັນບ້ານເພຍກ່າ ປະມານ 400 ກວ່າປີ ຈົນມາຮອດປະຈຸບັນ. ເຊິ່ງເຂດດັ່ງກ່າວແມ່ນ ຄວາມມີຄວາມອຸດົມສົມບູນໃນການຫາຢູ່ຫາກິນ ແລະ ພື້ນທີ່ກໍາກວ້າງເໝາະສົມແກ່ການຜະລິດກະສິກໍາ, ປູກຝັງ ແລະ ລ້ຽງສັດ.

2.2 ທີ່ຕັ້ງພູມສັນຖານ

ບ້ານເພຍກ່າ ຕັ້ງຢູ່ທິດຕາເວັນຕົກ ຂອງເມືອງຈໍາພອນ, ແຂວງສະຫວັນນະເຂດ ຫ່າງຈາກເທດສະບານເມືອງ ປະມານ 09 ກິໂລແມັດ ແລະ ມີລະດັບຄວາມສູງທຽບໃສ່ລະດັບໜ້ານ້ໍາທະເລ 169 ແມັດ. ສະ ພາບພູມສັນຖານ ເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ. ດັ່ງ ສະແດງໃນຮູບພາບລຸ່ມນີ້:

ພາບຖ່າຍໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1 ສະພາບພູມສັນຖານຂອງບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ

2.3 ດ້ານການປົກຄອງ

ບ້ານເພຍກ່າ ມີນາຍບ້ານ 01 ທ່ານ, ຮອງນາຍບ້ານ 04 ທ່ານ, ມີສະມາຊິກພັກ 09 ສະຫາຍ, ຍິງ 04 ສະຫາຍ, ສະຫະພັນແມ່ຍິງມີ 13 ທ່ານ, ຊາວໜຸ່ມ 12 ທ່ານ, ຍິງ 02 ທ່ານ, ມີພົນລະເມືອງທັງໝົດ 611 ຄົນ, ຍິງ 324 ຄົນ, ປະກອບມີ 07 ໜ່ວຍ, ມີ 104 ຫລັງຄາເຮືອນ,ມີ 117 ຄອບຄົວ. ມີ 01 ຊົນເຜົ່າຄື: ເຜົ່າລາວ, ນັບຖືສາ ສະໜາພຸດ, ໄດ້ຮັບນາມມະຍົດເປັນບ້ານໜ່ວຍພັກອດໃສ, ເຂັ້ມແຂງ, ໜັກແໜ້ນ.

ວຽກງານການສຶກສາທົ່ວການປະຈຸບັນໃນບ້ານມີໂຮງຮຽນປະຖົມສົມບູນ 01 ຫຼັງ, ຫ້ອງຮຽນແມ່ນພຽງພໍກັບຄວາມຕ້ອງການ. ມີຈຳນວນນັກຮຽນ 43 ຄົນ, ຍິງ 20 ຄົນ, ມີຄູສອນ 2 ຄົນ, ຍິງ 1 ຄົນ ຫລັງຈາກຮຽນຈົບຊັ້ນປະຖົມ ແມ່ນໄດ້ປະສົກສາຕໍ່ມັດທະຍົມຕົ້ນລຳບອງ ແລະ ມັດທະຍົມປາຍແກ້ງກອກ.

ວຽກງານສາທາລະນະສຸກບ້ານແມ່ນບໍ່ມີສຸກສາລາ ໄປໃຊ້ບໍລິການຢູ່ສຸກສາລາບ້ານລຳບອງ ໄລຍະທາງປະມານ 02 ກິໂລແມັດ ແລະ ໄປໃຊ້ບໍລິການຢູ່ໂຮງໝໍເມືອງຈຳພອນໄລຍະທາງ 09 ກິໂລແມັດ, ປະຊາຊົນໄດ້ຊົມໃຊ້ນ້ຳສ້າງ ແລະ ຊົມໃຊ້ວິດຖ່າຍ 100%. ນອກຈາກນັ້ນ, ອົງການຈັດຕັ້ງບ້ານໄດ້ລະດົມ ໃຫ້ແຕ່ລະຄອບຄົວປະຕິບັດຫລັກການອານາໄມ 3 ສະອາດ, ລົບລ້າງການປິ່ນປົວຕາມຄວາມເຊື່ອຖືໄຊຍະສາດ ແລະ ລະດົມໃຫ້ປະຊາຊົນຫັນມາປິ່ນປົວໂດຍໃຊ້ຢາຫລວງ ແລະ ແບບວິທະຍາສາດ, ເດັກນ້ອຍໄດ້ຮັບການສັກຢາ, ຢອດຢາກັນພະຍາດ 100%. ຜູ້ຍິງຖືພາໄດ້ຮັບການຝາກທ້ອງ ແລະ ປະຕິບັດຕາມຫລັກການແນະນຳຂອງແພດໝໍເປັນປົກກະຕິ ສືບຕໍ່ນຳເອົາບັນດາແຈ້ງການນິຕິກຳຕ່າງໆ ລົງເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຊາບ ໂດຍສະເພາະແມ່ນ ໂພສະນາການດ້ານສຸຂະພາບ, ການກິນ, ການຢູ່, ຕ້ານພະຍາດແຜ່ລະບາດ, ຖອກທ້ອງ ແລະ ໄຂ້ຍຸງ.

2.4 ດ້ານເສດຖະກິດ-ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ຂາຍເຂົ້າ ແລະ ຂາຍສັດລ້ຽງ ເຊັ່ນ: ງົວ, ຄວາຍ, ແບ້, ໝູ, ສັດປີກ, ສຳຮອງລົງມາແມ່ນມາຈາການຂາຍເຄື່ອງຍ່ອຍ ແລະ ອື່ນໆ. ບ້ານເພຍກ່າ ເປັນບ້ານທີ່ມີເນື້ອທີ່ດິນກະສິກຳເປັນສ່ວນໃຫຍ່ໂດຍສະເພາະແມ່ນດິນນາ ດັ່ງນັ້ນຈຶ່ງເປັນທ່າແຮງໃນການພັດທະນາເສດຖະກິດຂອງບ້ານ ແລະ ສຳຮອງລົງມາແມ່ນມາຈາການຄ້າຂາຍ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະຫຍາຍຕົວເພີ້ມຂຶ້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 343 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 0 ຄອບຄົວ.

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ

ປະຊາຊົນບ້ານ ເພຍກ່າ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ, ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີບັນພະບຸລຸດຂອງປະຊາຊົນລາວ ບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນ ບຸນປີໃໝ່ລາວ ແລະ ອື່ນໆ.

ຕາຕະລາງທີ 1 ສະແດງດ້ານສາດສະໜາ

ລ/ດ	ປະເພດຊົນເຜົ່າ	ສາດສະໜາ	ຈຳນວນຄອບຄົວ	ໝາຍເຫດ
1	ລາວ	ພຸດ	117	
ລວມທັງໝົດ			117	

III. ສະພາບການນຳໃຊ້ທີ່ດິນປະຈຸບັນ

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຊຶ່ງກຳນົດຈຸດເຄົ້າຂອງບ້ານກຳນົດຢູ່ຈຸດວັດ GPS ມີຄ່າພິກັດ: ເສັ້ນແວງທີ X = 522279 m; ເສັ້ນຂະໜານທີ Y = 1863711 m ແລະ ມີລວງຮອບທັງໝົດ = 11,546 m, ມີເນື້ອທີ່ທັງໝົດ = 461.9455 ເຮັກຕາ.

3.2 ເຂດຄຸ້ມຄອງຂອງບ້ານເພຍກ່າ

ບ້ານເພຍກ່າ ມີເຂດຄຸ້ມຄອງຕິດກັບ 5 ບ້ານຄື:

- ທິດເໜືອ (N) ຕິດກັບ ບ້ານຊະຄຶນໃຕ້ ເມືອງຈໍາພອນ
- ທິດໃຕ້ (S) ຕິດກັບ ບ້ານຫົວເມືອງ ເມືອງຈໍາພອນ
- ທິດຕາເວັນອອກ (E) ຕິດກັບ ບ້ານລໍາບອງ ເມືອງຈໍາພອນ ແຂວງສະຫວັນນະເຂດ.
- ທິດຕາເວັນຕົກ (W) ຕິດກັບ ບ້ານແກ້ງປູນ ແລະ ບ້ານໂນນສີທັນ ເມືອງຈໍາພອນ.

ຕາຕະລາງທີ 2 ຄ່າພິກັດບ້ານຊະຄຶນໃຕ້-ບ້ານລໍາບອງ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	522249	1825484		ກໍານົດເອົາເລີ້ມແຕ່ກົກດູໃຫຍ່ຫານາລຸງເສີມ ວັງດອນທ່ອນ ຂຶ້ນຕາມລໍາເຊຮອດວັງສວນອ້ອຍນາແມ່ເຖົ້າລົນ
2	523184	1824813		ກໍານົດຈຸດເລີ້ມແຕ່ວັງສວນອ້ອຍ, ນາແມ່ເຖົ້າລົນ ເລາະຕາມ ຮ່ອງເຕີຍຮອດນາພໍ່ເຖົ້າຄູນມີ, ທົ່ງໜອງແປນຕັດຊື່ຜ່ານ ໜອງແປນ ຮອດປາກເປັ່ງໜອງແປນຕົກໃສ່ໜອງສະຫຼອງ ຂຽງ, ເຮືອນສະເດັດບຸນອຸ້ມ.
ລວມໄລຍະ			4151.85	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຈໍາພອນ, ປີ 2025

ຕາຕະລາງທີ 3 ຄ່າພິກັດບ້ານລໍາບອງ-ບ້ານຫົວເມືອງ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	523184	1824813		ກໍານົດຈຸດເລີ້ມແຕ່ວັງສວນອ້ອຍ, ນາແມ່ເຖົ້າລົນ ເລາະຕາມ ຮ່ອງເຕີຍຮອດນາພໍ່ເຖົ້າຄູນມີ, ທົ່ງໜອງແປນ ຕັດຊື່ຜ່ານ ໜອງແປນຮອດປາກເປັ່ງໜອງແປນຕົກໃສ່ໜອງສະຫຼອງ ຂຽງ, ເຮືອນສະເດັດບຸນອຸ້ມ.
2	523310	1822398		ກໍານົດຈຸດເລີ້ມແຕ່ເຮືອນສະເດັດບຸນອຸ້ມໜອງສະຫຼອງຂຽງ ແລະເລາະໄປຕາມໜອງສະຫຼອງຂຽງ ລັດໃສ່ກົກມ່ວງໃຫຍ່ ເນັ່ງຊື່ ໄປຕົກໃສ່ປາກກຸດເຊຈໍາພອນ.
ລວມໄລຍະ			3454.69	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຈໍາພອນ, ປີ 2025

ຕາຕະລາງທີ 4 ຄ່າພິກັດບ້ານຫົວເມືອງ-ບ້ານໂນນສີທັນ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	523310	1822398		ກໍານົດຈຸດເລີ້ມແຕ່ເຮືອນສະເດັດບຸນອຸ້ມໝອງສະຫຼອງຂຽງ ແລະເປີ້ນໄປຕາມໝອງສະຫຼອງຂຽງ ລັດໃສ່ກົກນ້ອງໃຫຍ່ ເນັ່ງຊື່ ໄປຕົກໃສ່ປາກກຸດເຊຈໍາພອນ.
2	521921	1822227		ກໍານົດຈຸດເລີ້ມແຕ່ຈຸດເຂດແດນບ້ານຫົວເມືອງ ເລາະຕາມເຊ ຮອດຈຸດກຸດປາກເຊຈໍາພອນ
ລວມໄລຍະ			1965.38	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຈໍາພອນ, ປີ 2025

ຕາຕະລາງທີ 5 ຄ່າພິກັດບ້ານໂນນສີທັນ-ບ້ານແກ້ງປູນ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	521921	1822227		ກໍານົດຈຸດເລີ້ມແຕ່ຈຸດເຂດແດນບ້ານຫົວເມືອງ ເລາະຕາມ ເຊ ຮອດຈຸດກຸດປາກເຊຈໍາພອນ
2	521531	1822340		ເລີ້ມແຕ່ກຸດປາກເຊຈໍາພອນຂຶ້ນຕາມລໍາເຊໄປຮອດກົກດູ່ ໃຫຍ່ນາລຸງ ເສີມ ວັງດອນທອນ.
ລວມໄລຍະ			2412.38	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຈໍາພອນ, ປີ 2025

ຕາຕະລາງທີ 6 ຄ່າພິກັດບ້ານແກ້ງປູນ-ບ້ານຊະຄຶນໃຕ້ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	521531	1822340		ເລີ້ມແຕ່ກຸດປາກເຊຈໍາພອນຂຶ້ນຕາມລໍາເຊໄປຮອດກົກດູ່ ໃຫຍ່ນາລຸງ ເສີມ ວັງດອນທອນ.
2	522249	1825484		ເລີ້ມແຕ່ກົກດູ່ໃຫຍ່ນາລຸງ ເສີມ ວັງດອນທ່ອນ ຂຶ້ນ ຕາມລໍາເຊຮອດວັງສວນອ້ອຍ ນາແມ່ເຖົ້າລິນ
ລວມໄລຍະ			5831.83	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມຈໍາພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມຈຳພອນ, ປີ 2025

ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານເຜຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຖືອາຊີບເຮັດນາເປັນສ່ວນໃຫຍ່ ແລະ ຖືເອົາການເຮັດກະສິກຳປູກຝັງ-ລ້ຽງສັດເປັນສຳຮອງ, ໃນໄລຍະຜ່ານມາການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ສ່ວນໃຫຍ່ເປັນທົ່ງພຽງ ມີໜອງນ້ຳທຳມະຊາດເໝາະສົມສຳລັບເຮັດການກະສິກຳ ໂດຍສະເພາະແມ່ນປູກເຂົ້າ, ເຮັດສວນປູກພືດ ແລະ ລ້ຽງສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** : ເນື່ອຈາກເປັນເຂດພື້ນທີ່ຕ່ຳ ໃນລະດູຝົນໄພທຳມະຊາດຄຸກຄາມ ໂດຍສະເພາະແມ່ນນ້ຳຖ້ວມ ເມື່ອເວລານ້ຳຖ້ວມແລ້ວເຂດທຳການຜະລິດຂອງປະຊາຊົນທຳການຜະລິດບໍ່ໄດ້, ລະບົບເສັ້ນທາງຄົມມະນາຄົມກໍ່ຫຍຸ້ງຍາກໃນການໄປມາຫາສູ່ກັນ ມີບາງບ້ານເດີນທາງດ້ວຍລົດບໍ່ໄດ້ຕ້ອງເດີນທາງດ້ວຍເຮືອພາຍ ຫຼື ເຮືອຈັກ, ສັດລ້ຽງຂອງປະຊາຊົນບໍ່ມີບ່ອນກິນຫຍ້າ ແລະ ສັດກໍ່ມັກເກີດພະຍາພາຍຫຼັງນ້ຳບົກແຫ້ງ, ປະຊາຊົນຂາດເຂີນນ້ຳດື່ມ.

ຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຍຶດຖືເອົາການເຮັດກະສິກຳປູກຝັງ-ລ້ຽງສັດ ດັ່ງນັ້ນເປີເຊັນທີ່ດິນສ່ວນໃຫຍ່ແມ່ນທີ່ດິນກະສິກຳ ເຊິ່ງມີເນື້ອທີ່ 337.91 ເຮັກຕາ ກວມເຖິງ 73.15% ຂອງເນື້ອທີ່ທັງໝົດຂອງບ້ານ ສ່ວນທີ່ເຫຼືອແມ່ນເນື້ອທີ່ດິນປະເພດອື່ນໆ.

ຕາຕະລາງທີ 7 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ເນື້ອທີ່ (ຮຕ)	ເປີເซັນ %
I	**ດິນກະສິກຳ**	**A**	**271.18**	**58.70**
1	ດິນນາ	A_1	267.9082	58.00
2	ທີ່ດິນປູກພືດກະສິກຳ ທົ່ວໄປ	A_2	2.9389	0.64
3	ທີ່ດິນກໍ່ສ້າງໂຄ່ງລ່າງຊົນລະປະທານ	A_4	0.3365	0.07
II	**ດິນປຸກສ້າງ**	**B**	**11.9572**	**2.59**
1	ດິນປຸກສ້າງບຸກຄົນ	B_1	11.5325	2.50
2	ທີ່ດິນປຸກສ້າງລັດ ຫຼື ດິນລວມບ້ານ	B_2	0.4247	0.092
III	**ດິນວັດທະນະທຳ**	**C**	**9.72**	**2.10**
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	C_1	0.7621	0.16
2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	C_2	8.9607	1.94
IV	**ດິນປ່າໄມ້**	**F**	**37.22**	**8.06**
1	ທີ່ດິນປ່າຊົມໃຊ້ທົ່ວໄປ	F_1	37.2242	8.06
V	**ດິນຄົມມະນາຄົມ**	**R**	**2.05**	**0.44**
1	ທີ່ດິນທາງດິນແດງ ແລະ ທາງປູຢາງ	R_2	2.0522	0.44
VI	**ດິນບໍລິເວນນ້ຳ**	**W**	**129.805**	**28.10**
1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	W_1	45.8606	9.93
2	ທີ່ດິນໜອງນ້ຳທຳມະຊາດ	W_2	83.9448	18.17
ລວມທັງໝົດ			**461.9455**	**100.00**

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 3 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ

IV. ການຈັດສັນການນຳໃຊ້ທີ່ດິນ

4.1 ການກຳນົດເຂດທີ່ດິນຂອງບ້ານ ເພຍກ່າ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງ ຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມ ໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານ, ຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດດັ່ງນີ້:

4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ ແມ່ນປະກອບມີ: ດິນວັດ, ດິນປ່າຊ້າ ແລະ ດິນປ່າມະເຫສັກ;

ຂ. ດິນບໍລິເວນນ້ຳຂອງບ້ານ ປະກອບມີ: ແມ່ນ້ຳເຊຈຳພອນ, ໜອງສະຫຼອງຂຽງ, ໜອງລວມບ້ານ.

4.1.2 ເຂດທີ່ດິນນຳໃຊ້ນຳ

- **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງ ບ້ານເພຍກ່າ ປະກອບມີ: ດິນນາ ດິນນາ ເຊິ່ງກວວເອີນເນື້ອທີ່ສ່ວນໃຫຍ່ຂອງບ້ານ ນອກນັ້ນຍັງມີດິນກະສິກຳທົ່ວໄປແມ່ນຢູ່ທາງທິດຕາເວັນຕົກຂອງບ້ານ, ດິນສວນ, ດິນຄອງ ຊົນລະປະທານ.
- **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**: ກຳນົດຢູ່ຕາມເສັ້ນທາງຮ່ອມຂອງບ້ານ.
- **ດິນປຸກສ້າງຂອງລັດປະກອບມີ:** ດິນໂຮງຮຽນປະຖົມສົມບູນ, ດິນຫ້ອງການບ້ານ, ດິນລັດ.
- **ເຂດທີ່ດິນເພື່ອພັດທະນາ** ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ແມ່ນມີເຂດຂະຫຍາຍການປຸກສ້າງທີ່ທາງທີມງານຈັດສັນ ແລະ ອຳນາດການປົກຄອງບ້ານໄດ້ກຳນົດໃໝ່ ໂດຍອີງຕາມທິດຂະຫຍາຍຂອງບ້ານ.

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນ ແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ເພື່ອຮັກສາແຫຼ່ງນ້ຳ, ຊີວະນາໆພັນ ແລະ ຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະ ພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າຊົມໃຊ້ ຂົງເຂດເຫຼົ່ານີ້, ລ້ວນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້, ເຄື່ອງປ່າຂອງດົງ ແລະ ອາຫານຈາກທຳມະຊາດຕາມຫ້ວຍ, ໜອງ, ບຶງ ແລະ ແມ່ນນ້ຳລຳເຊຈຳພອນ ຕ່າງໆ, ທີ່ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກມີການປ່ຽນແປງປະຊາຊົນກໍຈະມີ ຄວາມຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂຶ້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການ ຕ້ອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ ຂັດແຍ່ງກ່ຽວກັບທີ່ດິນ ແລະ ຖ້າຫາກບໍ່ມີການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນແລະວາງແຜນ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາແລະນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ແຫຼ່ງນ້ຳໃຫ້ເຂົ້າສູ່ລະບຽບ ຫຼັກການ ແລະ ກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດແລະແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດ ໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້ , ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍ

ໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ,ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ແລະ ນອກຈາກນີ້ຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະ ກະສິກຳອື່ນໆ, ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະບາຍນ້ຳຢ່າງເໝາະສົມ.
- **ຄວາມຄ້ອຍຊັນແຕ່ 5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ (ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກຕ້ອງເຮັດຄັນຄູດິນຕາມແນວລະດັບຂວາງເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫ້ຍາລ້ຽງສັດ,ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-5%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດຫຼືຖ້າຈະປູກພືດປະສົມປະສານກັບການປູກປ່າຫຼືຈະປູກໄມ້ຊຸມຊົນກໍໄດ້,ຖ້າຈະປູກຫ້ຍາລ້ຽງສັດກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສວນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.
- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນ້ຳແລະປ່າປົກປັກຮັກສາຊີວະນາໆພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສຳລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ,ປ່າປ້ອງກັນແຫຼ່ງນ້ຳ, ຊີວະນາໆພັນແລະປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສຳຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນຳໃຊ້ທີ່ດິນຂອງບ້ານເພຍກ່າ ອອກເປັນ 6 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ ການກຳນົດທີ່ດິນກະສິກຳ

ທີ່ດິນກະສິກຳ ທີ່ດິນກະສິກຳຂອງບ້ານເພຍກ່າປະກອບມີ: ດິນນາ ເຊິ່ງກວວເອົານເນື້ອທີ່ສ່ວນໃຫຍ່ຂອງບ້ານ ນອກນັ້ນຍັງມີດິນກະສິກຳທົ່ວໄປແມ່ນຢູ່ທາງທິດຕາເວັນຕົກຂອງບ້ານ, ດິນສວນ, ດິນຄອງຊົນລະປະທານ.

❖ ການກຳນົດທີ່ດິນປຸກສ້າງ

ການກຳນົດຂອບເຂດການນຳໃຊ້ທີ່ດິນແມ່ນອີງຕາມການປຶກສາຫາລືລະຫວ່າງທີມງານ ແລະ ອຳນາດການປົກຄອງຂອງບ້ານ.

- ທີ່ດິນປຸກສ້າງທີ່ມີຕົວຈິງໃນປະຈຸບັນຂອງບ້ານ: ແມ່ນຕັ້ງຢູ່ລຽບຕາມແຄມທາງພາຍໃນບ້ານ ແລະ ແຄມເຊຈຳພອນ.
- ດິນທີ່ຈະຂະຫຍາຍດິນປຸກສ້າງທີ່ຢູ່ອາໃສ: ແມ່ນກຳນົດຢູ່ແຄມສອງຟາກຂ້າງທາງຮ່ອມຂອງບ້ານໄປທາງທິດຕາເວັນອອກສ່ຽງເໜືອຂອງບ້ານ ເຊິ່ງອີງໃສການຂະຫຍາຍຕົວຂອງປະຊາກອນພາຍໃນບ້ານໃນອະນາຄົດຈຶ່ງກຳນົດເອົາເຂດດັ່ງກ່າວເປັນທີ່ດິນປຸກສ້າງໃໝ່.

- ທີ່ດິນຫ້ອງການບ້ານທີ່ກຳນົດເອົາໄວ້ແມ່ນຢູ່ທາງທິດເໜືອຂອງບ້ານຕິດກັບທາງຮ່ອມ.
- ທີ່ດິນໂຮງຮຽນປະຖົມແມ່ນຢູ່ທາງທິດຕາເວັນອອກຂອງບ້ານຕິດກັບທາງ.

❖ **ການກຳນົດທີ່ດິນວັດທະນະທຳ**

ບ້າເພຍກ່າເປັນບ້ານໜຶ່ງທີ່ປະກອບມີດິນວັດທີ່ຕັ້ງຢູ່ຈຸດໃຈກາງຂອງບ້ານ

- ດິນປ່າຊ້າແມ່ນຢູ່ທາງທິດຕາເວັນ ຕົກສ່ຽງໃຕ້ຂອງບ້ານຕິດກັບເຊຈຳພອນ.
- ດິນມະເຫສັກແມ່ນຢູ່ທາງທິດຕາເວັນຕົກຂອງບ້ານຕິດກັບເຊຈຳພອນ.

❖ **ການກຳນົດທີ່ດິນປ່າໄມ້**

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ແມ່ນປະກອບມີທີ່ດິນປ່າເລົ່າອ່ອນ, ປ່າໄຜ່ກະຊະ ແມ່ນຢູ່ທາງທິດໃຕ້ຂອງບ້ານ.

❖ **ການກຳນົດທີ່ດິນຄົມມະນາຄົມ**

ທີ່ດິນຄົມມະນາຄົມ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດສະຫງວນ ແລວ ທາງ, ສະຖານທີ່ຕັ້ງຂົວ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານການຂົນສົ່ງ ປະກອບມີ 2 ປະເພດ:

- ທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານ ຄວາມກວ້າງ 15 ແມັດ.
- ທາງຮ່ອມ, ທາງຊອຍ ຄວາມກວ້າງ 6-8 ແມັດ.

❖ **ການກຳນົດທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ,ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ທີ່ດິນບໍລິເວນນ້ຳຂອງບ້ານ ແມ່ນປະກອບມີ: ແມ່ນ້ຳເຊຈຳພອນຊຶ່ງຕັ້ງຢູ່ເກືອບອ້ອມບ້ານ, ບ້ານເພຍກ່າມີໜອງນ້ຳທຳມະຊາດຫຼາຍເປັນຕົ້ນແມ່ນ: ໜອງສະຫຼອງຂຽງ, ໜອງເຊຂາດຢູ່ທາງທິດໃຕ້ຂອງບ້ານ, ໜອງລວມຂອງບ້ານແມ່ນຢູ່ທາງທິດເໜືອຂອງບ້ານ ແລະ ນອກຈາກນັ້ນຍັງມີຢູ່ກະແຈກກະຈາຍຕາມທົ່ງນາຂອງປະຊາຊົນ, ຕ້ອງໄດ້ກຳນົດປ່າປ້ອງກັນການເຊາະເຈື່ອນເພື່ອຮັກສາທີ່ດິນດັ່ງກ່າວໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານເພຍກ່າ, ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ສີ	ເນື້ອທີ່ (ຮຕ)	ເປີເຊັນ %
I	**ດິນກະສິກຳ**	**AZ**		**231.90**	**50.20**
1	ທີ່ດິນນາ	AZ_1		229.5756	49.70
2	ທີ່ດິນປູກພືດກະສິກຳ ທົ່ວໄປ	AZ_2		2.0375	0.44
3	ທີ່ດິນກໍ່ສ້າງໂຄ່ງລ່າງຊົນລະປະທານ	AZ_4		0.2821	0.06
II	**ດິນປຸກສ້າງ**	**BZ**		**14.4564**	**3.13**
1	ດິນປຸກສ້າງບຸກດິນ	BZ_1		9.2110	1.99
2	ທີ່ດິນປຸກສ້າງລັດ ແລະ ດິນລວມບ້ານ	BZ_2		0.4100	0.089
3	ທີ່ດິນແຮຂະຫຍາຍ ປຸກສ້າງ	BZ_3		4.8353	1.047
III	**ດິນວັດທະນະທຳ**	**CZ**		**8.99**	**1.95**
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	CZ_1		0.7621	0.16

2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	CZ_2		8.2291	1.78
IV	**ດິນປ່າໄມ້**	**FZ**		**35.82**	**7.75**
1	ທີ່ດິນປ່າຊິມໃຊ້ທົ່ວໄປ	FZ_1		13.4325	2.91
2	ທີ່ດິນປ່າຟື້ນຟູຮັກສານ້ຳຖ້ວມ	FZ_6		22.3900	4.85
V	**ດິນຄົມມະນາຄົມ**	**RZ**		**2.59**	**0.56**
1	ທີ່ດິນທາງດິນແດງ ແລະ ທາງປູຢາງ	RZ_2		1.6398	0.21
2	ທີ່ດິນແຮຂະຫຍາຍເສັ້ນທາງ	RZ_3		0.9531	36.41
VI	**ດິນບໍລິເວນນ້ຳ**	**WZ**		**168.187**	**36.41**
1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	WZ_1		45.8606	9.93
2	ທີ່ດິນໜອງນ້ຳທຳມະຊາດ	WZ_2		9.0562	1.96
3	ທີ່ດິນສະຫງວນແຄມນ້ຳ	WZ_4		113.2705	24.52
ລວມທັງໝົດ				**461.9455**	**100.00**

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 4 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ

4.3 ເຂດທີ່ຖືກຜົນກະທົບຈາກໄພທຳມະຊາດ

ໃນໄລຍະຜ່ານມາ ບ້ານເພຍກ່າໄດ້ຖືກຜົນກະທົບຈາກໄພທຳມະຊາດທີ່ເກີດຈາກການປ່ຽນແປງດິນຟ້າອາກາດເປັນຕົ້ນແມ່ນໄພນ້ຳຖ້ວມຊຶ່ງເຮັດໃຫ້ຊຸມຊົນໄດ້ຮັບຜົນກະທົບ ໂດຍສະເພາະຊາວກະສິກອນຕໍ່ກັບເນື້ອທີ່ທຳການຜະລິດຂອງເຂົາເຈົ້າ ເນື້ອທີ່ຖືກຜົນກະທົບຈາກໄພນ້ຳຖ້ວມມີເນື້ອທີ່ທັງໝົດ 370.15 ເຮັກຕາ ຫຼື ທຽບໃສ່ເນື້ອທີ່ ທັງໝົດ ຄິດເປັນເປີເຊັນກວມເອົາ 80.12% ຊ້ວງໄລຍະນ້ຳຖ້ວມແມ່ນໄລຍະເດືອນ 08 ຫາ ເດືອນ 10 ຂອງທຸກໆປີ ແລະ ເຂດທີ່ໄດ້ຮັບຜົນກະທົບຈາກການກເຊາະເຈື່ອນມີເນື້ອທີ່ທັງໝົດ 0.18 ເຮັກຕາ ຫຼື ທຽບໃສ່ເນື້ອທີ່ທັງໝົດຄິດເປັນເປີເຊັນ 0.03% ຊ້ວງທີ່ໄດ້ຮັບຜົນກະທົບແມ່ນໄລຍະເດືອນ 09 ຫາ ເດືອນ 10 ຂອງທຸກໆປີ.

4.3.1 ເຂດພື້ນທີ່ນ້ຳຖ້ວມ

ໂດຍລວມແລ້ວບ້າເພຍກ່າ ແມ່ນເປັນເຂດພື້ນທີ່ຕ່ຳເຮັດໃຫ້ນ້ຳຖ້ວມ, ເຂດພື້ນທີ່ໄດ້ຮັບຜົນກະທົບຈາກນ້ຳຖ້ວມແມ່ນເກີດຂຶ້ນຢູ່ທົ່ວບ້ານ, ຊຶ່ງກວມເອົາຂອບເຂດເນື້ອທີ່ນາ 242.10 ເຮັກຕາ, ດິນສວນ 0.19 ເຮັກຕາ, ດິນປູກພືດກະສິກຳທົ່ວໄປ 3.80 ເຮັກຕາ, ດິນຄອງຊົນລະປະທານ 0.16 ເຮັກຕາ, ດິນປຸກສ້າງ 5.73 ເຮັກຕາ, ດິນລັດ 90.62 ເຮັກຕາ, ດິນລວມບ້ານ 0.02 ເຮັກຕາ, ດິນໂຮງຮຽນ 0.42 ເຮັກຕາ, ດິນວັດ 0.75 ເຮັກຕາ, ດິນປ່າຊ້າ 8.03 ເຮັກຕາ, ດິນມະເຫສັກ 1.91 ເຮັກຕາ, ປ່າໄຜ່ກະຊະ 6.48 ເຮັກຕາ, ດິນປ່າເລົ່າອ່ອນ 8.13 ເຮັກຕາ ແລະ ດິນທາງແດງ 1.81 ເຮັກຕາ ໂດຍແກ່ຍາວສູງສຸດແຕ່ເດືອນ 08 ຫາ ເດືອນ 10 ສິ່ງຜົນເຮັດໃຫ້ຜົນລະປູກຕ່າງໆໄດ້ຮັບຄວາມເສຍຫາຍ.

4.3.2 ເຂດພື້ນທີ່ເຊາະເຈື່ອນ

ເຂດພື້ນທີ່ໄດ້ຮັບຜົນກະທົບຈາກການເຊາະເຈື່ອນແມ່ນເກີດຢູ່ລຽບຕາມແຄມເຊຈຳພອນ ເຊິ່ງກວມເອົາຂອບເຂດທີ່ດິນປຸກສ້າງ 0.18 ເຮັກຕາ ສິ່ງຜົນເຮັດໃຫ້ເນື້ອທີ່ທຳການຜະລິດ ແລະ ຜົນລະປູກຕ່າງໆໄດ້ຮັບຄວາມເສຍຫາຍ.

- ສາຍເຫດທີ່ພາໃຫ້ເກີດນ້ຳຖ້ວມ.
  - ຍ້ອນພື້ນທີ່ຕ່ຳ, ຝົນຕົກເປັນໄລຍະດົນ, ບໍ່ມີບ່ອນລະບາຍນ້ຳ.
- ສາຍເຫດທີ່ພາໃຫ້ເກີດການເຊາະເຈື່ອນ
  - ຍ້ອນພື້ນທີ່ດັ່ງກ່າວເປັນເຂດດິນອ່ອນ, ດິນຊາຍ, ບໍ່ມີຕົ້ນໄມ້ເຮັດໃຫ້ນ້ຳເຊເຊາະເຈື່ອນໄດ້ງ່າຍ.
  - ຍ້ອນສາຍເຊຈຳພອນມີຄວາມຂົດໂງ້ງໄປມາເວລານ້ຳໄຫຼແຮງຕາຝັ່ງກໍ່ເຈື່ອນໃນແຕ່ລະປີ.

ຕາຕະລາງ 9: ເນື້ອທີ່ດິນທີ່ຖືກຜົນກະທົບຈາກໄພທຳມະຊາດ

ລ/ດ	ປະເພດການກະທົບ	ກວມເອົາປະເພດທີ່ດິນ	ເນື້ອທີ່ (ເຮັກຕາ)
1	ໄພນ້ຳຖ້ວມ	ດິນນາ	242.10
2	ໄພນ້ຳຖ້ວມ	ດິນສວນ	0.19
3	ໄພນ້ຳຖ້ວມ	ດິນປູກພືດກະສິກຳທົ່ວໄປ	3.80
4	ໄພນ້ຳຖ້ວມ	ຄອງຊົນລະປະທານ	0.16
5	ໄພນ້ຳຖ້ວມ	ດິນປຸກສ້າງ	5.73
6	ໄພນ້ຳຖ້ວມ	ດິນລັດ	90.62

7	ໄພນ້ຳຖ້ວມ	ດິນລວມບ້ານ	0.02
8	ໄພນ້ຳຖ້ວມ	ດິນໂຮງຮຽນ	0.42
9	ໄພນ້ຳຖ້ວມ	ດິນວັດ	
10	ໄພນ້ຳຖ້ວມ	ດິນປ່າຊ້າ	8.03
11	ໄພນ້ຳຖ້ວມ	ດິນມະເຫສັກ(ປູ່ຕາ)	1.91
12	ໄພນ້ຳຖ້ວມ	ດິນປ່າໄຜ່ກະຊະ	6.48
13	ໄພນ້ຳຖ້ວມ	ດິນປ່າເລົ່າອ່ອນ	8.13
14	ໄພນ້ຳຖ້ວມ	ດິນທາງດິນແດງ	1.81
15	ດິນເຊາະເຈື່ອນ	ເຈື່ອນດິນປຸກສ້າງ	0.18
ລວມທັງໝົດ			370.34

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານສີວິໄລ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂຶ້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

1 ທີ່ດິນກະສິກຳ ເນື້ອທີ່ດິນກະສິກຳເທົ່າເກົ່າ:

2 ທີ່ດິນປຸກສ້າງ ມີເນື້ອທີ່ບໍ່ໄດ້ເພີ່ມຂຶ້ນ: ຂຶ້ນ ເພື່ອຮອງຮັບການຍ້າຍບ້ານໃນອະນາຄົດ.

3 ທີ່ດິນວັດທະນະທຳ ເພີ່ມຂຶ້ນເລັກໜ້ອຍຍ້ອນກຳນົດເຂື່ອມຕໍ່ເຂດປ່າຊ້າບ້ານ.

4 ທີ່ດິນປ່າໄມ້ ມີເນື້ອທີ່ເພີ່ມຂຶ້ນຍ້ອນໄດ້ກຳນົດເຂດປ່າປ້ອງກັນແຫລ່ງນ້ຳຕ່າງໆ.

5 ທີ່ດິນຄົມມະນາຄົມ ມີເນື້ອທີ່ບໍ່ມີການເພີ່ມຂຶ້ນ

6 ທີ່ດິນບໍລິເວນນ້ຳ ມີເນື້ອທີ່ເພີ່ມຂຶ້ນ ຍ້ອນວ່າ: ໄດ້ມີການກຳນົດເຂດສະຫງວນແຄມນ້ຳເຊບັ້ງຫຽງ ແລະ ເຂດສະຫງວນແຄມຫ້ວຍນ້ຳນ້ອຍຕ່າງໆຈຶ່ງເຮັດໃຫ້ທີ່ດິນບໍລິເວນນ້ຳມີເນື້ອທີ່ເພີ່ມຂຶ້ນ.

ຕາຕະລາງທີ 10 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ

ລ/ດ	ປະເພດການນຳໃຊ້	ເນື້ອທີ່ນຳໃຊ້ ປະຈຸບັນ (ha)	ກວມສ່ວນ ຮ້ອຍ (%)	ເນື້ອທີ່ແຜນ ຈັດສັນ (ha)	ກວມສ່ວນ ຮ້ອຍ (%)	ເປີເຊັນການ ປ່ຽນແປງ (%)
1	ທີ່ດິນທີ່ດິນກະສິກຳ	334.6340	72.44	289.42	64.60	-7.84
2	ທີ່ດິນປຸກສ້າງ	11.9572	2.59	14.4564	3.13	0.54
3	ທີ່ດິນວັດທະນະທຳ	9.72	2.10	8.99	1.95	-0.15
4	ທີ່ດິນປ່າໄມ້	39.59	8.57	38.14	8.26	-0.31
5	ທີ່ດິນຄົມມະນາຄົມ	2.05	0.44	2.59	0.56	0.12
6	ທີ່ດິນບໍລິເວນນ້ຳ	60.710	13.14	99.343	21.51	8.37
ລວມເນື້ອທີ່ທັງຫມົດ		461.9455	100.00	461.9455	100	

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025

ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ລະຫວ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ



ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ

V. ທ່າແຮງໃນການພັດທະນາທີ່ດິນ

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານ ເພຍກ່າ ເປັນບ້ານໜຶ່ງທີ່ມີທ່າແຮງໃນການປູກພືດອາຍຸສັ້ນ ເປັນຕົ້ນແມ່ນ ປູກເຂົ້າ ແລະ ພືດກະສິກຳທົ່ວໄປ ນອກຈາກນີ້ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ ປະກອບມີ:

1) ການປູກເຂົ້າ
2) ການລ້ຽງສັດໃຫ່ຍປະເພດງົວ, ຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານເພຍກ່າ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານ ເຊິ່ງ ໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ.
- ສົ່ງເສີມໂຄງການລ້ຽງສັດໃຫຍ່ ແລະ ສັດນ້ອຍ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜ່າງເສັ້ນທາງພາຍໃນບ້ານ.

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜນງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ ເພື່ອລົບລ້າງຄວາມທຸກຈົນຂອງທ້ອງຖິ່ນ ຕາມແນວທາງນະ�โยบายຂອງພັກ ແລະ ລັດຖະບານວາງອອກ.

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນ ບັນດາຂະແໜງການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງກົດລະບຽບໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

6.1 ການຄຸ້ມຄອງ ທີ່ດິນກະສິກຳ

ທີ່ດິນກະສິກຳຂອງບ້ານເພຍກ່າ ປະກອບມີ: ດິນນາ, ດິນສວນ, ດິນປູດພືດກະສິກຳທົ່ວໄປ, ການຄຸ້ມຄອງດິນກະສິກຳແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ.

6.2 ການຄຸ້ມຄອງທີ່ດິນປຸກສ້າງ

ດິນປຸກສ້າງຂອງບ້ານເພຍກ່າ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ ແລະ ດິນແຮຂະຫຍາຍການປຸກສ້າງ, ການຄຸ້ມຄອງປົກປັກຮັກສາແມ່ນໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໂດຍສະເພາະ ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ

ທີ່ດິນວັດທະນະທຳ ແມ່ນໄດ້ກຳນົດເປັນທີ່ດິນສັກສິດຂອງບ້ານເພຍກ່າ ຕາມລະບຽບການຄວາມເຊື່ອຖືໃຫ້ຖືກຕ້ອງຕາມກົດໝາຍ, ທີ່ດິນປະຫວັດສາດ, ປົກປັກຮັກສາຄວາມອຸດົມສົມບູນຂອງພູມີປະເທດໃຫ້ຖືກຕາມລະບຽບກົດໝາຍ. ບ້ານເພຍກ່າ ປະກອບມີ: ດິນວັດ, ດິນປ່າຊ້າ ແລະ ດິນປ່າມະເຫສັກ. ການຄຸ້ມຄອງປົກປັກຮັກສາແມ່ນມອບໃຫ້ການຈັດຕັ້ງຂອງບ້ານ ເປັນຜູ້ຄຸ້ມຄອງຕາມລະບຽບກົດໝາຍ ແລະ ຮິດຄອງປະເພນີ ຫ້າມນຳໃຊ້ທີ່ດິນດັ່ງກ່າວໃນຈຸດປະສົງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

6.4 ການຄຸ້ມຄອງ ທີ່ດິນປ່າໄມ້

ທີ່ດິນປ່າໄມ້ປະກອບມີຄື: ດິນປ່າເລົ່າອ່ອນ, ດິນປ່າໄມ້ກະຊະ, ທີ່ດິນປ່າໄມ້ແມ່ນຊັບພະຍາກອນອັນລ້ຳຄ່າ, ມີລະບົບນິເວດສະເພາະຂອງມັນ ຊຶ່ງປະກອບມີຊີວະນາໆພັນແຫຼ່ງນ້ຳ, ສັດປ່າ ແລະ ຕົ້ນໄມ້ຫຼາຍຊະນິດທີ່ເກີດຕາມທຳມະຊາດ; ການຄຸ້ມຄອງແມ່ນມອບໃຫ້ອຳນາດການປົກຄອງທ້ອງຖິ່ນ ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂອງຂັ້ນເມືອງ ແລະ ຂັ້ນແຂວງ ອອກລະບຽບການໃນການຄຸ້ມຄອງ ແລະ ປົກປັກຮັກສາ.

6.5 ການຄຸ້ມຄອງ ທີ່ດິນຄົມມະນາຄົມ

ລະບົບຕະໜ່າງເສັ້ນບ້ານເພຍກ່າ ເມືອງຈໍາພອນ ແຂວງສະຫວັນນະເຂດ ແມ່ນປະກອບມີ 02 ປະເພດຄື:

- ທາງປະເພດທີ 1: ແມ່ນເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຫາບ້ານເຊິ່ງໄດ້ກໍານົດຄວາມກວ້າງ 15 ແມັດ.
- ທາງປະເພດທີ 2: ແມ່ນເສັ້ນທາງຮ່ອມ, ທາງຊອຍ ພາຍໃນບ້ານເຊິ່ງກໍານົດຄວາມກວ້າງ 6-8 ແມັດ.

ການຄຸ້ມຄອງທີ່ດິນໂຍທາທິການ ແລະ ຂົນສົ່ງ ແມ່ນມອບໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ເປັນຜູ້ຄຸ້ມຄອງຕາມກົດໝາຍທາງຫຼວງ ແລະ ລະບຽບການຕ່າງໆຂອງຂະແໜງການທີ່ກ່ຽວຂ້ອງ.

6.6 ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ

ສໍາລັບທີ່ດິນບໍລິເວນນໍ້າ ປະກອບມີ: ແມ່ນນໍ້າເຊຈໍາພອນ, ໜອງເຊຂາດ, ໜອງສະຫຼອງຂຽງ, ໜອງລວມບ້ານ ແລະ ເຂດສະຫງວນແຄມນໍ້າ. ການຄຸ້ມຄອງທີ່ດິນບໍລິເວນນໍ້າຂອງບ້ານ ແມ່ນໄດ້ກໍານົດຕາມແຜນຈັດສັນທີ່ ໝາຍໄວ້. ນອກນັ້ນ, ຍັງມີການສະຫງວນແຄມເຊຈໍາພອນໄວ້ເບື້ອງລະ 50 ແມັດ, ຮ່ອງຫ້ວຍຕາດມີການສະຫງວນແຄມຫ້ວຍໄວ້ເບື້ອງລະ 20 ແມັດ. ເພື່ອເປັນການປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມນ້ໍາ, ແຄມຫ້ວຍຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ. ດິນບໍລິເວນນໍ້າຂອງບ້ານ ແມ່ນໄດ້ກໍານົດຕາມແຜນຈັດສັນທີ່ໝາຍໄວ້ຢູ່ໃນແຜນທີ່ ແລະ ມອບໃຫ້ບ້ານເປັນຜູ້ຄຸ້ມຄອງອອກລະບຽບການ ແລະ ມາດຕາການໃນການຄຸ້ມຄອງ.

VII. ການຫັນປ່ຽນປະເພດທີ່ດິນ

ໃນກໍລະນີມີການຫັນປ່ຽນການນໍາໃຊ້ທີ່ດິນປະເພດໜຶ່ງໄປສູ່ປະເພດອື່ນ ທີ່ໄດ້ກໍານົດໄວ້ໃນບົດແຜນຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ແລະ ໄດ້ຮັບຮອງຈາກ ອົງການປົກຄອງທ້ອງຖິ່ນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການກະສິກໍາ ແລະ ສິ່ງແວດລ້ອມໄດ້ວາງອອກ. (ມີເອກະສານແນະນໍາສະເພາະ).

VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງການນໍາໃຊ້ທີ່ດິນ ແລະ ປ່າໄມ້ຂັ້ນບ້ານເພື່ອໃຫ້ແຜນການດັ່ງກ່າວຖືກຈັດຕັ້ງປະຈັດຕັ້ງປະຕິບັດໄປຕາມແຜນທີ່ວາງໄວ້ໃຫ້ມີປະສິດທິຜົນ, ອໍານາດການປົກຄອງເມືອງ, ອໍານາດການປົກຄອງບ້ານ ແລະ ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນກະສິກໍາ ແລະ ປ່າໄມ້ຂອງບ້ານ ຕ້ອງໄດ້ເຮັດໜ້າທີ່ເປັນຜູ້ຊີ້ນໍາ-ນໍາພາ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນດັ່ງລຸ່ມນີ້:

8.1. ການຈັດຕັ້ງ

ຄະນະຮັບຜິດຊອບວຽກງານການວາງແຜນຈັດສັນ ແລະ ຄຸ້ມຄອງນໍາໃຊ້ທີ່ດິນຂອງບ້ານ ຕ້ອງປະກອບມີ: ບຸກຄົນທີ່ມີໜ້າທີ່ຕໍາແໜ່ງທີ່ສໍາຄັນໃນອໍານາດການປົກຄອງບ້ານ, ຮັບຜິດຊອບວຽກງານຊີ້ນໍາ, ກວດກາ ແລະ ບໍລິຫານຕ່າງໆ (ເອກະສານຊ້ອນທ້າຍທີ 07)

8.2. ບຸກຄະລາກອນ

ນາຍບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ (ຊາວໜຸ່ມ, ແມ່ຍິງ ແລະ ແນວໂຮມ), ກອງຫຼວນ, ປ້ອງກັນ, ປ່າໄມ້ບ້ານ ແລະ ທີ່ດິນບ້ານ.

8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ

- ຈັດຕັ້ງປະຕິບັດມະຕິຄໍາສັ່ງ, ແຈ້ງການ ຂອງເມືອງ, ແຂວງ ກ່ຽວກັບການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ປ່າໄມ້.
- ຈັດຕັ້ງປະຕິບັດການກວດກາ, ຕິດຕາມ, ວັດແທກຂອບເຂດດິນທໍາການຜະລິດ ໃຫ້ແຕ່ລະຄອບຄົວ, ຊີ້ນໍາແຕ່ລະຄອບຄົວໃນການພັດທະນາທີ່ດິນ, ສົ່ງເສີມການປູກພືດເປັນສິນຄ້າ, ຄຸ້ມຄອງ, ປົກປັກຮັກສາ, ປູກໄມ້,

ຟື້ນຟູປ່າ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ຢ່າງມີປະສິດທິຜົນ, ຕາມແຜນການ ແລະ ລະບຽບການທີ່ໄດ້ຮັບການອະນຸມັດແລ້ວ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

- ໂຄສະນາສຶກສາອົບຮົມກ່ຽວກັບຄວາມສຳຄັນ ແລະ ຄຸນປະ�โຫຍດຂອງປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ, ສັດປ່າ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມທຳມະຊາດ ໃຫ້ປະຊາຊົນໃນບ້ານຂອງຕົນເຂົ້າໃຈ.
- ຕິດຕາມ, ເກັບກຳສະພາບການປ່ຽນແປງຂອງປ່າໄມ້, ສິ່ງແວດລ້ອມ ແລະ ສະພາບການເຄື່ອນໄຫວວຽກງານປ່າໄມ້ ໃນຂອບເຂດບ້ານຂອງຕົນ ແລ້ວລາຍງານໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ຈັດຕັ້ງປະຊາຊົນຄຸ້ມຄອງ ປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດບ້ານຂອງຕົນ
- ສ້າງລະບຽບການສະເພາະໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ-ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນບ້ານໃຫ້ຖືກຕ້ອງກັບສະພາບຕົວຈິງຂອງບ້ານຕົນ.
- ສົ່ງເສີມການເຮັດວາຊີບກະສິກຳຄົງທີ່ໃຫ້ປະຊາຊົນພາຍໃນບ້ານ ແນໃສ່ຈຳກັດ ແລະ ກ້າວໄປເຖິງບ່ອນ ຍຸດຕິການຕັດໄມ້ທຳລາຍປ່າ ແລະ ເພື່ອປົກປັກຮັກສາສິ່ງແວດລ້ອມທຳມະຊາດ.

8.4. ຂອບເຂດສິດ

- ກວດກາການອະນຸມັດຕັດໄມ້ ຂອງປະຊາຊົນພາຍໃນບ້ານຕົນ ຕາມລະບຽບການ.
- ຕິດຕາມກວດກາ ແລະ ສະກັດກັ້ນ ການລ່າເນື້ອ ແລະ ຊື້ຂາຍສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ.
- ຕ້ານ ແລະ ສະກັດກັ້ນ ການເຄື່ອນໄຫວທີ່ມີຜົນກະທົບຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ເຊັ່ນ: ການທຳລາຍຕໍ່ຊັບພະຍາກອນປ່າໄມ້, ສັດນ້ຳ, ສັດປ່າ ແລະ ແຫຼ່ງນ້ຳຢ່າງທັນການ.
- ເຂົ້າຮ່ວມ ແລະ ປະກອບຄຳເຫັນຕໍ່ກອງປະຊຸມຕາມການເຊື້ອເຊີນ.
- ຮຽກປະຊຸມ, ຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ .
- ປະຕິບັດສິດອື່ນໆ ຕາມຂັ້ນເທິງມອບໝາຍສະເພາະ ຫຼື ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

8.5. ລະບອບແບບແຜນວິທີເຮັດວຽກ

ແບບແຜນວິທີເຮັດວຽກຂອງຄະນະຮັບຜິດຊອບວາງແຜນຈັດສັນ ແລະ ຄຸ້ມຄອງນຳໃຊ້ທີ່ດິນຂອງບ້ານມີດັ່ງນີ້:

- ປະຕິບັດຫຼັກການເຮັດວຽກແບບລວມສູນປະຊາທິປະໄຕ,ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນ
- ມີແຜນການ, ແຜນກົດຈະກຳລະອຽດ, ການແກ້ໄຂວຽກງານຢ່າງມີຈຸດສຸມ, ເປົ້າໝາຍ ແລະ ຄາດໝາຍ.
- ການເຄື່ອນໄຫວວຽກງານ ບົນພື້ນຖານການປະສານສົມທົບ ແລະ ມີຄວາມເປັນເອກະພາບພາຍໃນ.
- ທຸກໜ້າວຽກຕ້ອງມີການສຳຫຼວດ, ກວດກາ, ສະຫຼຸບຖອດຖອນບົດຮຽນ ຕົລາຄາຜົນໄດ້ ຜົນເສຍລວມທັງສາເຫດຕ່າງໆຢ່າງຖືກຕ້ອງກັບສະພາບຕົວຈິງ, ປະຕິບັດລະບອບການລາຍງານເປັນປະຈຳ.

8.6. ການຕິດຕາມກວດກາ

ການຕິດຕາມກວດກາຈັດຕັ້ງປະຕິບັດ ແມ່ນຈະຕ້ອງໄດ້ດຳເນີນຫລັງຈາກສຳເລັດວຽກວາງແຜນການນຳໃຊ້ທີ່ດິນໄດ້ມີການຈັດພິທີປະກາດມອບຮັບ. ເພື່ອເປັນການກະຕຸ້ນ ແລະ ເຕືອນໃຫ້ຊາວບ້ານໃນການປະຕິບັດແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ທີ່ໄດ້ປະກາດຮັບຮອງເອົາ, ເພື່ອກວດກາເບິ່ງຄວາມຖືກຕ້ອງ, ຊຶ່ງຖ້າຫາກຜົນການຕິດຕາມກວດກາອອກມາໃນທາງບວກແຜນການດັ່ງກ່າວກໍ່ຈະບໍ່ຖືກດັດແປງແກ້ໄຂແຕ່ຖ້າຫາກບໍ່ຖືກຕ້ອງກັບແຜນການດັ່ງກ່າວ ແມ່ນຈະຕ້ອງໄດ້ຖືກພິຈານາຄືນ ແລະ ດັດແປງ ເພື່ອໃຫ້ອົງການ ຈັດຕັ້ງດັ່ງກ່າວນີ້ສາມາດເຄື່ອນໄຫວໄດ້ດີ ໃນໄລຍະທຳອິດຂອງການດຳເນີນການກວດກາ ແມ່ນຍັງຕ້ອງການຄວາມຊ່ວຍ ເຫລືອທັງທາງດ້ານວິຊາການ, ງົບປະມານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ແຂວງ , ເມືອງ, ກຸ່ມບ້ານຕະຫລອດຮອດໂຄງ ການທີ່ກ່ຽວຂ້ອງ.

ເອກະສານອ້າງອີງ

1. ກົດໝາຍ ວ່າດ້ວຍ ທີ່ດິນ, ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
2. ກົດໝາຍ ວ່າດ້ວຍ ທາງຫຼວງ ເລກທີ 04/99ສພຊ, ລົງວັນທີ 3 ເມສາ 1999
3. ກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ, ເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017, 2020 ແລະ 2022
4. ກົດໝາຍ ວ່າດ້ວຍ ປ່າໄມ້, ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
5. ດຳລັດ ວ່າດ້ວຍ ປ່າສະຫງວນ, ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023.
6. ດຳລັດ ວ່າດ້ວຍ ທີ່ດິນບໍລິເວນນ້ຳ ສະບັບເລກທີ 350/ລບ, ລົງວັນທີ 13 ພະຈິກ 2023
7. ແຈ້ງການຂອງກະຊວງພະລັງງານ ແລະ ບໍ່ແຮ່ ເລກທີ 1585/ພບ.ຫກ,ລົງວັນທີ 12 ມັງກອນ 2018
8. ຄູ່ມືແນະນຳ ກ່ຽວກັບ ສ້າງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ, ສະບັບເລກທີ 2191/ກຊສ.ກທດ, ລົງວັນທີ 12 ພຶດສະພາ 2022

ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍທີ່ 1: ໜັງສືສະເໜີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ ເລກທີ **84** /ຫກສມ.ຈພ

ຈໍາພອນ, ວັນທີ 20 ພະຈິກ 2025

ໜັງສືສະເໜີ

ຮຽນ: ທ່ານເຈົ້າເມືອງຈໍາພອນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ສະເໜີທ່ານເຈົ້າເມືອງອອກຂໍ້ຕົກລົງວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຈັດສັນການນໍາໃຊ້ທີ່ດິນບ້ານ ສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ເມືອງຈໍາພອນ, ແຂວງສະຫວັນນະເຂດ.

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງກະສິກໍາ ແລະ ສິ່ງແວດລ້ອມ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ/ນະຄອນ.
- ອີງຕາມ ແຜນກົດຈະກໍາຂອງໂຄງການຄຸ້ມຄອງຊັບພະຍາກອນແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.
- ອີງຕາມ ບົດບັນທຶກຜ່ານ(ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ແລະ ຮັງຮອງເອົາແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານຄັ້ງວັນທີ 18 ພະຈິກ 2025.

ຫົວໜ້າຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງ ຂໍຖືເປັນກຽດຢ່າງສູງຮຽນສະເໜີມາຍັງທ່ານເຈົ້າເມືອງ ພິຈາລະນາລົງລາຍເຊັນໃສ່ຂໍ້ຕົກລົງຮັບຮອງ ແລະ ປະກາດໃຊ້ແຜນຈັດສັນທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ພາຍໃຕ້ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນໄປດ້ວຍຄວາມສະດວກ ແລະ ໃຫ້ມີຜົນສໍາເລັດ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມລະບຽບການດ້ວຍ.

ຫົວໜ້າຫ້ອງການ

ຄອນສະຫວັນ ດວງມາລາ

ເອກະສານຊ້ອນທ້າຍທີ່ 2: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານດົງເມືອງ ຕິດກັບບັນດາບ້ານໃກ້ຄຽງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານເພຍກ່າ

ເລກທີ 123/ນບ

ວັນທີ 04/11/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າ ຕິດກັບ ບ້ານຊະຄຶນໃຕ້

ໃນຄັ້ງວັນທີ 04/11/2025 ເວລາ 13:ໂມງ.30 ນາທີ ທີ່ຫ້ອງການບ້ານເພຍກ່າ ໄດ້ເຮັດບົດບັນທຶກຮ່ວມກັນລະຫວ່າງອໍານາດການປົກຄອງບ້ານເພຍກ່າ ແລະ ອໍານາດການປົກຄອງບ້ານຊະຄຶນໃຕ້ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານເພຍກ່າ, ການຈັດຕັ້ງບ້ານຊະຄຶນໃຕ້, ເຖົ້າແກ່ແນວໂຮມບ້ານເພຍກ່າ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

❖ ທິດຕາເວັນຕົກ ຕິດກັບບ້ານ ຊະຄຶນໃຕ້ (ເອົາເຊເປັນແດນ)

ເລີ່ມແຕ່ກົກດູ່ໃຫຍ່ນາລຸງ ເສີ່ມ ວັງດອນທ່ອນ ຂຶ້ນຕາມລໍາເຊຮອດວັງສວນອ້ອຍ ນາແມ່ເຖົ້າລົນ

ນາຍບ້ານເພຍກ່າ

ເຮດຖາ ວົງໄກສີ

ນາຍບ້ານຊະຄຶນໃຕ້

ອົ່ງ ກຸສົນ

UENG KOUSONH

ຜູ້ບັນທຶກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານເພຍກ່າ

ເລກທີ 125/ນບ

ວັນທີ 04/11/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫว่ານບ້ານເພຍກ່າ ຕິດກັບ ບ້ານລໍາບອງ

ໃນຄັ້ງວັນທີ 04/11/2025 ເວລາ 14:ໂມງ.30 ນາທີ ທີ່ຫ້ອງການບ້ານເພຍກ່າ ໄດ້ເຮັດບົດບັນທຶກຮ່ວມກັນລະຫว่ານອໍານາດການປົກຄອງບ້ານເພຍກ່າ ແລະ ອໍານາດການປົກຄອງບ້ານລໍາບອງ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫว่ານບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແจ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານເພຍກ່າ, ການຈັດຕັ້ງບ້ານຊະຄຶນໃຕ້, ເຖົ້າແກ່ແນວໂຮມບ້ານເພຍກ່າ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

❖ ທິດຕາເວັນອອກ ຕິດກັບບ້ານ ລໍາບອງ

ເລີ່ມແຕ່ວັງສວນອ້ອຍນາແມ່ເຖົ້າລົນເລາະຕາມຮອງເຕີຍຮອດນາພໍ່ເຖົ້າຄຸນມີ, ທົ່ງໜອງແປນຕັດຊື່ຜ່ານໜອງແປນຮອດປາກເປັ່ງໜອງແປນຕົກໃສ່ໜອງສະຫຼອງຂຽງ ເຮືອນສະເດັດບຸນອຸ້ມ.

ນາຍບ້ານເພຍກ່າ	ນາຍບ້ານລໍາບອງ	ຜູ້ບັນທຶກ
ເສດຖາ ວົງໄກສີ	ທອງຫໍ່ ສຸວັນນະລາດ	ສີນທາວັນ ວົງຕາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານເພຍກ່າ

ເລກທີ 127/ນບ

ວັນທີ 05/11/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າ ຕິດກັບ ບ້ານຫົວເມືອງ

ໃນຄັ້ງວັນທີ 05/11/2025 ເວລາ 10:ໂມງ.30 ນາທີ ທີ່ຫ້ອງການບ້ານເພຍກ່າ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານເພຍກ່າ ແລະ ອໍານາດການປົກຄອງບ້ານຫົວເມືອງ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແจ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານເພຍກ່າ, ການຈັດຕັ້ງບ້ານຫົວເມືອງ, ເຖົ້າແກ່ແນວໂຮມບ້ານເພຍກ່າ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

❖ ທິດໃຕ້ ຕິດກັບບ້ານ ຫົວເມືອງ

ເລີ່ມແຕ່ເຮືອນສະເດັດບຸນອຸ້ມໜອງສະຫຼອງຂຽງ ເລາະໄປຕາມໜອງສະຫຼອງຂຽງ ລັດໃສ່ກົກມ່ວງໃຫຍ່ ເນັ້ງ ຊໍ້ໄປຕົກໃສ່ປາກກຸດເຊຈໍາພອນ.

ນາຍບ້ານເພຍກ່າ

ເພດຖາ ວົງໄກສີ

ນາຍບ້ານຫົວເມືອງ

ຜູ້ບັນທຶກ

ເພັດສະໝອນ ອິນທິລາດ

Phetsamone INTHILATH

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ

ບ້ານເພຍກ່າ

ເລກທີ 129 /ນບ

ວັນທີ 05/11/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າ ຕິດກັບ ບ້ານໂນນສີທັນ

ໃນຄັ້ງວັນທີ 05/11/2025 ເວລາ 13:ໂມງ.30 ນາທີ ທີ່ຫ້ອງການບ້ານເພຍກ່າ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານເພຍກ່າ ແລະ ອໍານາດການປົກຄອງບ້ານໂນນສີທັນ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແจ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານເພຍກ່າ, ການຈັດຕັ້ງບ້ານໂນນສີທັນ, ເຖົ້າແກ່ແນວໂຮມບ້ານເພຍກ່າ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

❖ ທິດຕາເວັນຕົກ ຕິດກັບບ້ານ ໂນນສີທັນ

ເລີ່ມແຕ່ຈຸດເຂດບ້ານຫົວເມືອງເລາະໄປຕາມເຊຮອດຈຸດກຸດປາກເຊຈໍາພອນ

ນາຍບ້ານເພຍກ່າ	ນາຍບ້ານໂນນສີທັນ	ຜູ້ບັນທຶກ
ເສດຖາ ວົງໄກສີ	ສົມພອນ ປະເສີດ	ສົມພອນ ປະເສີດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍາພອນ
ບ້ານເພຍກ່າ

ເລກທີ 130 /ນຍ
ວັນທີ 06/11/2025

ບົດບັນທຶກ

ຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າ ຕິດກັບ ບ້ານແກ້ງປຸນ

ໃນຄັ້ງວັນທີ 06/11/2025 ເວລາ 13:ໂມງ.30 ນາທີ ທີ່ຫ້ອງການບ້ານເພຍກ່າ ໄດ້ເຮັດບົດບັນທຶກຮ່ວມກັນ ລະຫວ່າງອໍານາດການປົກຄອງບ້ານເພຍກ່າ ແລະ ອໍານາດການປົກຄອງບ້ານແກ້ງປຸນ ໂດຍໄດ້ມີການລົງສໍາຫຼວດ-ວັດແທກເຂດແດນລະຫວ່າງບ້ານກັບບ້ານຕົວຈິງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ທັງໝົດ 22 ທ່ານ, ຍິງ 5 ທ່ານ ເຊິ່ງມີລາຍຊື່ໃນໃບລົງທະບຽນ.

ເພື່ອເຮັດໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດ ຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ບ້ານມີເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະຮັບຜິດຊອບວຽກງານຈັດສັນທີ່ດິນຂັ້ນເມືອງ, ຄະນະທີມງານຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ, ວິຊາການຈາກຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ ໄດ້ລົງສໍາຫຼວດກວດກາເຂດແດນຮ່ວມກັບການຈັດຕັ້ງບ້ານເພຍກ່າ, ການຈັດຕັ້ງບ້ານແກ້ງປຸນ, ເຖົ້າແກ່ແນວໂຮມບ້ານເພຍກ່າ, ພໍ່ແມ່ປະຊາຊົນ ເຫັນດີເປັນເອກະພາບກັນດັ່ງນີ້.

❖ ທິດຕາເວັນຕົກ ຕິດກັບບ້ານ ແກ້ງປຸນ

ເລີ່ມແຕ່ກຸດປາກເຊຈໍາພອນຂຶ້ນຕາມລໍາເຊໄປຮອດກົກດູ່ໃຫຍ່ນາລຸງ ເສີ່ນ ວັງດອນທອນ.

ນາຍບ້ານເພຍກ່າ	ນາຍບ້ານແກ້ງປຸນ	ຜູ້ບັນທຶກ
ເຂດຖາ ວົງໄກສີ	ກ້ານສວ.	ສີນເລນ ສົນຕາ

ເອກະສານຊ້ອນທ້າຍທີ່ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ກຳນົດເຂດແລະກຳນົດທີ່ດິນແຕ່ລະປະເພດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ
ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ບົດບັນທຶກ ກອງປະຊຸມປຶກສາຫາລື
ກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ

ໃນຕອນເຊົ້າຂອງວັນພຸດ ວັນທີ 04 ພະຈິກ 2025 ເວລາ 8 ໂມງ 30 ນາທີ, ສະຖານທີ່ວັດບ້ານເພຍກ່າ ໄດ້ຈັດກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດ, ໂດຍການເປັນປະທານຂອງທ່ານ ຄອນສະຫວັນ ດວງມາລາ ກຳມະການພັກເມືອງ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ຂັ້ນເມືອງແຂວງມີຕາງໜ້າຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່, ຂະແໜງຊັບພະຍາກອນນ້ຳ, ຂັ້ນເມືອງມີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງວ່າການເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຊາວໜຸ່ມເມືອງ, ຫ້ອງການສະຫະພັນແມ່ຍິງເມືອງ, ຫ້ອງການຍຸຕິທຳເມືອງ, ບ້ານການການເງິນເມືອງ, ກອງບັນຊາການປກສເມືອງ, ກອງບັນຊາການປກຊເມືອງ, ການຈັດຕັ້ງບ້ານສີວິໄລ ແລະ ການຈັດຕັ້ງບ້ານຕິດແປະ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ານສີວິໄລ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 61 ຄົນ, ຍິງ 30 ຄົນ, ມີລາຍຊື່ລະອຽດຕາມໃບລົງທະບຽນ:

ຈາກນັ້ນທ່ານ ຄອນສະຫວັນ ດວງມາລາ ກຳມະການພັກເມືອງ ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ໄດ້ມີຄຳເຫັນພ້ອມທັງນຳພາດຳເນີນກອງປະຊຸມ ສະເໜີໃຫ້ແຕ່ລະພາກສ່ວນທີ່ເຂົ້າຮ່ວມກອງປະຊຸມ ມີຄຳເຫັນຢ່າງກົງໄປກົງມາ. ຊຶ່ງກອງປະຊຸມໄດ້ເຫັນດີເປັນເອກະພາບກັນດັ່ງນີ້:

1. ເຫັນດີໃຫ້ທີມງານວິຊາການພາກສະໜາມຮ່ວມກັນເກັບກຳກ່ຽວກັບບັນດາຂໍ້ມູນທີ່ກ່ຽວພັນກ່ຽວກັບວຽກງານດັ່ງກ່າວ ເປັນຕົ້ນແມ່ນແຜນພັດທະນາເສດທະກິດ-ສັງຄົມຂອງບ້ານ ແລະ ປະເພດການນຳໃຊ້ທີ່ດິນຂອງບ້ານ.
2. ເຫັນດີໃຫ້ທີມງານວິຊາການພາກສະໜາມແນະນຳແຕ່ລະຂັ້ນຕອນການຈັດຕັ້ງປະຕິບັດວຽກງານຢູ່ພາກສະໜາມເຊັ່ນ: ຂັ້ນຕອນການສຳຫຼວດ, ຕົກແຕ່ງແຕ້ມແຜນທີ່, ຂັ້ນຕອນສັງລວມຂໍ້ມູນ ແລະ ສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ຂັ້ນຕອນການສ້າງປື້ມແຜນຈັດສັນ ຮ່ວມປະກອບຄຳເຫັນແຕ່ລະຂັ້ນຕອນ.
3. ເຫັນດີໃຫ້ທີມງານວິຊາການພາກສະໜາມສ້າງບົດບັນທຶກຂອບເຂດການຄຸ້ມຄອງຂອງບ້ານລວມ ພ້ອມທັງສະເໜີການຕົກລົງ ແລະ ເຊັນເອົາຮັບຮອງເອົາບົດບັນທຶກຂອບເຂດແດນບ້ານ.

4. ເຫັນດີທີມງານວິຊາການພາກສະໜາມສ້າງແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ແລະ ເຮັດບົດບັນທຶກເພື່ອສະເໜີການຮັບຮອງເອົາແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ.
5. ສັງລວມຂໍ້ມູນທັງໝົດຂອງບ້ານເປັນຕົ້ນຂໍ້ມູນທາງດ້ານເອກະສານ ແລະ ຂໍ້ມູນການແຕ້ມ ເຂົ້າໃນຖານຂໍ້ມູນຂອງບ້ານ (Master Planning).

ກອງປະຊຸມໄດ້ດຳເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ	ຜູ້ບັນທຶກ
ລັດຕະນາ ໄຊຍະບັນຊາ Lathtana XAIYABANXA	ສີທາລາວີລວ ສີວຄຸ

ເອກະສານຊ້ອນທ້າຍທີ່ 4: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າຕິດກັບບ້ານຊະຄຶນໃຕ້, ບ້ານລຳບອງ, ບ້ານຫົວເມືອງ, ບ້ານໂນນສີທັນ, ບ້ານແກ້ງປຸນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ

ບ້ານເພຍກ່າ ທີ່ ບ້ານເພຍກ່າ, ວັນທີ 11 ພະຈິກ 2025

ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານເພຍກ່າ ຕິດກັບບ້ານຊະຄຶນໃຕ້, ບ້ານລຳບອງ, ບ້ານຫົວເມືອງ, ບ້ານໂນນສີທັນ, ບ້ານແກ້ງປຸນ

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າເມືອງຈໍາພອນ ສະບັບເລກທີ 613/ຈມ, ລົງວັນທີ 14 ຕຸລາ 2025, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍຂອງໂຄງການ(ຮ່ວມກັບໂຄງການ IWRM ປີ 2025)
- ອີງຕາມ ກອງປະຊຸມປຶກສາຫາລືວຽກງານກ່ຽວກັບວາງແຜນຈັດສັນ, ກຳນົດເຂດ ແລະ ກຳນົດທີ່ດິນແຕ່ລະປະເພດຮ່ວມກັບບ້ານອ້ອມຂ້າງ ເຊິ່ງໄດ້ຈັດຂຶ້ນຄັງວັນທີ 14 ຕຸລາ 2025.

ເພື່ອໃຫ້ສອດຄ່ອງກັບແນວທາງນະ�โยบายຂອງພັກ ແລະ ລັດຕໍ່ກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ເຮັດໃຫ້ແຕ່ລະບ້ານມີຂອບເຂດຄຸ້ມຄອງທີ່ຈະແຈ້ງ ແລະ ມີຄວາມເປັນເອກະພາບກັນກັບບ້ານທີ່ມີເຂດແດນຕິດຈອດກັນ.

ຄະນະທີມງານວິຊາການຈາກພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈໍາພອນ, ການຈັດຕັ້ງທີ່ກ່ຽວຂ້ອງຂັ້ນເມືອງ ໃນນາມວິຊາການໄດ້ສົມທົບກັບອົງການຈັດຕັ້ງບ້ານ, ພໍ່ແມ່ປະຊາຊົນ ແລະ ບ້ານໃກ້ຄຽງທີ່ມີເຂດແດນຕິດຈອດກັນ ໄດ້ເຫັນດີເປັນເອກະພາບກັນ ກຳນົດຂອບເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານດັ່ງນີ້:

❖ ຄ່າພິກັດບ້ານຊະຄຶນໃຕ້-ບ້ານລຳບອງ ເມືອງຈໍາພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	522249	1825484		ກຳນົດເອົາເລີ້ມແຕ່ກົກດູໃຫຍ່ຫານາລຽງເສີ່ມ ວັງດອນທ່ອນ ຂຶ້ນຕາມລຳເຊຮອດວັງສວນອ້ອຍນາແມ່ເຖົ້າລົນ
2	523184	1824813		ກຳນົດຈຸດເລີ້ມແຕ່ວັງສວນອ້ອຍ, ນາແມ່ເຖົ້າລົນ ເລາະ ຕາມຮ່ອງເຕີຍຮອດນາພໍ່ເຖົ້າຄູນມີ, ທົ່ງໜອງແປນ ຕັດຊື່ ຜ່ານໜອງແປນຮອດປາກເປັ່ງໜອງແປນຕົກໃສ່ໜອງ ສະຫຼອງຂຽງ, ເຮືອນສະເດັດບຸນອຸ້ມ.
ລວມໄລຍະ			4152	

❖ ຄ່າພິກັດບ້ານລຳບອງ-ບ້ານຫົວເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	523184	1824813		ກຳນົດຈຸດເລີ້ມແຕ່ວັງສວນອ້ອຍ, ນາແມ່ເຖົ້າລົນ ເລາະຕາມຮ່ອງເຕີຍຮອດນາພໍ່ເຖົ້າຄູນມີ, ທົ່ງໜອງແປນ ຕັດຊື່ຜ່ານໜອງແປນຮອດປາກເປັ່ງໜອງແປນຕົກໃສ່ໜອງສະຫຼອງຂຽງ, ເຮືອນສະເດັດບຸນອຸ້ມ.
2	523310	1822398		ກຳນົດຈຸດເລີ້ມແຕ່ເຮືອນສະເດັດບຸນອຸ້ມໜອງສະຫຼອງຂຽງ ເລາະໄປຕາມໜອງສະຫຼອງຂຽງ ລັດໃສ່ກົກມ່ວງໃຫຍ່ ເນັ່ງຊື່ໄປຕົກໃສ່ປາກກຸດເຊຈຳພອນ.
ລວມໄລຍະ			3455	

❖ ຄ່າພິກັດບ້ານຫົວເມືອງ-ບ້ານໂນນສີທັນ ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	523310	1822398		ກຳນົດຈຸດເລີ້ມແຕ່ເຮືອນສະເດັດບຸນອຸ້ມໜອງສະຫຼອງຂຽງ ເລາະໄປຕາມໜອງສະຫຼອງຂຽງ ລັດໃສ່ກົກມ່ວງໃຫຍ່ ເນັ່ງຊື່ໄປຕົກໃສ່ປາກກຸດເຊຈຳພອນ.
2	521921	1822227		ກຳນົດຈຸດເລີ້ມແຕ່ຈຸດເຂດແດນບ້ານຫົວເມືອງ ເລາະຕາມເຊຮອດຈຸດກຸດປາກເຊຈຳພອນ
ລວມໄລຍະ			1965	

❖ ຄ່າພິກັດບ້ານໂນນສີທັນ-ບ້ານແກ້ງປູນ ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	521921	1822227		ກຳນົດຈຸດເລີ້ມແຕ່ຈຸດເຂດແດນບ້ານຫົວເມືອງ ເລາະຕາມເຊຮອດຈຸດກຸດປາກເຊຈຳພອນ
2	521531	1822340		ເລີ້ມແຕ່ກຸດປາກເຊຈຳພອນຂຶ້ນຕາມລຳເຊໄປຮອດກົກດູ່ໃຫຍ່ນາລຸງ ເສີ່ມ ວັງດອນທອນ.
ລວມໄລຍະ			2412	

❖ ຄ່າພິກັດບ້ານແກ້ງປູນ-ບ້ານຊະຄຶນໃຕ້ ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)

ລ/ດ	E	N	Distance (m)	ໝາຍເຫດ
1	521531	1822340		ເລີ່ມແຕ່ກຸດປາກເຊ ຈໍາພອນຂຶ້ນຕາມລໍາເຊໄປຮອດກົກດູ່ໃຫຍ່ນາລຸງ ເສີມ ວັງດອນທອນ.
2	522249	1825484		ເລີ່ມແຕ່ກົກດູ່ໃຫຍ່ນາລຸງເສີມ ວັງດອນທ່ອນ ຂຶ້ນຕາມລໍາເຊຮອດວັງສວນອ້ອຍ ນາແມ່ເຖົ້າລົນ
ລວມໄລຍະ			5832	

ແຫຼ່ງຂໍ້ມູນ: ຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ເມືອງຈໍາພອນ ປີ 2025

ກອງປະຊຸມໄດ້ດໍາເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນ ດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ **ຜູ້ບັນທຶກ**

ລັດຕະນາ ໄຊຍະບັນຊາ
Lathtana XAIYABANXA

ເອກະສານຊ້ອນທ້າຍທີ່ 5: ບົດບັນທຶກກອງປະຊຸມສະເໜີຜ່ານແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈໍພອນ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ

ບົດບັນທຶກ

ກອງປະຊຸມຜ່ານ (ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານ ເມືອງຈໍພອນ

ໃນຕອນເຊົ້າຂອງວັນຄານ ວັນທີ 18 ພະຈິກ 2025 ເວລາ 8 ໂມງ 30 ນາທີ, ສະຖານທີ່ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ກອງປະຊຸມຜ່ານ (ຮ່າງ) ແຜນຈັດສັນທີ່ດິນຂັ້ນບ້ານ ໃນ 3 ບ້ານ ແລະ ນຳສະເໜີທ່ານເຈົ້າເມືອງ ພິຈາລະນາ ຮັບຮອງແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ. ໂດຍການເປັນປະທານຂອງທ່ານ ລັດຕະນາ ໄຊຍະບັນຊາ ຄະນະປະຈຳພັກເມືອງ ຮອງປະທານຄະນະກຳມະການປົກຄອງເມືອງ, ຂັ້ນເມືອງແຂວງມີຕາງໜ້າຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່, ຂະແໜງຊັບພະຍາກອນນ້ຳ, ຂັ້ນເມືອງມີ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງວ່າການເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການຊາວໜຸ່ມເມືອງ, ຫ້ອງ ການສະຫະພັນແມ່ຍິງເມືອງ, ຫ້ອງການຍຸຕິທຳເມືອງ, ບ້ານການການເງິນເມືອງ, ກອງບັນຊາການປກສເມືອງ, ກອງບັນຊາການປກຊເມືອງ, ການຈັດຕັ້ງບ້ານສີວິໄລ ແລະ ການຈັດຕັ້ງບ້ານຕິດແປະ ພ້ອມດ້ວຍພໍ່ແມ່ປະຊາຊົນພາຍໃນບ້ານສີວິໄລ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 59 ຄົນ, ຍິງ 07 ຄົນ, ມີລາຍຊື່ລະອຽດຕາມໃບລົງທະບຽນ:

I. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອ.

1. ເພື່ອສະເໜີຜ່ານແຜນຈັດສັນການກຳນົດເຂດ, ກຳນົດປະເພດການນຳໃຊ້ທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ.
2. ເພື່ອໃຫ້ບັນດາທ່ານຕ່າງໜ້າຈາກພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ຕ່າງໜ້າຈາກທີມງານໂຄງການ, ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ພາກສ່ວນຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ, ເລຂາກຸ່ມບ້ານ, ການຈັດຕັ້ງບ້ານທັງ 03 ບ້ານ ແລະ ການຈັດຕັ້ງບ້ານຕິດແປະ ໃຫ້ຊ່ວຍປະກອບຄຳເຫັນ, ຊ່ວຍປັບປຸງແຜນການກຳນົດເຂດ, ການກຳນົດປະເພດທີ່ດິນຂອງບ້ານ ແລະ ບົດແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ເພື່ອເຮັດໃຫ້ແຜນຈັດສັນການນຳໃຊ້ທີ່ດິນຂອງບ້ານ ມີຄວາມເໝາະສົມຕາມທິດທາງແຜນພັດທະນາເສດ ຖະກິດ-ສັງຄົມຂອງເມືອງແນ່ໃສ່ປົກປັກຮັກສາສິ່ງແວດລ້ອມທາງດ້ານທຳມະຊາດໃຫ້ມີຄວາມຍືນຍົງ ແລະ ສອດ ຄ່ອງກັບລະບຽບກົດໝາຍ.
3. ເພື່ອໃຫ້ບັນດາຂະແໜງການຕ່າງໆມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ ແລະ ເຫັນດີເປັນເອກະພາບຕໍ່ແຜນຈັດສັນ.

II. ເນື້ອໃນການດຳເນີນກອງປະຊຸມ:

ຜ່ານການສະເໜີລາຍງານຂອງການຈັດສັນທີ່ດິນຂອງບ້ານ 03 ບ້ານ ຈາກຄະນະທີມງານວິຊາການບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ເອົາໃຈໃສ່ຕິດຕາມ ແລະ ປະກອບຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງຢ່າງກົງໄປກົງມາ ແລະ ມີຄວາມຮັບຜິດຊອບສູງ ເພື່ອໃຫ້ແຜນຈັດສັນມີຄວາມສົມບູນ, ເໝາະສົມ ເຊິ່ງໂດຍລວມແລ້ວເຫັນດີເປັນເອກະພາບກັນ ດັ່ງນີ້:

1. ເຫັນດີເປັນເອກະພາບກັນຮັບຮອງເອົາບົດບັນທຶກເຂດຄຸ້ມຄອງຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ລົງວັນທີ 18 ພະຈິກ 2025.
2. ເຫັນດີເປັນເອກະພາບກ່ຽວກັບແຜນຈັດສັນທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າທີ່ທີມງານວິຊາການສະເໜີຜ່ານ.

ກອງປະຊຸມໄດ້ດຳເນີນມາດ້ວຍຄວາມເຫັນດີເປັນເອກະພາບກັນຮອດເວລາ 16 ໂມງ 00 ນາທີ ຂອງວັນດຽວກັນ ຈຶ່ງໄດ້ປິດລົງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ປະທານກອງປະຊຸມ	ຜູ້ບັນທຶກ
ລັດຕະນາ ໄຊຍະບັນຊາ Lathtana XAIYABANXA	ວິທາລາວ ສົມບັດ

ເອກະສານຊ້ອນທ້າຍທີ່ 6: ເອກະສານສຳພາດຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານໂດຍການເຊັນຮັບຮອງຈາກນາຍບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແບບພິມເກັບກຳຂໍ້ມູນ
ເສດຖະກິດ-ສັງຄົມ ແລະ ການນຳໃຊ້ທີ່ດິນຂອງບ້ານເພຍກ່າ

1. ປະຫວັດຄວາມເປັນມາ

ໃຫ້ເກັບກຳຂໍ້ມູນປະຫວັດຄວາມເປັນມາຂອງບ້ານເຊັ່ນ: ບ້ານເພຍກ່າສ້າງຕັ້ງຂຶ້ນໄດ້ 400 ກວ່າປີ, ຍົກຍ້າຍມາຈາກບ້ານວັງປາກສຸຍ ຫຼັງຈາກນັ້ນປ່ຽນຊື່ມາເປັນບ້ານເພຍກ່າຈົນມາຮອດປະຈຸບັນ.

- ❖ ປະກອບມີ....07.....ໜ່ວຍ;.....104..... ຫຼັງຄາເຮືອນ; .....117..... ຄອບຄົວ
- ❖ ພົນລະເມືອງທັງໝົດ .....611..... ຄົນ, ຍິງ .....324.....ຄົນ;
- ❖ ປະກອບມີ. .....01..... ຊົນເຜົ່າ;

  1.ຊົນເຜົ່າ. ບຸຣ. ມີ ..... ຄອບຄົວ; .....ຫຼັງຄາເຮືອນ,....ຍິງ.....ຄົນ; ສາສະໜາ.....

  2. ຊົນເຜົ່າ.ລາວລຸ່ມ ມີ.117.ຄອບຄົວ; .ຫຼັງຄາເຮືອນ,..104...; ຍິງ..324.....ຄົນ; ສາສະໜາ..ພຸດ...

  3. ຊົນເຜົ່າ..... ... ຄອບຄົວ; .ຫຼັງຄາເຮືອນ,.....ຍິງ.....ຄົນ; ສາສະໜາ.....

  4. ຊົນເຜົ່າ. ..... ຄອບຄົວ; ຫຼັງຄາເຮືອນ.....ຍິງ.....ຄົນ; ສາສະໜາ.....

  5. ຊົນເຜົ່າ. ..... ຄອບຄົວ; ຫຼັງຄາເຮືອນ,.....ຍິງ.....ຄົນ; ສາສະໜາ.....
- ❖ ໄດ້ຮັບນາມມະຍົດເປັນບ້ານ....ວັດທະນະທຳ, ບ້ານປ້ອງກັນຄວາມສະຫງົບດີ, ບ້ານຢຸດຕິການຖ່າຍຊະຊາຍ, ບ້ານມີສີມືແຮງງານ ແລະ ສະຫວັດດີການສັງຄົມ.
- ❖ ອັດຕາເພີ່ມ ແລະ ຫຼຸດລົງຂອງປະຊາກອນ.
  - ການເກີດ.....4..... ..ຄົນ/ປີ;
  - ການຕາຍ.....3..... .....ຄົນ/ປີ.
  - ການຍົກຍ້າຍເຂົ້າ.....0..... ..ຄົນ/ປີ,
  - ການຍ້າຍອອກ.....0..... ຄົນ/ປີ.
- ❖ ໂຄງປະກອບ ການຈັດຕັ້ງຂອງບ້ານ.
  - ຄະນະບ້ານຄົນ;....5.....ຄົນ; ຮອງນາຍບ້ານ 4 ຄົນ, ຍິງ.....0.....ຄົນ.
  - ສະມາຊິກພັກ.....9.....ຄົນ; ຍິງ.....4.....ຄົນ;
  - ຊາວໜຸ່ມ.....12.....ຄົນ; ຍິງ .....4.....ຄົນ
  - ກຳມະບານ.....1.....ຄົນ ຍິງ.....1.....ຄົນ:
  - ສະຫະພັນແມ່ຍິງ.....13.....ຄົນ

2. ທີ່ຕັ້ງ ແລະ ພູມສັນຂອງບ້ານ.

* ທີ່ຕັ້ງ: ເປັນບ້ານອັນດັບທີ.....99.....ຂອງເມືອງ, (ຖ້າບໍ່ມີໃຫ້ເອົານຳຫ້ອງວ່າການປົກຄອງເມືອງ).

ຕັ້ງຢູ່ທິດໃດ ຂອງເມືອງ.....ທິດເໜືອເມືອງ.....ຖ້າບໍ່ມີເບິ່ງໃນແຜນທີ່)

* ນອນໃນກຸ່ມບ້ານ.....ທີ 03.....ກຸ່ມທີ.....

ເຂດຄູ້ມຄອງຂອງບ້ານເພຍກ່າ ມີເຂດຄູ້ມຄອງຕິດກັບ 5 ບ້ານຄື:

- ທິດເໜືອ (N) ຕິດກັບ ບ້ານຊະຄຶນໃຕ້ ເມືອງຈໍາພອນ
- ທິດໃຕ້ (S) ຕິດກັບ ບ້ານຫົວເມືອງ ເມືອງຈໍາພອນ
- ທິດຕາເວັນອອກ (E) ຕິດກັບ ບ້ານລໍາບອງ ເມືອງຈໍາພອນ ແຂວງສະຫວັນນະເຂດ.
- ທິດຕາເວັນຕົກ (W) ຕິດກັບ ບ້ານແກ້ງປູນ ແລະ ບ້ານໂນນສີທັນ ເມືອງຈໍາພອນ.

* ເນື້ອທີ່ທັງໝົດຂອງ ບ້ານ.....461,95.....ຮຕ (ເອົາເນື້ອທີ່ປະຈຸບັນ ຖ້າມີ)

✓ ມີສາຍນ້ຳນ້ຳເຊ: ມີ ☐ ; ບໍ່ມີ ☐ ; ມີ.....01.....ສາຍຄື

1.....ສາຍເຊຈໍາພອນ.....; 4.....

2.....; 5.....

3.....; 6.....

✓ ມີຫ້ວຍ: ມີ ☐ ບໍ່ມີ ☐ ; ມີ.....ສາຍຄື:

1.....; 4.....

2.....; 5.....

3.....; 6.....

✓ ມີເສັ້ນທາງຄົມມະນາຄົມຈັກເສັ້ນ.....01..ເສັ້ນ; ທາງຮ່ອມ.....05..... ເສັ້ນ

✓ ມີຊົນລະປະທານບໍ່? ມີ ☐ :ບໍ່ມີ ☐. ຈັກແຫ່ງ.... .....01.....ແຫ່ງ

✓ ໜອງລວມບ້ານ ມີ ☐ :ບໍ່ມີ ☐. ຈັກໜອງ.... .....01.....ແຫ່ງ

3. ສະນະພູມສດຖະກິດຂອງບ້ານ

- ລາຍຮັບຕົ້ນຕໍມີຫຍັງແດ່? (1)..... ເຮັດນາ..... (2).....(3).....
- ລາຍຮັບສໍາຮອງມີຫຍັງແດ່?: (1).....ລ້ຽງສັດ.....(2).....(3).....
- ສະເລ່ຍປີ.....20,000,000 ກີບ/ຄົນ/ປີ.....

❖ ແຮງງານຕົ້ນຕໍມີຈັກຄົນ: ..350..ຄົນ;ຍິງ..150..ຄົນ, ແຮງງານສໍາຮອງມີ...150..ຈັກຄົນ: ຍິງ..ຄົນ

ຈໍານວນຄົວເຮືອນທີ່ລຸດພົ້ນອອກຈາກຄວາມທຸກຍາກມີ.. ....ຄອບຄົວ, ຍັງບໍ່ທັນພົ້ນມີ .....ຄອບຄົວ.

4. ຂໍ້ມູນດ້ານພື້ນຖານໂຄງລ່ານຂອງບ້ານ

✓ ມີທາງເຂົ້າບ້ານບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....01.....ເສັ້ນ

✓ ໄຟຟ້າເຂົ້າເຖິງບ້ານບໍ ມີ ☐ : ບໍ່ມີ ☐.

✓ ມີສຸກສາລາຫຼືໂຮງໝໍຕັ້ງຢູ່ເຂດບ້ານ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີຖົງຢາປະຈໍາບ້ານບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີໂຮງຮຽນປະຖົມ/ມັດທະຍົມຕົ້ນ/ປາຍ?ມີ ☐ : ບໍ່ມີ ☐. ຖ້າມີ,ມີ.ໂຮງຮຽນປະຖົມ 01.ແຫ່ງ

✓ ມີຕະຫຼາດຊື້ຂາຍ ບໍ? ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີຫ້ອງການບ້ານ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....01.....ແຫ່ງ

✓ ລະບົບນ້ຳສະອາດ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....01.....ແຫ່ງ

✓ ມີຄິວລົດ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີບ່ອນບໍາບັດຂີ້ເຫຍື້ອ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ມີທ່າເຮືອ ມີ ☐ : ບໍ່ມີ ☐. ຖ້າມີ,ມີຈັກ .....ແຫ່ງ

✓ ອື່ນໆ.....

5. ຂໍ້ມູນດ້ານ ຄອບຄົວພາຍໃນບ້ານ

ລ/ດ	ລາຍການ	ຈຳນວນ	ຫົວໜ່ວຍ	ໝາຍເຫດ
01	ຄອບຄົວຄ້າຂາຍ	6	ຄ/ຄ	ຂາຍຕາມເຮືອນ
02	ຄອບຄົວເຮັດກະສິກຳ	117	ຄ/ຄ	
03	ຄອບຄົວເຮັດອຸດສະຫະກຳ		ຄ/ຄ	
04	ຄອບຄົວເຮັດຫັດຖະກຳ		ຄ/ຄ	
05	ຄອບຄົວພະນັກງານລັດ		ຄ/ຄ	
06	ຄອບຄົວອື່ນໆ		ຄ/ຄ	

6. ອາຊີບຕົ້ນຕໍ່ພາຍໃນບ້ານ

ລ/ດ	ລາຍການ	ຈຳນວນຄົນ	ຍິງ/ຄົນ	ໝາຍເຫດ
01	ເຮັດນາ	350	150	
02	ໄຮ່. (ໄຮ່ເຂົ້.ສວນໝາກໄມ້)			
03	ພະນັກງານລັດ			
04	ພະນັກງານວິສະຫະກິດ			
05	ພະນັກງານລັດວິສະຫະກິດ			
06	ກຳມະກອນທົ່ວໄປ	91	64	
07	ຄ້າຂາຍ			
08	ນັກຮຽນ, ນັກສຶກສາ			
09	ອາຊີບອື່ນໆ			
ລວມ				

7. ເກັບກຳຂໍ້ມູນການນຳໃຊ້ທີ່ດິນແຕ່ປະເພດພາຍໃນບ້ານ

7.1. ດິນລັດ, ດິນຊຸມຊົນ ແລະ ດິນລວມບ້ານ

- ❖ ດິນ ໂຮງຮຽນ.....01..... ຕອນ; ຊັ້ນໃດ .....ດິນໜຽວ.....
  - ○ ໂຮງຮຽນ...ປະຖົມ 01 ຫຼັງ.....; ເນື້ອທີ່ ....4,200 ຕາແມັດ....., ມີເອກະສານຢັ້ງຢືນ ☐
  - ○ ໂຮງຮຽນ.....; ເນື້ອທີ່.....ມີເອກະສານຢັ້ງຢືນ ☐

* ດິນ ຫ້ອງການບ້ານ. .....01..... ...ຕອນ; ເນື້ອທີ່ .....200.ຕາແມັດ.. ມີເອກະສານຢັ້ງຢືນ ☐

* ດິນ ປ່າຊ້າ.....01..... .ຕອນ; ເນື້ອທີ່ .....8,0300....ຕາແມັດ. ມີເອກະສານຢັ້ງຢືນ ☐

* ດິນ ປ່າສັກສິດ/ດິນມະເຫສັກ.....01.....ຕອນ; ເນື້ອທີ່ ..1,7700..ຕາແມັດ... ມີເອກະສານຢັ້ງຢືນ ☐

* ດິນ ວັດ.....01.....ຕອນ; ເນື້ອທີ່.....7,500 ຕາແມັດ.....ມີເອກະສານຢັ້ງຢືນ ☐

* ດິນ ລວມບ້ານ (ດິນເປົ່າຫວ່າງ)..... ຕອນ;ເນື້ອທີ່.....; ມີເອກະສານຢັ້ງຢືນ ☐

* ດິນ ລວມບ້ານ (ທີ່ມອບໃຫ້ບຸກຄົນນຳໃຊ້).....ຕອນ; ເນື້ອທີ່.....ມີເອກະສານຢັ້ງຢືນ ☐

* ດິນຊຸມຊົນ.....ຕອນ;ເນື້ອທີລວມ.....ມີເອກະສານຢັ້ງຢືນ ☐

ຕອນທີ1: ນຳໃຊ້ເຮັດຫຍັງ.....ເນື້ອທີ.....ມີເອກະສານຢັ້ງຢືນ ☐

ຕອນທີ2: ນຳໃຊ້ເຮັດຫຍັງ.....ເນື້ອທີ.....ມີເອກະສານຢັ້ງຢືນ ☐

7.2. ດິນເຊົ່າ - ສໍາປະທານ (ດິນລັດ ແລະ ດິນລວມບ້ານ)

* ດິນ ເຊົ່າພາຍໃນບ້ານ...02.... ຕອນ; ໃຜເປັນຜູ້ເຊົ່າ.....ປະຊາຊົນເຊົ່າເຮັດນາ.....

ຕອນທີ 1: ເນື້ອທີ່.....84.91..... ເຮັກຕາ; ເຊົ່າຈັກປີ ...ບໍ່ມີກໍານົດ...ທຸກປີ..ປີ; ແຕ່ປີ..ຫາ.....(ຖ້າມີ)

ເຊົ່າເຮັດຫຍັງ.....ເຮັດນາແລ້ງ.....ມີເອກະສານຢັ້ງຢືນ ☐

ຕອນທີ2: ເນື້ອທີ່..... ເຮັກຕາ, ເຊົ່າຈັກ.....ປີ; ແຕ່ປີ.....ຫາ.....(ຖ້າມີ)

ເຊົ່າເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

* ດິນ ສໍາປະທານພາຍໃນບ້ານ..... ຕອນ; ໃຜເປັນຜູ້ສໍາປະທານ.....

ຕອນທີ1: ເນື້ອທີ່.....ເຮັກຕາ, ຈັກປີ.....ປີ. ແຕ່ປີ.....ຫາ.....(ຖ້າມີ)

ເຊົ້ຳເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

ຕອນທີ1: ເນື້ອທີ່.....ເຮັກຕາ; ຈັກປີ.....ປີ; ແຕ່ປີ.....ຫາ.....(ຖ້າມີ)

ເຊົ້ຳເຮັດຫຍັງ.....ມີເອກະສານຢັ້ງຢືນ ☐

7.3. ການນໍາໃຊ້ດິນແຕ່ລະປະເພດພາຍໃນບ້ານ

I. ດິນກະສິກໍາ:

1. ທີ່ດິນນາ.....112.....ຕອນ; ເນື້ອທີ່.....225.77..... ເຮັກຕາ.
2. ດິນຄົ້ງລ້ຽງສັດ..... ຕອນ; ເນື້ອທີ່..... ເຮັກຕາ.
3. ດິນໄຮ່.....ຕອນ ; ເນື້ອທີ່..... ເຮັກຕາ.
4. ດິນສວນ..... .....ຕອນ; ເນື້ອທີ່.....0.08..... ເຮັກຕາ.
5. ດິນກະສິກໍາທົ່ວໄປ.....ຕອນ; ເນື້ອທີ່.....3.26..... ເຮັກຕາ.
6. ດິນປູກໄມ້.....ຕອນ; ເນື້ອທີ່..... ເຮັກຕາ.
7. ດິນຊົນລະປະທານ.....ຕອນ; ເນື້ອທີ່..... ເຮັກຕາ.
8. ດິນເຂດສະຫງວນພັນພືດ..... .....ຕອນ; ເນື້ອທີ່..... ເຮັກຕາ.
9. ອື່ນໆ

II. ດິນປຸກສ້າງ:

1. ດິນປຸກສ້າງບຸກຄົນ.....110.....ຕອນ; ເນື້ອທີ່.....3.03.....ເຮັກຕາ.
2. ດິນປຸກສ້າງຂອງລັດ..... ຕອນ; ເນື້ອທີ່..... ເຮັກຕາ.
3. ດິນລວມບ້ານ.....5..... ຕອນ; ເນື້ອທີ່.....7.8..... ເຮັກຕາ.
4. ດິນເປົ່າຫວ່າງ.....ຕອນ; ເນື້ອທີ່..... ເຮັກຕາ.
5. ດິນຈັບຈອງ..... ຕອນ; ເນື້ອທີ່..... ເຮັກຕາ.

III. ດິນວັດທະນະທໍາ

1. ດິນປ່າສັກສິດ (ປ່າຊ້ຳ).....1..... ຕອນ; ເນື້ອທີ່.....4.00..... ເຮັກຕາ.
2. ດິນວັດ.....1.....ຕອນ; ເນື້ອທີ່.....1.5..... ເຮັກຕາ.
3. ດິນສະຖານທີ່ທ່ອງທ່ຽວທາງດ້ານທໍາມະຊາດ, ວັດທະນະທໍາປະຫວັດສາດ.....ຕອນ. ເນື້ອ.....ເຮັກຕາ

IV. ດິນປ້ອງກັນຊາດ

1. ດິນຕັ້ງຄ້າຍສໍານັກງານອົງການ, ກົມກອງບ່ອນພັກເຊົ່ຳ, ໂຮງຮຽນ,ສະໜາມບິນ, ໂຮງໝໍ..... .ຕອນ, ເນື້ອທີ່..... ເຮັກຕາ.
2. ດິນທໍາການຜະລິດ.....ຕອນ; ເນື້ອທີ່..... ...ເຮັກຕາ.
1. ດິນສະໜາມ ຝຶກຊອບທາງຍຸດທະສາດ.....ຕອນ; ເນື້ອທີ່. .....ເຮັກຕາ.

4. ດິນທຳການຜະລິດ.....ຕອນ; ເນື້ອທີ່..... .....ເຮັກຕາ.

V. ປ້ອງກັນຄວາມສະຫງົບ

ດິນຕັ້ງຄ້າຍສຳນັກງານອົງການ, ກົມກອງບ່ອນພັກເຊົາ, ໂຮງຮຽນ, ສະໜາມບິນ, ສາງ, ໂຮງໝໍ.....ຕອນ ເນື້ອທີ່ທີ..... .ເຮັກຕາ

2. ດິນທຳການຜະລິດ..... ..... ຕອນ; ເນື້ອທີ່..... ເຮັກຕາ.

3. ດິນສະໜາມຝຶກຊອບທາງຍຸດທະສາດ..... ຕອນ; ເນື້ອທີ່..... ເຮັກຕາ.

4. ດິນທຳການຜະລິດ..... ຕອນ; ເນື້ອທີ່..... ເຮັກຕາ.

VI. ດິນປ່າໄມ້

1. ດິນປ່າຜະລິດແຫ່ງຊາດ, ອົງຄະເພາ

2. ດິນປ່າຜະລິດຂອງແຂວງ..... ..... ຕອນ; ເນື້ອທີ່.....ເຮັກຕາ.

3. ດິນປ່າຜະລິດຂອງເມືອງ.. .....ຕອນ; ເນື້ອທີ່..... .....ເຮັກຕາ.

4. ດິນປ່າຜະລິດບ້ານ..... ຕອນ; ເນື້ອທີ່..... ..ເຮັກຕາ.

5. ດິນປ່າສະຫງວນແຫ່ງຊາດ..... ຕອນ; ເນື້ອທີ່..... ເຮັກຕາ.

6. ດິນປ່າສະຫງວນ ຂອງແຂວງ. .....ຕອນ; ເນື້ອທີ່..... ເຮັກຕາ.

7. ດິນປ່າສະຫງວນຂອງເມືອງ..... ຕອນ; ເນື້ອທີ່.....ເຮັກຕາ.

8. ດິນປ່າສະຫງວນບ້ານ..... ຕອນ; ເນື້ອທີ່.....ເຮັກຕາ.

9. ດິນປ່າປ້ອງກັນແຫ່ງຊາດ.....;;;;;... ຕອນ, ເນື້ອທີ່.....ເຮັກຕາ.

10. ດິນປ່າປ້ອງກັນ ຂອງແຂວງ..... ຕອນ; ເນື້ອທີ່.....ເຮັກຕາ.

11. ດິນປ່າປ້ອງກັນຂອງເມືອງ..... ຕອນ; ເນື້ອທີ່.....ເຮັກຕາ.

12. ດິນປ່າປ້ອງກັນບ້ານ.....2..... ຕອນ;ເນື້ອທີ່.....2.....ເຮັກຕາ.

13. ດິນປ່າປ້ອງກັນອື່ນໆ..... ຕອນ; ເນື້ອທີ່.....ເຮັກຕາ.

14. ດິນປ່າປູກໄມ້ອຸດສາຫະກຳ, ໄມ້ວິກ, ໄມ້ຢາງພາລາ, ໄມ້ສັກ, ໄມ້ເກດສະໜາ ແລະ ໄມ້ອື່ນໆ. ..... ຕອນ, ເນື້ອທີ່ທີ..... ..ເຮັກຕາ.

15. ດິນປ່າຟື້ນຟູ.. ..... ຕອນ;ເນື້ອທີ່..... ເຮັກຕາ.

VII. ດິນອຸດສາຫະກຳ

1. ເຂດທີ່ດິນອຸດສາຫະກຳ (ໂຮງຈັກ, ໂຮງງານຂະໜາດໃຫ່ຍ,ເຄື່ອງໄຟຟ້ານ້ຳຕົກ, ອື່ນໆ) ຈັກຕອນ..... ຕອນ, ເນື້ອທີ່ທີ..... .ເຮັກຕາ.

2. ແລວສາຍໄຟຟ້າ.....2.....ຕອນ; ເນື້ອທີ່..... ເຮັກຕາ.

3. ສະຖານທີ່ບ່ອນຖິ້ມຂີ້ເຫຍື້ອ. .....1.....ຕອນ; ເນື້ອທີ່.....1..... ເຮັກຕາ.

VIII. ດິນຄົມມະນາຄົມ

1. ທ່າເຮືອ. ທ່າບັກ.....ຕອນ; ເນື້ອທີ່..... ເຮັກຕາ.

2. ບໍ່ຫີນ, ບໍລິນ, ບໍ່ຊາຍ, ແລະ ສະຖານທີ່ຄົບຫີນ... .....ຕອນ; ເນື້ອທີ່..... ເຮັກຕາ.

3. ຄົວລົດ..... ຕອນ; ເນື້ອທີ່..... ..ເຮັກຕາ.

4. ສະໜາມບິນ..... ຕອນ; ເນື້ອທີ່ທີ..... .ເຮັກຕາ.

5. ສະຖານທີ່ຕັ້ງຫລັກສັນຍານ.....ຕອນ; ເນື້ອທີ່..... ເຮັກຕາ.

6. ສາງຕ່າງໆ:.....ຕອນ; ເນື້ອທີ່..... ເຮັກຕາ.

7. ແລວທາງລົດໄຟ: ມີຈັກແລວ.....

8. ໂອງມົງ: ມີຈັກບ່ອນ.....

9. ເຂດສະຫງວນທາງ: ມີຈັກເສັ້ນ.....

10. ທາງເບຕົງ/ປູຢາງ: ມີຈັກເສັ້ນ.....

11. ທາງດິນແດງ: ມີຈັກເສັ້ນ.....5.....

IX. ທີ່ດິນບໍລິເວນນ້ຳ

1. ສາຍນ້ຳມີຈັກສາຍ:.....1.....ສາຍ

2. ສາຍຫ້ວຍມີຈັກສາຍ:.....ສາຍ

3. ດິນໜອງນ້ຳທຳມະຊາດ (ໜອງລວມບ້ານ) .....2.....ຕອນ; ເນື້ອທີ່.....84.91..... ເຮັກຕາ.

4. ວັງສະຫງວນຂອງບ້ານ..... ຕອນ, ເນື້ອທີ່..... ເຮັກຕາ.

5. ອ່າງເກັບນ້ຳ.....ຕອນ; ເນື້ອທີ່..... ເຮັກຕາ.

6. ດອນທາມ.....ຕອນ; ເນື້ອທີ່..... ເຮັກຕາ.

7. ເກາະດອນ.....ຕອນ,ເນື້ອທີ່..... ເຮັກຕາ.

8. ເຂດທີ່ຖືກຜົນກະທົບຕໍ່ໄພພິບັດ

1. ເຂດພື້ນທີ່ນ້ຳຖ້ວມ

> ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພນ້ຳຖ້ວມຄືແນວໃດ? ທຸກໆປີ ☐; 2-3ປີ ☐ ແລະ ອື່ນໆ ☐

.....

ເຂດທີ່ຖືກນ້ຳຖ້ວມມີຈັກບ່ອນຫຼາຍບ່ອນ ຢູ່ຂ້າງທິດຕາເວັນອອກຂອງບ້ານຕິດທົ່ງໜອງແປນ, ໜອງຫວາຍ

.....

ຈຳນວນ.....ຫຼັງຄາເຮືອນ, ສິ່ງປຸກສ້າງໃນເຂດສາທາລະນະອື່ນໆ.....

> ປະເພດດິນທີ່ຖືກນ້ຳຖ້ວມມີຄືແນວໃດ?

ດິນປຸກສ້າງ.....ຮຕ, ດິນນາ.....ຮຕ, ດິນສວນພືດລົ້ມລຸລູກ.....ຮຕ,

ດິນສວນໄມ້ໃຫ້ໝາກ.....ຮຕ, ດິນສວນໄມ້ອຸດສາຫະກຳ.....

ດິນອື່ນໆ..... ..ຮຕ, ດິນຄົ້ງລ້ຽງສັດ.....ຮຕ

ລະດັບ ແລະ ໄລຍະນ້ຳຖ້ວມ.

ລະດັບ ນ້ຳຖ້ວມຂຶ້ນສູງສຸດ. .....3.....ແມັດ ແລະ ຕ່ຳສຸດ .....1.....ແມັດ.

ລະດັບນ້ຳສົ່ງຜົນຕໍ່ການຄົມມະນາຄົມຂອງບ້ານ.....

ໄລຍະນ້ຳຖ້ວມສູງສຸດ.....14.....ວັນ ແລະ ຕ່ຳສຸດ.....7.....ວັນ.

ຫ້ວຍມີນ້ຳຕະຫຼອດປີມີ.....ຫ້ວຍ ແລະ ສະເພາະລະດູຝົນມີ.....3.....ຫ້ວຍ.

ລະດັບນ້ຳຫ້ວຍໃນລະດູຝົນສູງສຸດແມ່ນ.....2-3.....ແມັດ ແລະ ຕ່ຳສຸດ.....1.....ແມັດ.

2. ເຂດພື້ນທີ່ແຫ້ງແລ້ງ.

ໄລຍະຜ່ານມາບ້ານຖືກຜົນກະທົບຈາກໄພແຫ້ງແລ້ງຄືແນວໃດ? ທຸກໆປີ ☐ ; 2-3ປີ ☐; ແລະອື່ນໆ ☐

ຄອງຊີນລະປະທານບໍ່ເຖິງ

ເຂດພື້ນທີ່ແຫ້ງແລ້ງມີ.....1..... ບ່ອນ. ຢູ່ເຂດທົ່ງໜອງຫວາຍ.....

ສາເຫດທີ່ພາໃຫ້ເກີດດິນແຫ້ງແລ້ງ....ຊີນລະປະທານໄປບໍ່ຮອດ.....

> ເຂດແຫ້ງແລ້ງມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?

ດິນນາ.....35.....ຮຕ, ດິນສວນພືດລົ້ມລຸລູກ.....ຮຕ, ດິນສວນໄມ້ໃຫ້ໝາກ..... ຮຕ,:

ດິນສວນໄມ້ອຸດສາຫະກຳ.. .....ຮຕ; ດິນຄົ້ງລ້ຽງສັດ..... ..ຮຕ

ດິນອື່ນໆ.....

3. ເຂດພື້ນທີ່ດິນເຊາະເຈື່ອນ.

ໄລຍະຜ່ານມາບ້ານຖືກຜົນກະທົບຈາກດິນເຊາະເຈື່ອນຄືແນວໃດ? ທຸກໆປີ € ; 2-3ປີ €;ແລະອື່ນໆ €

ເຂດພື້ນທີ່ດິນເຊາະເຈື່ອນມີ.. .....ບ່ອນ. ຢູ່ທາງທິດເໜືອ ແລະ ທາງທິດໃຕ້ຂອງບ້ານ

ສາເຫດທີ່ພາໃຫ້ເກີດດິນເຊາະເຈື່ອນ ຍ້ອນເລວນ້ຳເຊຈຳພອນ.....

> ເຂດເຊາະເຈື່ອນມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?

ດິນນາ....ຫຼາຍ.....ຮຕ, ດິນສວນພືດລົ້ມລຸກ.....ຫຼາຍ..... ຮຕ, ດິນສວນໄມ້ໃຫ້ໝາກ..... .ຮຕ;

ດິນຄັງລ້ຽງສັດ .....ຮຕ;

ດິນສວນໄມ້ອຸດສາຫະກຳ.....ຮຕ; ດິນຄັງລ້ຽງສັດ .....ຮຕ;

ດິນອື່ນໆ.....

4. ເຂດທີ່ມີຄວາມສຽງຈາກລະເບີດບໍ່ທັນແຕກ

ໄລຍະຜ່ານມາບ້ານຖືກຜົນກະທົບຈາກລະເບີດບໍ່ທັນແຕກຄືແນວໃດ? ທຸກໆປີ€ ;2-3ປີ€;ແລະອື່ນໆ €

.....

8. ເຂດພື້ນທີ່ໃນລະເບີດບໍ່ທັນແຕກມີ.....ບ່ອນ. ຢູ່ເຂດໃດຂອງບ້ານ.....

.....

ມີຜົນກະທົບຕໍ່ພື້ນທີ່ດິນກະສິກຳຄືແນວໃດ?

ດິນນາ.....ຮຕ; ດິນສວນພືດລົ້ມລຸກ.....ຮຕ: ດິນສວນໄມ້ໃຫ້ໝາກ.....ຮຕ,

ດິນສວນໄມ້ອຸດສາຫະກຳ.....ຮຕ; ດິນດັ່ງລ້ຽງສັດ.....ຮຕ

ດິນອື່ນໆ.....

.....

9. ເຂດພື້ນທີ່ທີ່ຖືກຜົນກະທົບດ້ານອື່ນໆ.....

.....

>ໂຄງການເຊົ່າ ແລະ ສຳປະທານທີ່ດິນພາຍໃນບ້ານມີຄືແນວໃດ?

ໂຄງການຂຸດຄົ້ນບໍ່ແຮ່.....

ໂຄງການກໍ່ສ້າງຕ່າງໆ.....

ແລະ ໂຄງການອື່ນໆ.....

> ບ້ານເຮົາມີໂຮງຈັກໂຮງງານ, ດິນເຊົ່າສຳປະທານ ແລະອື່ນໆ.....

ຖ້າມີໄດ້ສົ່ງຜົນກະທົບໃສ່ບ້ານ (ຄ້ວນ, ນ້ຳເສຍ, ສານພິດ, ສຽງ ແລະອື່ນໆ).....

.....

10. ວິທີການປ້ອງກັນ ແລະ ແກ້ໄຂຕໍ່ຜົນກະທົບຕ່າງໆ ທາງບ້ານໄດ້ມີການກະກຽມ ແລະ ແກ້ໄຂໃນລະດູແລ້ງ, ກະກຽມການເຮັດນາໃນລະດູແລ້ງດ້ວຍການໃຊ້ປ້ຳນ້ຳດ້ວຍພະລັງງານແສງອາທິດ, ໃນຊ່ວງລະດູຝົນແມ່ນສ້າງຄູ ກັນນ້ຳ ແລະ ເຮືອແພ.

ຮັບຮູ້ ແລະຢັ້ງຢືນ	ຜູ້ໃຫ້ຂໍ້ມູນ	ຜູ້ບັນທຶກ
ນາຍບ້ານເໜຍກ່ຳ	ນາງ ອ້ວນ ເຕີນ	ນາງ ນ້ອ ...
ເສດຖາ ວົງໄກສີ		

ເອກະສານຊ້ອນທ້າຍທີ່ 7: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍໂຄງການ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ຈຳພອນ

ເຈົ້າເມືອງ ເລກທີ **613** /ຈມ

ວັນທີ 23 ຕຸລາ 2025

ຂໍ້ຕົກລົງ

ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານ ເປົ້າໝາຍໂຄງການ (ຮ່ວມມືກັບໂຄງການ IWRM ປີ 2025)

- ອີງຕາມ ມາດຕາ 40, ຂໍ້ 07 ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ: ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019.
- ອີງຕາມ ແຜນກົດຈະກຳຂອງໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.
- ອີງຕາມ: ໜັງສືສະເໜີຂອງຫ້ອງການກະສິກຳແລະສິ່ງແວດລ້ອມເມືອງຈຳພອນ, ສະບັບເລກທີ 09/ຫກສມ, ລົງວັນທີ 09 ຕຸລາ 2025.

ເພື່ອຈັດຕັ້ງປະຕິບັດວຽກງານຈັດສັນການນຳໃຊ້ທີ່ດິນຂັນບ້ານ 08 ປະເພດ ໃນ 03 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ໃຫ້ດຳເນີນໄປຢ່າງມີຜົນສຳເລັດ.

ເຈົ້າເມືອງຕົກລົງ:

ມາດຕາ 1 ແຕ່ງຕັ້ງຄະນະຮັບຜິດຊອບຂັ້ນເມືອງ ເຂົ້າຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ບ້ານ 03 ບ້ານຄື: ບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ ໂດຍຕຳແໜ່ງດັ່ງນີ້:

1. ທ່ານ ລັດຕະນາ ໄຊຍະບັນຊາ	ຮອງປະທານຄະນະກຳມະການປົກຄອງເມືອງ	ຊີ້ນຳ
2. ທ່ານ ຄອນສະຫວັນ ດວງມາລາ	ຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ	ຫົວໜ້າ
3. ທ່ານ ນາງ ແກ້ວອຸດອນ ຈຸນລະມຸນຕຣີ	ຮອງຫົວໜ້າຫ້ອງການ ກສ ເມືອງ	ຮອງ
4. ທ່ານ ສຸພາລັກ ເພັດສະພົນ	ຮອງຫົວໜ້າຫ້ອງວ່າການເມືອງ	ຄະນະ
5. ທ່ານ ນາງ ອຸໄລວັນ ໄຊຍະວົງສາ	ຮອງປະທານສະຫະພັນແມ່ຍິງເມືອງ	ຄະນະ
6. ທ່ານ ຄຳສອນ ລຸນລາທິສັກ	ຮອງເລຂາຄະນະບໍລິຫານງານຊາວໜຸ່ມເມືອງ	ຄະນະ

7. ທ່ານ ສູນທອນ ສີລາດ ຮອງຫົວໜ້າຫ້ອງການວັດຖະນະທຳ ແລະ ທ່ອງທ່ຽວເມືອງ ຄະນະ
8. ທ່ານ ພູວຽງ ຈັນທະລີໄຊ ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ຄະນະ
9. ທ່ານ ນາງ ສີພະຈັນ ກຸນລະວົງ ຮອງຫົວໜ້າຫ້ອງການການເງິນເມືອງ ຄະນະ
10. ທ່ານ ນາງ ໝີ່ວຄຳ ແກ້ວວິໄລ ຮອງຫົວໜ້າຫ້ອງການຍຸຕິທຳເມືອງ ຄະນະ
11. ທ່ານ ພິງສະຫວັນ ຕຣິໂອ ຮອງຫົວໜ້າກອງບັນຊາການ ປກສ ເມືອງ ຄະນະ
12. ທ່ານ ຄອນສະຫວັນ ວົງສີລາ ກອງບັນຊາການທະຫານເມືອງ ເມືອງ ຄະນະ
13. ທ່ານ ນາຍບ້ານ 03 ບ້ານເປົ້າໝາຍໂຄງການ ຄະນະ

ມາດຕາ 2 ແຕ່ງຕັ້ງຄະນະທີມງານພາກສະໜາມ ໂດຍຕຳແໜ່ງ ດັ່ງນີ້:

1. ທ່ານ ສຸລິສັນ ສີສົມສະຫວັດ ຮອງຫົວໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ ຫົວໜ້າ
2. ທ່ານ ນາງ ວິມາລາວັນ ວິນດາວົງ ຫົວໜ້າໜ່ວຍງານ ຄຸ້ມຄອງ ແລະ ພັດທະນາທີ່ດິນ ຮອງ
3. ທ່ານ ບຸນຕາ ແສງແກ້ວມະຫາວົງ ຫົວໜ້າໜ່ວຍງານ ສິ່ງແວດລ້ອມ ແລະ ປ່າໄມ້ ຄະນະ
4. ທ່ານ ນາງ ວັນມະນີ ເດດວົງສາ ຫົວໜ້າໜ່ວຍງານຂົວທາງ-ເຄຫາຝັງເມືອງ ຄະນະ
5. ທ່ານ ສີແຫຼ້ ສົນທະວິໄຊ ຮອງຫົວໜ້າໜ່ວຍງານ ຄຸ້ມຄອງ ແລະ ພັດທະນາທີ່ດິນ ຄະນະ
6. ທ່ານ ສາຍຄຳ ບຸດກອງໃບ ຮອງຫົວໜ້າໜ່ວຍງານຊົນລະປະທານ,ນ້ຳ,ອຸຕຸນິຍົມແລະອຸທົກກະສາດ ຄະນະ
7. ທ່ານ ຈັນທະວົງໂງ່ນວົງສາ ວິຊາການຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ ຄະນະ
8. ທ່ານ ນາງ ແສງສຸວັນ ຄົມທິລາດ ວິຊາການຈາກຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນແຂວງ ຄະນະ
9. ທ່ານ ຈັນທີ ສຸວັນລາສີ ວິຊາການຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຄະນະ
10. ທ່ານ ອາເລັກ ສຸດທິວົງ ວິຊາການຫ້ອງວ່າການເມືອງ ຄະນະ

ມາດຕາ 3 ແຈ້ງໃຫ້ບັນດາຫ້ອງການ-ກົມກອງ ແລະ ຜູ້ທີ່ຖືກແຕ່ງຕັ້ງຈົ່ງໄດ້ຮັບຮູ້ ພ້ອມທັງເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດໜ້າທີ່ ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ ເຈົ້າເມືອງ

ຄຳຕາ ສົນນະສອນ
Khamta SINNASONE

ບ່ອນນຳສົ່ງ:
ຜູ້ຖືກແຕ່ງຕັ້ງ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
ຫ້ອງການບ້ານເປົ້າໝາຍ 01 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ);
ເກັບຮັກໄວ້ 02 ສະບັບ.

ເອກະສານຊ້ອນທ້າຍທີ່ 8: ເອກະສານແຈ້ງການກ່ຽວກັບການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນແຂວງສະຫວັນນະເຂດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງຈຳພອນ
ເຈົ້າເມືອງ

ເລກທີ **591**/ຈມ
ວັນທີ 15 ຕຸລາ 2025

ແຈ້ງການ

ເຖິງ: ເລຂາໜ່ວຍພັກບ້ານ, ນາຍບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ເປັນເຈົ້າຂອງສິດນຳໃຊ້ທີ່ດິນ

ເລື່ອງ: ການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນ ແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019
- ອີງຕາມ ຂໍ້ຕົກລົງລັດຖະມົນຕີ ສະບັບເລກທີ 1448/ກສ, ລົງວັນທີ 25 ກັນຍາ 2025 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມນະຄອນ, ເມືອງ.
- ອີງຕາມ ແຜນກົດຈະກຳຂອງໂຄງການຄຸ້ມຄອງຊັບພະຍາກອນແບບເຊື່ອມສານ ແລະ ບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງນະຄອນຫຼວງພະບາງ ປີ 2025.

ເພື່ອປະຕິບັດຕາມແຜນພັດທະນາເສດຖະກົດຂອງເມືອງແຕ່ປີ 2025-2029 ທີ່ດິນທຸກປະເພດຕ້ອງໄດ້ມີການກຳນົດເຂດ, ປະເພດການນຳໃຊ້ຕ່າງໆ, ເປັນຕົ້ນແມ່ນເຂດດິນກະສິກຳ, ເຂດດິນປ່າໄມ້, ເຂດແຫຼ່ງນ້ຳ, ເຂດທີ່ຖືກກະທົບຈາກໄພທຳມະຊາດ ເຊັ່ນ: ເຂດນ້ຳຖ້ວມ, ເຂດແຫ້ງແລ້ງ, ເຂດເຊາະເຈື່ອນ ແລະ ອື່ນໆ ສ້າງເປັນແຜນທີ່ຈັດສັນທີ່ດິນ, ເພື່ອເປັນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ແນ່ໃສ່ເຮັດໃຫ້ທີ່ດິນໄດ້ຮັບການພັດທະນາແບບຍືນຍົງ.

ເຈົ້າເມືອງຈຳພອນ ອອກແຈ້ງການ:

1. ເລຂາໜ່ວຍພັກບ້ານ, ນາຍບ້ານ, ເຖົ້າແກ່ແນວໂຮມ, ຜູ້ເຮັດວຽກທີ່ດິນບ້ານ ຕ້ອງໄດ້ກະກຽມຂໍ້ມູນເນື້ອທີ່ດິນແຕ່ລະປະເພດການນຳໃຊ້ທີ່ດິນຕ່າງໆເຊັ່ນ: ດິນລັດ, ດິນລວມໝູ່, ດິນປ່າໄມ້, ດິນແຫຼ່ງນ້ຳ, ດິນວັດຖະນະທຳ ດິນປຸກສ້າງ, ດິນກະສິກຳ ແລະ ດິນດິນປະເພດອື່ນໆ ໃຫ້ມີບັນຊີຂໍ້ມູນທີ່ດິນລະອຽດ.

2. ໃຫ້ຮ່ວມກັນປຶກສາຫາລືກັບການຈັດຕັ້ງບ້ານໃກ້ຄຽງ ກ່ຽວກັບເຂດແດນເຊື່ອມຕໍ່ລະຫວ່າງບ້ານໃກ້ຄຽງໃຫ້ຈະແຈ້ງ ເພື່ອອຳນວຍຄວາມສະດວກແກ່ພະນັກງານວິຊາການທີ່ລົງເຮັດວຽກເດີນສຳຫຼວດຂອບເຂດບ້ານ ກໍລະນີເຂດບ້ານກັບບ້ານບໍ່ຈະແຈ້ງຕ້ອງພ້ອມກັນແກ້ໄຂໃຫ້ສຳເລັດກ່ອນການເດີນສຳຫຼວດຂອບເຂດ.
3. ໃຫ້ແຕ່ງຕັ້ງມອບໝາຍບຸກຄົນໃນຄະນະປົກຄອງບ້ານ, ຜູ້ຮັບຜິດຊອບວຽກທີ່ດິນ ຫຼື ອົງການຈັດຕັ້ງຕ່າງໆເຂົ້າຮ່ວມນຳທີມງານວິຊາການຈັດສັນການນຳໃຊ້ທີ່ດິນ, ລາຍລະອຽດແມ່ນພະນັກວິຊາການຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງເປັນໃຈກາງໃນການປະສານສົມທົບ.

ດັ່ງນັ້ນ; ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ສຳເລັດຕາມລະດັບຄາດໝາຍ.

ຮັກສາການ ເຈົ້າເມືອງ

ບ່ອນສົ່ງ:
- ຫ້ອງການ ກສມ; ບ່ອນລະ 01 ສະບັບ.
- ບ້ານ 03 ບ້ານ, ບ່ອນລະ 01 ສະບັບ.

ຄຳເກດ ສົນນະສອນ
Khamta SINNASONE

ຈັດຕັ້ງປະຕິບັດໂດຍ:

ສະໜັບສະໜູນໂດຍ:

ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບນິເວດໃນອ່າງຮັບນ້ຳເຊບັ້ງຫຽງ ແລະ ຕົວເມືອງຫຼວງພະບາງ

The Intergrated Water Resource Management and Ecosystem-based Adaptation in the Xe Bang Hieng River Basin and Luang Prabang City Project

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ

"ບ້ານດົງເມືອງ" ເມືອງຈຳພອນ ແຂວງສະຫວັນນະເຂດ



ກະກຽມໂດຍ:

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ

ພະຈິກ 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ
ເມືອງຈໍາພອນ

ເລກທີ **725** /ຈມ.ຈພ
ເມືອງຈໍາພອນ, ວັນທີ 21 ພະຈິກ 2025

ຂໍ້ຕົກລົງ
ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນບ້ານ ສີວິໄລ, ເມືອງຈໍາພອນ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ IV ໝວດທີ 4, ມາດຕາ 40 ຂໍ້ທີ 7;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019;
- ອີງຕາມ ແຜນຈັດສັນການນໍາໃຊ້ທີ່ດິນຂອງບ້ານສີວິໄລ, ບ້ານດົງເມືອງ, ບ້ານເພຍກ່າ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025;
- ອີງຕາມ ໜັງສືສະເໜີຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມເມືອງຈໍາພອນ, ສະບັບເລກທີ 188/ ຫກສມ.ຈພ, ວັນທີ 20 ພະຈິກ 2025.

ເຈົ້າເມືອງຈໍາພອນ ຕົກລົງ:

ມາດຕາ 1 ຮັບຮອງ ແລະ ປະກາດໃຊ້ ແຜນຈັດສັນການນໍາໃຊ້ທີ່ດິນ ຂອງ ບ້ານສີວິໄລ, ເມືອງຈໍາພອນ, ແຂວງ ສະຫວັນນະເຂດ ສະບັບເດືອນ ພະຈິກ 2025.

ມາດຕາ 2 ມອບໃຫ້ຫ້ອງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຊີ້ນໍາການຈັດຕັ້ງປະຕິບັດໄປຕາມແຜນທີ່ກໍານົດໄວ້ ແລະ ແຜນສະບັບນີ້ເປັນນິຕິກໍາຄຸ້ມຄອງເພື່ອຮັບປະກັນສິດໃນການນໍາໃຊ້ໃນອານາຄົດ.

ມາດຕາ 3 ອົງການປົກຄອງບ້ານ, ກຸ່ມບ້ານ ແລະ ປະຊາຊົນບັນດາເຜົ່າຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ, ການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ແຜນການດັ່ງກ່າວໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີຄວາມ ຮັບປະກັນ ທາງດ້ານການປົກປັກຮັກສາສະພາບແວດລ້ອມ, ລະບົບນິເວດກະສິກໍາ ແລະ ປ່າໄມ້, ທຸກ ການປ່ຽນແປງ ຫຼື ການຫັນປ່ຽນປະເພດການນໍາໃຊ້ທີ່ດິນຈະຕ້ອງໄດ້ຜ່ານການພິຈາລະນາ ແລະ ອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຕາມລະບຽບກົດໝາຍກໍານົດ.

ມາດຕາ 4 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການ ເຈົ້າເມືອງ

ຄໍາຕາ ສົນນະສອນ
Khamta SINNASONE

ຄຳນຳ

ເພື່ອຈັດຕັ້ງຜັນຂະຫຍາຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທີ່ດິນສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມີຖຸນາ 2019, ມະຕິຂອງ ສະພາແຫ່ງຊາດ ເລກທີ 098/ສພຊ, ລົງວັນທີ 28 ມີຖຸນາ 2018 ວ່າດ້ວຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຮອດປີ 2030. ພ້ອມທັງເປັນການຈັດຕັ້ງປະຕິບັດຄູ່ມືແນະນຳກ່ຽວກັບການສ້າງແຜນຈັດສັນທີ່ດິນຂັ້ນບ້ານ ສະບັບປີ 2025 ແລະ ເປັນບ່ອນອີງໃນການຄຸ້ມຄອງ ແລະ ຕິດ ຕາມກວດກາ ວຽກງານຈັດສັນທີ່ດິນຂັ້ນບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ພ້ອມທັງເຮັດໃຫ້ທີ່ດິນມີມູນຄ່າ ເພີ່ມຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

ແຜນຈັດສັນການນຳໃຊ້ທີ່ດິນບ້ານດົງເມືອງ ສະບັບນີ້ ຈະເປັນເອກະສານພື້ນຖານສຳຄັນ ປະກອບດ້ວຍ 8 ພາກ ແລະ ສ້າງຂຶ້ນບົນພື້ນຖານຄວາມຮຽກຮ້ອງຕ້ອງການທາງດ້ານວິຊາການໃນການສ້າງແຜນທີ່ການນຳໃຊ້ທີ່ດິນຂັ້ນບ້ານຂຶ້ນ ຊຶ່ງໃນນັ້ນລວມມີ ຫຼັກການ, ວິທີການທີ່ຈຳເປັນ ຊຶ່ງມີບາດກ້າວ ແລະ ຂັ້ນຕອນໃນການສຳຫຼວດ, ການຈັດແບ່ງເຂດທີ່ດິນ, ການຈັດປະເພດທີ່ດິນໃນພາກປະຕິບັດຕົວຈິງ ແລະ ໃຫ້ຖືກຕ້ອງຕາມເນື້ອໃນຂອງກົດໝາຍ, ດຳລັດ ແລະ ລະບຽບການ ຕ່າງໆ ທີ່ພົວພັນກັບວຽກງານດັ່ງກ່າວນີ້ ໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ມີປະສິດທິຜົນສູງ ຂຶ້ນເລື້ອຍໆ. ແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ ຈະມີການທົບທວນ ແລະ ປັບປຸງແຕ່ລະໄລຍະ ເພື່ອລາຍງານສະພາບບັນຫາຂອງການນຳໃຊ້ທີ່ດິນໃນປະຈຸບັນ ແລະ ທ່າອ່ຽງໃນອານາຄົດໃຫ້ສັງຄົມ ແລະ ພາກສ່ວນກ່ຽວຂ້ອງຮັບຮູ້ໂດຍຮວບຮວມເອົາຜົນການສຳຫຼວດ, ເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສັງລວມເອົາບົດລາຍງານຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ.

ຕາງໜ້າຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ ແຂວງສະຫວັນນະເຂດ ຂໍສະແດງຄວາມຂອບໃຈເປັນຢ່າງຍິ່ງມາຍັງຄະນະຮັບຜິດຊອບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານດົງເມືອງ ສະບັບນີ້. ພິເສດຂໍສະແດງຄວາມຂອບໃຈ ມາຍັງ ກົມຊັບພະຍາກອນນ້ຳ, ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງສະຫວັນນະເຂດ ແລະ ອົງການປົກຄອງເມືອງຈຳພອນ ພາຍໃຕ້ ໂຄງການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ແລະ ການປັບຕົວບົນພື້ນຖານລະບົບເວດ (IWRM-EbA Project) ທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ທີ່ໄດ້ປະກອບສ່ວນດ້ານວິຊາການ ແລະ ທຶນຮອນເຂົ້າໃນການສ້າງແຜນຈັດສັນການນຳໃຊ້ທີ່ດິນບ້ານດົງເມືອງສະບັບນີ້ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນດັ່ງກ່າວນີ້ໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ.

ທີ່ ເມືອງຈຳພອນ, ວັນທີ 20 ພະຈິກ 2025

ຫົວໜ້າຫ້ອງການ

ຄອນສະຫວັນ ດວງມາລາ

ສັງລວມຫຍໍ້

ບ້ານ ດົງເມືອງ ຕັ້ງຫ່າງຈາກເທດສະບານເມືອງ ຈໍາພອນ ໄປທາງທາງທິດຕາເວັນອອກສ່ຽງໃຕ້ຂອງເມືອງ, ມີໄລຍະທາງແຕ່ປະມານ 28 ກິໂລແມັດ, ມີລະດັບຄວາມສູງ ສະເລ່ຍ 169 ແມັດ ທຽບໃສ່ລະດັບນໍ້າທະເລ, ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ, ມີເນື້ອທີ່ທັງໝົດ ມີ 651.9596 ເຮັກຕາ ມີເຊິ່ງມີເຂດແດນຕິດຈອດກັບບັນດາບ້ານຂອງເມືອງຈໍາພອນ ແລະ ບັນດາບ້ານຂອງເມືອງໃກ້ຄຽງ ຄື: ທິດເໜືອ ຕິດກັບ ບ້ານດົງໝາກກໍ່-ບ້ານທ່າເມືອງ ເມືອງຈໍາພອນ, ທິດໃຕ້ຕິດກັບ ບ້ານທ່າມ່ວງ-ບ້ານຊະຄຶນເໜືອ, ເມືອງຈໍາພອນ, ທິດຕາເວັນອອກ ຕິດກັບບ້ານທ່ເມືອງ-ບ້ານເຊ, ເມືອງຈໍາພອນ ທິດຕາເວັນຕົກຕິດກັບບ້ານຊະຄຶນເໜືອ-ບ້ານດົງໝາກກໍ່, ເມືອງຈໍາພອນ.

ບ້ານ ດົງເມືອງ ມີພົນລະເມືອງທັງໝົດ 1,683 ຄົນ, ຍິງ 860 ຄົນ, ປະກອບມີ 15 ໜ່ວຍ, ມີ 218 ຫລັງຄາເຮືອນ,ມີ 343 ຄອບຄົວ. ມີ 2 ຊົນເຜົ່າຄື: ຊົນເຜົ່າ ບຮູ ມີຮີດຄອງປະເພນີ ມີ 86 ຄອບຄົວ, ມີ 54 ຫຼັງຄາເຮືອນ, ມີ ຍິງ 228 ຄົນ ແລະ ເຜົ່າລາວ, ມີບຸນປະເພນີ ມີ 257 ຄອບຄົວ, ມີ 164 ຫຼັງຄາເຮືອນ. ຊາວບ້ານປະກອບອາຊີບກະສິກໍາເປັນຕົ້ນຕໍຄື: ແມ່ນຢຶດຖືເອົາການເຮັດນາ, ປູກພືດ ແລະ ສໍາຮອງລົງມາແມ່ນລ້ຽງສັດ ແລະ ອື່ນໆ. ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ຄ້າຂາຍ.

ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານ ບ້ານດົງເມືອງ ປະກອບມີ 6 ປະເພດການນໍາໃຊ້ຫຼັກ ຊຶ່ງປະກອບມີ ດັ່ງນີ້: ເຂດທີ່ດິນກະສິກໍາ ມີປະມານ 523.26 ເຮັກຕາ ກວມເອົາ 80.26% (ໃນນີ້ ນາ, ນາສາມາດເຮັດຊົນລະປະທານ ແລະ ໜອງປາ), ເຂດດິນປຸກສ້າງ ມີເນື້ອທີ່ 20.7068 ເຮັກຕາ ກວມເອົາ 3.18% (ໃນນີ້, ມີດິນປຸກສ້າງບຸກຄົນ, ໂຮງຮຽນ, ດິນແຮ່ຂະຫຍາຍປຸກສ້າງ), ທີ່ດິນວັດທະນະທໍາ ມີເນື້ອທີ່ 21.79 ເຮັກຕາ ກວມເອົາ 3.34% (ໃນນີ້, ປ່າມະເຫສັກ, ປ່າສັກສິດ ແລະ ປ່າຊ້າ), ທີ່ດິນປ່າໄມ້ ມີເນື້ອທີ່ 8.21 ເຮັກຕາ ກວມເອົາ 1.26 ເຮັກຕາ , ທີ່ດິນຄົມມະນາຄົມ ມີເນື້ອທີ່ 10.44 ເຮັກຕາ. ກວມເອົາ 1.6% (ໃນນີ້, ເສັ້ນທາງ ແລະ ເສັ້ນທາງຮ່ອມ) ແລະ ທີ່ດິນບໍລິເວນນໍ້າ ມີເນື້ອທີ່ 67.555 ເຮັກຕາ ກວມເອົາ 10.36% (ໃນນີ້, ຮ່ອງນໍ້າ, ອ່າງເກັບນໍ້າສຸຍ ແລະ ແມ່ນໍ້າເຊຈໍາພອນ).

ພາຍຫຼັງຖືກຮັບຮອງ ແລະ ປະກາດນໍາໃຊ້ແຜນຈັດສັນການນໍາໃຊ້ທີ່ດິນຂັ້ນບ້ານດັ່ງກ່າວ ຈະໄດ້ລິ່ເລີ່ມວຽກການຕິດຕາມ-ກວດກາ ຄວາມຖືກຕ້ອງເໝາະສົມຕາມແຜນຈັດສັນທີ່ວາງໄວ້. ເຊິ່ງພາກສ່ວນຮັບຜິດຊອບຫຼັກແມ່ນຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ຮວ່ມກັບຄະນະຮັບຜິດຊອບ ແລະ ວິຊາການຈັດສັນທີ່ດິນ ເຊິ່ງຈະໄດ້ມີແບບແຜນໃນການເຄື່ອນໄຫວກວດກາ ແລະ ລາດຕະເວນໃນເຂດເປົ້າໝາຍ ຫຼື ພື້ນທີ່ມີຄວາມສໍາຄັນໃນວຽກງານອະນຸລັກ ເຊັ່ນ: ເຂດວັງສະຫງວນສັດນໍ້າ, ເຂດປ່າໄມ້ຫວງຫ້າມເດັດຂາດ ແລະ ເຂດອື່ນໆທີ່ມີການຕິດຕັ້ງຫຼັກໝາຍບອກຂອບເຂດຫວງຫ້າມ. ນອກຈາກນັ້ນ, ຍັງກວມລວມໄປເຖິງການກວດກາການນໍາໃຊ້ເຄື່ອງມືແບບດັບສູນໃນການຫາ ການລ່າສັດນໍ້າ - ສັດປ່າ ແລະ ການກະທໍາທີ່ເປັນການສູນເສຍຕໍ່ສະພາບແວດລ້ອມຫຼາຍເກີນໄປ ເປັນຕົ້ນ.

ສາລະບານ

ຄຳນຳ i

ສັງລວມຫຍໍ້ ii

I. ຈຸດປະສົງ ແລະ ລະດັບຄາດໝາຍ 7

1.1 ຈຸດປະສົງ 7

1.2 ລະດັບຄາດໝາຍ 7

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ 8

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ 8

II. ສະພາບລວມຂອງບ້ານ 9

2.1 ປະຫວັດຄວາມເປັນມາຂອງບ້ານ 9

2.2 ທີ່ຕັ້ງພູມສັນຖານ 9

2.3 ດ້ານການປົກຄອງ 9

2.4 ດ້ານເສດຖະກິດ-ສັງຄົມ 10

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ 10

III. ສະພາບການນຳໃຊ້ທີ່ດິນປະຈຸບັນ 10

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ 10

3.2 ເຂດຄຸ້ມຄອງຂອງບ້ານດົງເມືອງ 10

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ 14

IV. ການຈັດສັນການນຳໃຊ້ທີ່ດິນ 16

4.1 ການກຳນົດເຂດທີ່ດິນຂອງບ້ານ ດົງເມືອງ 16

4.1.1 ເຂດທີ່ດິນອະນຸລັກ 16

4.1.2 ເຂດທີ່ດິນນຳໃຊ້ນຳ 16

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ 17

4.2 ການກຳນົດປະເພດທີ່ດິນຂອງບ້ານ 18

V. ທ່າແຮງໃນການພັດທະນາທີ່ດິນ 22

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ 22

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານດົງເມືອງ 22

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ 22

6.1 ການຄຸ້ມຄອງ ທີ່ດິນກະສິກຳ 22

6.2 ການຄຸ້ມຄອງທີ່ດິນປຸກສ້າງ 22

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ 23

6.4 ການຄຸ້ມຄອງ ທີ່ດິນປ່າໄມ້ 23

6.5 ການຄຸ້ມຄອງ ທີ່ດິນຄົມມະນາຄົມ 23
6.6 ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ 23
VII. ການຫັນປ່ຽນປະເພດທີ່ດິນ 23
VIII. ກົນໄກການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ 23
8.1. ການຈັດຕັ້ງ 24
8.2. ບຸກຄະລາກອນ 24
8.3. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ 24
8.4. ຂອບເຂດສິດ 24
8.5. ລະບອບແບບແຜນວິທີເຮັດວຽກ 25
8.6. ການຕິດຕາມກວດກາ 25
ເອກະສານອ້າງອິງ 26
ເອກະສານຊ້ອນທ້າຍ 27
ເອກະສານຊ້ອນທ້າຍທີ່ 1: ໜັງສືສະເໜີ 28
ເອກະສານຊ້ອນທ້າຍທີ່ 2: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານດົງເມືອງ ຕິດກັບບັນດາບ້ານໃກ້ຄຽງ 29
ເອກະສານຊ້ອນທ້າຍທີ່ 3: ບົດບັນທຶກກອງປະຊຸມກ່ຽວກັບການວາງແຜນຈັດສັນ, ກຳນົດເຂດແລະກຳນົດທີ່ດິນ ແຕ່ລະປະເພດ 34
ເອກະສານຊ້ອນທ້າຍທີ່ 4: ບົດບັນທຶກຕົກລົງເຂດຄຸ້ມຄອງລະຫວ່າງບ້ານດົງເມືອງ, ບ້ານທ່າເມືອງ, ບ້ານເຊ, ບ້ານທ່າມ່ວງ, ບ້ານຊະຄຶນເໜືອ, ບ້ານດົງໝາກກ່ຳ 36
ເອກະສານຊ້ອນທ້າຍທີ່ 5: ບົດບັນທຶກກອງປະຊຸມສະເໜີຜ່ານແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ ແລະ ສ້າງແຜນທີ່ການນຳໃຊ້ທີ່ດິນ 40
ເອກະສານຊ້ອນທ້າຍທີ່ 6: ເອກະສານສຳພາດຂໍ້ມູນທາງດ້ານເສດຖະກິດ-ສັງຄົມຂອງບ້ານໂດຍການເຊັນ ຮັບຮອງຈາກນາຍບ້ານ 42
ເອກະສານຊ້ອນທ້າຍທີ່ 7: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ວິຊາການເຂົ້າ ຮ່ວມວຽກງານຈັດສັນການນຳໃຊ້ທີ່ດິນ 08 ປະເພດຂັ້ນບ້ານ 03 ບ້ານເປົ້າໝາຍ ໂຄງການ 50
ເອກະສານຊ້ອນທ້າຍທີ່ 8: ເອກະສານແຈ້ງການກ່ຽວກັບການລົງຈັດຕັ້ງປະຕິບັດວຽກງານຕົວຈິງຢູ່ພາກສະໜາມ ວຽກງານຈັດສັນການນຳໃຊ້ທີ່ດິນຂັ້ນບ້ານ 08 ປະເພດຢູ່ບ້ານສີວິໄລ, ບ້ານດົງເມືອງ ແລະ ບ້ານເພຍກ່າ ເມືອງຈຳພອນແຂວງສະຫວັນນະເຂດ 52

ສາລະບານຕາຕະລາງ

ຕາຕະລາງທີ 1 ສະແດງດ້ານສາດສະໜາ.....10
ຕາຕະລາງທີ 2 ຄ່າພິກັດບ້ານດົງໝາກກ່ຳ-ບ້ານທ່າເມືອງ, ເມືອງຈໍາພອນ ແຂວງສະຫວັນນະເຂດ.....11
ຕາຕະລາງທີ 3 ຄ່າພິກັດບ້ານທ່າເມືອງ-ບ້ານເຊ ເມືອງຈໍາພອນ ແຂວງສະຫວັນນເຂດ 11
ຕາຕະລາງທີ 4 ຄ່າພິກັດບ້ານບ້ານເຊ-ບ້ານທ່າມ່ວງ, ເມືອງຈໍາພອນ ແຂວງສະຫວັນນະເຂດ 12
ຕາຕະລາງທີ 5 ຄ່າພິກັດບ້ານທ່າມ່ວງ-ບ້ານຊະຄຶນເໜືອ ເມືອງຈໍາພອນ ແຂວງ ສະຫວັນນະເຂດ.....12
ຕາຕະລາງທີ 7 ສັງລວມປະເພດການນໍາໃຊ້ທີ່ດິນປະຈຸບັນ ບ້ານດົງເມືອງ ເມືອງຈໍາພອນ ແຂວງສະຫວັນນະເຂດ.15
ຕາຕະລາງທີ 8 ສັງລວມປະເພດການຈັດສັນທີ່ດິນບ້ານສີວິໄລ, ເມືອງຈໍາພອນ ແຂວງສະຫວັນນະເຂດ.....19
ຕາຕະລາງທີ 9 ສົມທຽບລະຫວ່າງເນື້ອທີ່ການນໍາໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ.....20

ສາລະບານຮູບພາບ

ຮູບທີ 1 ສະພາບພູມສັນຖານຂອງບ້ານດົງເມືອງ ເມືອງຈໍາພອນ ແຂວງສະຫວັນນະເຂດ 9
ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານດົງເມືອງ, ເມືອງຈໍາພອນ ແຂວງສະຫວັນນະເຂດ 14
ຮູບທີ 3 ແຜນທີ່ການນໍາໃຊ້ທີ່ດິນປະຈຸບັນ ບ້ານດົງເມືອງ ເມືອງຈໍາພອນ ແຂວງສະຫວັນນະເຂດ..... 16
ຮູບທີ 4 ແຜນທີ່ຈັດສັນການນໍາໃຊ້ທີ່ດິນ ບ້ານດົງເມືອງ ເມືອງຈໍາພອນ ແຂວງສະຫວັນນະເຂດ..... 20
ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ 21
ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນໍາໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ 21

I. ຈຸດປະສົງ ແລະ ລະດັບຄາດໝາຍ

1.1 ຈຸດປະສົງ

- ຈຸດປະສົງຂອງການສຳຫຼວດວາງແຜນຈັດສັນ ແລະ ການນຳໃຊ້ທີ່ດິນ ແມ່ນປັດໃຈຫຼັກທີ່ສຳຄັນໃນລະບົບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ທັງນີ້ກໍ່ເພື່ອເຮັດໃຫ້ການວາງແຜນຈັດສັນ ແລະ ການວາງແຜນການນຳໃຊ້ທີ່ດິນໃຫ້ມີການປະສົມປະສານຢ່າງກົມກຽວໂດຍພື້ນຖານກັບສະພາບຂອງພື້ນທີ່ໃນແຕ່ລະບ່ອນ ແລະ ໃຫ້ມີຄວາມດຸ່ນດ່ຽງຂອງຊັບພະຍາກອນທຳມະຊາດ, ພ້ອມດຽວກັນກໍ່ຕ້ອງໃຫ້ສອດຄ່ອງກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມ ຂອງແຕ່ລະເຂດ;
- ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາທີດິນ ແລະ ຊັບພະຍາກອນທຳມະຊາດອື່ນໆໃຫ້ມີຄວາມຍືນຍົງ ໂດຍຕິດພັນກັບການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ເພື່ອກຳນົດພື້ນທີ່, ເຂດທີ່ເປັນທ່າແຮງກ່ຽວກັບເປົ້າໝາຍໃນການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ແນໃສ່ເຮັດໃຫ້ທີດິນໄດ້ຮັບການພັດທະນາແບບຍືນຍົງ, ເຮັດໃຫ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດສາມາດນຳຜົນປະໂຫຍດສູງສຸດ;
- ເພື່ອຫລຸດຜ່ອນການຈັບຈອງທີ່ດິນ, ການບຸກລຸກທີດິນ ແລະ ປ່າໄມ້ແບບຊະຊາຍ, ການສວຍໂອກາດໂອນເອົາທີ່ດິນຂອງລັດມາເປັນທີ່ດິນສ່ວນບຸກຄົນ ແລະ ການອະນຸຍາດໃຫ້ເຊົ່າ ຫຼື ສຳປະທານທີ່ດິນຂອງລັດທີ່ມີເນື້ອທີ່ກ້ວາງຂວາງ ແລະ ຍາວນານ;
- ເພື່ອຈັດສັນ,ຈັດແບ່ງເຂດ,ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ນຳໃຊ້ທີ່ດິນແຕ່ລະທ້ອງຖິ່ນ, ໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີໄປຕາມແຕ່ລະຂັ້ນເພື່ອຮັບຮອງເອົາ.

1.2 ລະດັບຄາດໝາຍ

- ເຮັດໃຫ້ມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ໃຫ້ມີລະບຽບຫຼັກການຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
- ສ້າງເປັນແຜນທີ່ກຳນົດຂອບເຂດ ແລະ ປະເພດທີ່ດິນໃນແຕ່ລະທ້ອງຖິ່ນ, ເຂດແຄ້ວນ ແລະ ແຫ່ງຊາດຕາມຫຼັກວິຊາການ ແລະ ລະບຽບກົດໝາຍຊຶ່ງມີຄວາມເປັນເອກະພາບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໂດຍອີງຕາມຈຸດພິເສດ, ທ່າແຮງ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
- ເຮັດໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຮັບຮູ້ໄດ້ ແລະ ເຂົ້າໃຈບັນຫາຕ່າງໆ ເພື່ອວາງແຜນໃນການຄຸ້ມຄອງປົກປັກຮັກສາ, ພັດທະນາທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງຖືກຕ້ອງ ແລະ ມີປະສິດທິຜົນຕາມເປົ້າໝາຍ ແລະ ລະບຽບກົດໝາຍທີ່ວາງອອກ;
- ຈັດຕັ້ງປະຕິບັດບັນດາລະບຽບກົດໝາຍຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢ່າງມີປະສິດທິຜົນ;
- ເສີມຂະຫຍາຍຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ເຂົ້າໃນການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດ-ສັງຄົມໃຫ້ດີຂຶ້ນເປັນກ້າວໆ.

ເພື່ອບັນລຸຕາມຈຸດປະສົງ ແລະ ທິດທາງຍຸດທະສາດທີ່ໄດ້ກ່າວມາຂ້າງເທິງນັ້ນໃນການຈັດຕັ້ງປະຕິບັດແມ່ນໃຫ້ທຸກໆພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນໃຫ້ເອົາໃຈໃສ່ສ້າງຄວາມເຂັ້ມແຂງຢ່າງຮອບດ້ານ ໃຫ້ອົງການຄຸ້ມຄອງທີ່ດິນເຊັ່ນວ່າ: ປັບປຸງກົງຈັກການຈັດຕັ້ງ, ປະກອບບຸກຄະລະກອນ, ສະໜອງງົບປະມານ ແລະ ພາຫະນະອຸປະກອນຮັບໃຊ້ຕ່າງໆ ເພື່ອໃຫ້ຈັດຕັ້ງປະຕິບັດວຽກງານການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ, ສ້າງແຜນທີ່ນຳໃຊ້ທີ່ດິນ ແລະ ວາງແຜນຄຸ້ມຄອງປົກປັກຮັກສາ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຢູ່ໃນແຕ່ລະທ້ອງຖິ່ນໄດ້.

1.3 ຂັ້ນຕອນໃນການຈັດຕັ້ງປະຕິບັດ

- ຂັ້ນຕອນທີ 1: ກະກຽມສ້າງແຜນການ, ແຜນງານ, ແຜນຄົນ, ແຜນງົບປະມານ ແລະ ແຜນດຳເນີນງານໂຄງການສຳຫຼວດຈັດສັນທີ່ດິນ;
- ຂັ້ນຕອນທີ 2: ກະກຽມສ້າງຕັ້ງຄະນະຊີ້ນຳ, ຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການຈາກພາກສ່ວນ/ຂະແໜງການທີ່ກ່ຽວຂ້ອງ ແລະອົງການປົກຄອງທ້ອງຖິ່ນທີ່ມີຄວາມຈຳເປັນ;
- ຂັ້ນຕອນທີ 3: ກະກຽມເອກະສານເພື່ອຂໍອະນຸມັດຈາກທ່ານເຈົ້າເມືອງ ເພື່ອຈັດຕັ້ງປະຕິບັດແຜນໂຄງການຕາມແຜນການ, ແຜນດຳເນີນງານໂຄງການທີ່ໄດ້ກຳນົດໄວ້;
- ຂັ້ນຕອນທີ 4: ກະກຽມເອກະສານຂໍ້ຕົກລົງແຕ່ງຕັ້ງຄະນະທີມງານວິຊາການ ເພື່ອຂໍອະນຸມັດໃຫ້ຂັ້ນເທິງພິຈາລະນາຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຄະນະທີມງານວິຊາການ;
- ຂັ້ນຕອນທີ 5: ກະກຽມບັນດາເອກະສານຕ່າງ ທີ່ກ່ຽວພັນກັບທີ່ດິນເຊັ່ນ: ກົດໝາຍ, ດຳລັດ, ມະຕິ ແລະ ລະ ບຽບການຕ່າງໆທີ່ນຳໄປເຜີຍແຜ່ໃຫ້ພາກສ່ວນຂະແໜງການທີ່ກ່ຽວຂ້ອງກັບທີ່ດິນ, ບຸກຄົນ,ນິ ຕິບຸກຄົນ, ບໍລິສັດ ຕະຫຼອດເຖິງປະຊາຊົນຢູ່ໃນແຕ່ລະທ້ອງຖິ່ນເພື່ອໃຫ້ທຸກຄົນຮັບຮູ້ ແລະ ຮັບຊາບກ່ອນ ຫຼື ໄລຍະເວລາຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະບ່ອນ;
- ຂັ້ນຕອນທີ 6: ກະກຽມແບບຟອມການສຳຫຼວດເກັບກຳຂໍ້ມູນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ ຢູ່ແຕ່ລະບ້ານ ແລະ ເມືອງ;
- ຂັ້ນຕອນທີ 7: ກະກຽມແຜນດຳເນີນງານລະອຽດເພື່ອລົງສຳຫຼວດເກັບກຳຂໍ້ມູນ ໃນການນຳໃຊ້ທີ່ດິນ ແລະ ສະພາບເສດຖະກິດ-ສັງຄົມ.

1.4 ວິທີການໃນການຈັດຕັ້ງປະຕິບັດ ລວມທັງການນຳໃຊ້ Program ຕ່າງໆເຂົ້າຊ່ວຍ

- ຈັດກອງປະຊຸມຝຶກອົບຮົມດ້ານເຕັກນິກວິຊາການ ກ່ຽວກັບ ການນຳໃຊ້ເຄື່ອງມື, ອຸປະກອນ ແລະ ໂປແກຼມຕ່າງໆ ພ້ອມດຽວກັນນັ້ນກໍ່ປຶກສາຫາລືກ່ຽວກັບແຜນວຽກແຜນຄົນ ແລະ ຄັດເລືອກກຸ່ມບ້ານເປົ້າໝາຍ;
- ແຈ້ງການໃຫ້ອຳນາດການປົກຄອງບ້ານ-ກຸ່ມບ້ານ ໃຫ້ຮັບຊາບລ່ວງໜ້າກ່ອນເພື່ອກະກຽມບັນດາເອກະ ສານ, ຂໍ້ມູນເສດຖະກິດ-ສັງຄົມ ແລະຂໍ້ມູນໃນການກຳນົດເຂດຄຸ້ມຄອງຂອງບ້ານໃນໄລຍະຜ່ານມາ;
- ເປີດກອງປະຊຸມຂັ້ນບ້ານ-ກຸ່ມບ້ານ ເພື່ອແຈ້ງຈຸດປະສົງ ການຈັດຕັ້ງປະຕິບັດວຽກງານຕໍ່ບ້ານເປົ້າໝາຍ;
- ເຊີນບັນດາອຳນາດການປົກຄອງບ້ານອ້ອມຂ້າງເຂົ້າຮ່ວມ ເພື່ອປຶກສາຫາລືກ່ຽວກັບກຳນົດເຂດຄຸ້ມຄອງລະຫວ່າງບ້ານຕໍ່ບ້ານ ແລ້ວສ້າງບົດບັນທຶກຮ່ວມກັນ;
- ລົງສຳຫຼວດເຂດຄຸ້ມຄອງຂອງບ້ານ ແລະ ປະເພດທີ່ດິນຕ່າງໆ ພ້ອມທັງເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຂໍ້ມູນການນຳໃຊ້ຕອນດິນຂອງປະຊາຊົນພາຍໃນບ້ານ;
- ວິເຄາະ ແລະ ສຶກສາພູມມີປະເທດເພື່ອເປັນບ່ອນອີງໃນການກຳນົດວາງແຜນຈັດສັນການນຳໃຊ້ທີ່ດິນແຕ່ລະ ປະ ເພດຂອງບ້ານ;
- ສັງລວມຂໍ້ມູນພາກສະໜາມ ປ້ອມເຂົ້າໃນຄອມພິວເຕີ ແລ້ວສ້າງເປັນແຜນທີ່ ໂດຍນຳໃຊ້ລະບົບ GIS;
- ຮ່າງບົດລາຍງານ ເພື່ອສະເໜີຜ່ານແຜນຈັດສັນທີ່ດິນພ້ອມທັງກຳນົດລະບຽບ ແລະ ມາດຕະການຄຸ້ມຄອງການນຳໃຊ້ທີ່ດິນ;
- ຈັດກອງປະຊຸມສະເໜີຜ່ານແຜນຈັດສັນການນຳໃຊ້ທີ່ດິນຂັ້ນບ້ານເພື່ອຄວາມເປັນເອກະພາບກັບຂະແໜງການ;
- ຜ່ານແຜນການຈັດສັນທີ່ດິນໃຫ້ອຳນາດການປົກຄອງຂັ້ນບ້ານ-ກຸ່ມບ້ານຮັບຮູ້ແລ້ວນຳສະເໜີຂັ້ນເມືອງຄົ້ນຄວ້າພິຈາລະນາຮັບຮອງ ແລະ ປະກາດໃຊ້ແຜນດັ່ງກ່າວຢ່າງເປັນທາງການ.

II. ສະພາບລວມຂອງບ້ານ

2.1 ປະຫວັດຄວາມເປັນມາຂອງບ້ານ

ບ້ານດົງເມືອງ ອີງຕາມການບອກເລົ່າຈາກອຳນາດການປົກຄອງບ້ານໃນເມື່ອກ່ອນ ສ້າງຕັ້ງຂຶ້ນໃນປີ 1901 ອີງໃສພູມສັນຖານ ແລະ ທີ່ຕັ້ງຢູ່ດົງ ເຊິ່ງຮ່ອງຮອຍທີ່ເຄີຍເປັນບ້ານເມືອງແຕ່ກ່ອນມາແລ້ວໃນເມື່ອກ່ອນ ຈຶ່ງໃສ່ຊື່ບ້ານທີ່ຍົກຍ້າຍມາຕັ້ງໃໝ່ແຫ່ງນີ້ວ່າ: ບ້ານດົງເມືອງ, ແມ່ນຍ້າຍມາຈາກບ້ານທ່າມ່ວງ ເມືອງຈຳພອນ ແຂວງສະຫວັນນະເຂດ ເຊິ່ງນຳພາໂດຍຄອບຄົວ ພໍ່ເຖົ້າພົມມະໂລກ (ພົມມະວົງສາ), ຄອບຄົວພໍ່ເຖົ້າທິດເນດ (ເນດຕະວົງສາ), ຄອບຄົວພໍ່ເຖົ້າໝື່ນ ຜູ້ນຳພາສ້າງຕັ້ງຂຶ້ນເອີ້ນເປັນຊື່ບ້ານດົງເມືອງ ຈົນມາຮອດປະຈຸບັນ.

2.2 ທີ່ຕັ້ງພູມສັນຖານ

ບ້ານດົງເມືອງ ຕັ້ງຢູ່ທິດຕາເວັນອອກ ຂອງເມືອງຈຳພອນ, ແຂວງສະຫວັນນະເຂດ ຫ່າງຈາກເທດສະບານເມືອງປະມານ 28 ກິໂລແມັດ ແລະ ມີລະດັບຄວາມສູງທຽບໃສ່ລະດັບໜ້ານ້ຳທະເລ 169 ແມັດ. ສະພາບພູມສັນຖານເປັນເຂດຫຼຸບໂນນສະຫຼັບພື້ນທີ່ຮາບພຽງໃນການປຸກສ້າງທີ່ຢູ່ອາໃສຂອງປະຊາຊົນສະພາບອາກາດຮ້ອນຊຸ່ມ. ດັ່ງສະແດງໃນຮູບພາບລຸ່ມນີ້:

ພາບຖ່າຍໂດຍ: ທີມງານໂຄງການ IWRM-EbA

ຮູບທີ 1 ສະພາບພູມສັນຖານຂອງບ້ານດົງເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ

2.3 ດ້ານການປົກຄອງ

ບ້ານດົງເມືອງ ມີພົນລະເມືອງທັງໝົດ 910 ຄົນ, ຍິງ 447 ຄົນ, ປະກອບມີ 09 ໜ່ວຍ, ມີ 118 ຫລັງຄາເຮືອນ, ມີ 122 ຄອບຄົວ,ປະກອບມີ 01 ເຜົ່າຄື: ເຜົ່າລາວ, ໄດ້ຮັບນາມມະຍົດເປັນບ້ານໜ່ວຍພັກອດໃສ, ເຂັ້ມແຂງ, ໜັກແໜ້ນ.

ວຽກງານການສຶກສາທົ່ວການປະຈຸບັນໃນບ້ານມີໂຮງຮຽນປະຖົມສົມບູນ 01 ຫຼັງ (ນັບທັງອານຸບານ) ຫ້ອງຮຽນແມ່ນພຽງພໍກັບຄວາມຕ້ອງການ. ມີຈຳນວນນັກຮຽນ 112 ຄົນ, ຍິງ 58 ຄົນ, ມີຄູສອນ 4 ຄົນ, ຍິງ 3 ຄົນ ຫລັງຈາກຮຽນຈົບຊັ້ນປະຖົມ, ມີໂຮງຮຽນມັດທະຍົມຕົ້ນ 01 ຫຼັງ ມີຈຳນວນນັກຮຽນ 81 ຄົນ, ຍິງ 41 ຄົນ, ມີຄູສອນ 10 ຄົນ, ຍິງ 07 ຄົນ

ວຽກງານສາທາລະນະສຸກບ້ານແມ່ນບໍ່ມີສຸກສາລາ 01 ມາໃຊ້ບໍລິການຢູ່ສຸກສາລາບ້ານຊະຄຶນເໜືອ, ປະຊາຊົນໄດ້ຊົມໃຊ້ນ້ຳບາດານ ແລະ ຊົມໃຊ້ວິດຖ່າຍ 100%. ນອກຈາກນັ້ນ, ອົງການຈັດຕັ້ງບ້ານໄດ້ລະດົມ ໃຫ້ແຕ່ລະຄອບຄົວປະຕິບັດຫລັກການອານາໄມ 3 ສະອາດ, ລົບລ້າງການປົ່ນປົວຕາມຄວາມເຊື່ອຖືໄຊຍະສາດ ແລະ ລະດົມໃຫ້ປະຊາຊົນຫັນມາປົ່ນປົວ ໂດຍໃຊ້ຢາຫລວງ ແລະ ແບບວິທະຍາສາດ, ເດັກນ້ອຍໄດ້ຮັບການສັກຢາ, ປອດຢາກັນພະຍາດ 100%. ຜູ້ຍິງຖືພາໄດ້ຮັບການຝາກທ້ອງ ແລະ ປະຕິບັດຕາມຫລັກການແນະນຳຂອງແພດໝໍເປັນປົກກະຕິ ສືບຕໍ່ນຳເອົາບັນດາແຈ້ງການ, ນິຕິກຳຕ່າງໆ ລົງເຜີຍແຜ່ໃຫ້ພໍ່ແມ່ປະຊາ ຊົນໄດ້ຮັບຊາບ ໂດຍສະເພາະແມ່ນ ໂພສະນາການດ້ານສຸຂະພາບ, ການກິນ, ການຢູ່, ຕ້ານພະຍາດແຜ່ລະບາດ, ຖອກທ້ອງ, ໄຂ້ຍຸງ.

2.4 ດ້ານເສດຖະກິດ-ສັງຄົມ

ແຫຼ່ງລາຍຮັບຕົ້ນຕໍຂອງປະຊາຊົນພາຍໃນບ້ານແມ່ນມາຈາກ 2 ແຫຼ່ງລາຍຮັບຕົ້ນຕໍຄື: ມາຈາກການເຮັດນາ ແລະ ສຳຮອງລົງມາແມ່ນມາຈາກການລ້ຽງສັດ ແລະ ອື່ນໆ ການພັດທະນາເສດຖະກິດ-ສັງຄົມແມ່ນມີການຂະຫຍາຍຕົວເພີ້ມຂຶ້ນສາມາດສ້າງລາຍຮັບໃຫ້ແຕ່ລະຄອບຄົບ ເພື່ອໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງມີຄອບຄົວທີ່ຫຼຸດພົ້ນອອກຈາກຄວາມທຸກຍາກ 133 ຄອບຄົວ ແລະ ຄອບຄົວທີ່ຍັງບໍ່ທັນພົ້ນທຸກມີ 02 ຄອບຄົວ.

2.5 ດ້ານວັດທະນະທຳ ແລະ ຮີດຄອງປະເພນີ

ປະຊາຊົນບ້ານດົງເມືອງ ແມ່ນມີຄວາມສາມັກຄີຮັກແພງເຊິ່ງກັນ ແລະ ກັນທັງພາຍໃນ ແລະ ພາຍນອກ ມີວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ປະຕິບັດຕາມຮີດສິບສອງຄອງສິບສີ່ທີບັນພະບຸລຸດຂອງປະຊາຊົນລາວບັນດາເຜົ່າເຄີຍຈັດຕັ້ງປະຕິບັດມາເປັນຕົ້ນແມ່ນ ບຸນປີໃໝ່ລາວ ແລະ ອື່ນໆ.

ຕາຕະລາງທີ 1 ສະແດງດ້ານສາດສະໜາ

ລ/ດ	ປະເພດຊົນເຜົ່າ	ສາດສະໜາ	ຈຳນວນຄອບຄົວ	ໝາຍເຫດ
1	ລາວ	ພຸດ	122	
ລວມ			122	

III. ສະພາບການນຳໃຊ້ທີ່ດິນປະຈຸບັນ

3.1 ການກຳນົດຈຸດທີ່ຕັ້ງຂອງບ້ານ

ຈຸດທີ່ຕັ້ງຊຶ່ງກຳນົດຈຸດໃຈກາງບ້ານ GPS ມີຄ່າພິກັດ: ເສັ້ນແວງທີ X = 572777 m; ເສັ້ນຂະໜານທີ Y = 1802715 m ແລະ ມີລວງຮອບທັງໝົດ = 26.53 ກິໂລແມັດ, ມີເນື້ອທີ່ທັງໝົດ = 1786.2148 ເຮັກຕາ.

3.2 ເຂດຄຸ້ມຄອງຂອງບ້ານດົງເມືອງ

ເຂດຄຸ້ມຄອງຂອງບ້ານດົງເມືອງ ມີເຂດຄຸ້ມຄອງຕິດກັບ 5 ບ້ານຄື:

- ທິດເໜືອ (N) ຕິດກັບ ບ້ານດົງໝາກກ່ຳ-ບ້ານທ່າເມືອງ ເມືອງຈຳພອນ
- ທິດໃຕ້ (S) ຕິດກັບ ບ້ານຊະຄຶນເໜືອ-ບ້ານທ່າມ່ວງ ເມືອງຈຳພອນ
- ທິດຕາເວັນອອກ (E) ຕິດກັບ ບ້ານເຊ-ບ້ານທ່າເມືອງ ເມືອງຈຳພອນ
- ທິດຕາເວັນຕົກ (W) ຕິດກັບ ບ້ານຊະຄຶນເໜືອ-ບ້ານດົງໝາກກ່ຳ

ຕາຕະລາງທີ 2 ຄ່າພິກັດບ້ານດົງໝາກກ່ຳ-ບ້ານທ່າເມືອງ, ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	524013	1830668		ກຳນົດຈຸດເລີ້ມແຕ່ນານາງ ພົນເປັນຈຸດຊາຍແດນລະຫວ່າງ 03 ບ້ານດົງໝາກກ່ຳ, ດົງເມືອງ ແລະ ບ້ານທ່າເມືອງມາໃສ່ດິນນາທ້າວ ໝູ, ນາທ້າວ ເທືອງ, ນານາງ ພົນຫານາທ້າວ ເສັງ, ນານາງເກີດ.
2	526533	1832058		ກຳນົດຈຸດເລີ້ມແຕ່ນານາງ ພົນເປັນຈຸດຊາຍແດນລະຫວ່າງ 03 ບ້ານດົງໝາກກ່ຳ, ດົງເມືອງ ແລະ ບ້ານທ່າເມືອງ ເລາະມາໃສ່ນາທ້າວ ສີສຸນັນມາໃສ່ນາທ້າວ ຄຳຜຸຍມາໃສ່ນາທ້າວ ແສງເພັດແລ້ວອອກໄປໃສ່ທາງຢາງຮອດທາງຮ່ອມເຂົ້າບ້ານທ່າເມືອງແລ້ວຕໍ່ມາໃສ່ນານາງ ນ້ອຍມາໃສ່ນາທ້າວ ສົມບູນ ຕໍ່ໃສ່ນາພໍ່ເຖົ້ານວນຕາມາໃສ່ນານາງ ຈັນແລ້ວມາໃສ່ນາແມ່ເຖົ້ານວມເລາະໄປຫາຈຸດກາງເຊຈຳພອນທີ່ເປັນຊາຍແດນລະຫວ່າງ 03 ບ້ານຄື:ບ້ານທ່າເມືອງ, ບ້ານດົງເມືອງ ແລະ ບ້ານເຊ.
ລວມໄລຍະ			3.181	

ຕາຕະລາງທີ 3 ຄ່າພິກັດບ້ານທ່າເມືອງ-ບ້ານເຊ ເມືອງຈຳພອນ ແຂວງສະຫວັນນເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	526533	1832058		ກຳນົດຈຸດເລີ້ມແຕ່ນານາງ ພົນເປັນຈຸດຊາຍແດນລະ ຫວ່າງ 03 ບ້ານດົງໝາກກ່ຳ, ດົງເມືອງ ແລະ ບ້ານທ່ານ ເມືອງ ເລາະມາໃສ່ນາທ້າວ ສີສຸນັນມາໃສ່ນາທ້າວ ຄຳ ຜຸຍມາໃສ່ນາທ້າວ ແສງເພັດແລ້ວອອກໄປໃສ່ທາງຢາງ ຮອດທາງຮ່ອມເຂົ້າບ້ານທ່າເມືອງແລ້ວຕໍ່ມາໃສ່ນານາງ ນ້ອຍມາໃສ່ນາທ້າວ ສົມບູນຕໍ່ໃສ່ນາພໍ່ເຖົ້ານວນຕາມາ ໃສ່ນານາງ ຈັນແລ້ວມາໃສ່ນາແມ່ເຖົ້ານວມເລາະໄປຫາ ຈຸດກາງເຊຈຳພອນທີ່ເປັນຊາຍແດນລະ ຫວ່າງ 03

				ບ້ານຄື: ບ້ານທ່າເມືອງ, ບ້ານດົງເມືອງ ແລະ ບ້ານເຊ.
2	527521	1829628		ກຳນົດຈຸດຈາກຈຸດກາງເຊຈຳພອນທີ່ເປັນຊາຍແດນລະຫວ່າງ 03 ບ້ານຄື:ບ້ານທ່າເມືອງ, ບ້ານດົງເມືອງ ແລະ ບ້ານເຊ ເລາະຕາມສາຍເຊຈຳພອນມາໃສ່ຈຸດເຄິ່ງກາງຂົວຂ້າມນ້ຳເຊຈຳພອນເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານເຊ, ບ້ານດົງເມືອງ ແລະ ບ້ານທ່າມ່ວງ.
ລວມໄລຍະ			692	

ຕາຕະລາງທີ 4 ຄ່າພິກັດບ້ານບ້ານເຊ-ບ້ານທ່າມ່ວງ, ເມືອງຈຳພອນ ແຂວງສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	527521	1829628		ກຳນົດຈຸດຈາກຈຸດກາງເຊຈຳພອນທີ່ເປັນຊາຍແດນລະຫວ່າງ 03 ບ້ານຄື:ບ້ານທ່າເມືອງ, ບ້ານດົງເມືອງ ແລະ ບ້ານເຊ ເລາະຕາມສາຍເຊຈຳພອນມາໃສ່ຈຸດເຄິ່ງກາງຂົວຂ້າມນ້ຳເຊຈຳພອນເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານເຊ, ບ້ານດົງເມືອງ ແລະ ບ້ານທ່າມ່ວງ.
2	527367	1828699		ກຳນົດຈຸດເຄິ່ງກາງຂົວຂ້າມນ້ຳເຊຈຳພອນເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານເຊ, ບ້ານດົງເມືອງ ແລະ ບ້ານທ່າມ່ວງເລາະໄປຕາມເສັ້ນທາງຢາງຮອດປ້າຍບ້ານທ່າມ່ວງເລາະລົງໃສ່ນານາງ ປາພະສອນແລ້ວໄປຕໍ່ໃສ່ນາຂອງນາງ ຫຼາຍ ແລ້ວໄປຕໍ່ໃສ່ໜອງບົງແລ້ງແຈປ່າຊ້າຂອງບ້ານຊະຄຶນເໜືອເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານທ່າມ່ວງ, ບ້ານດົງເມືອງ ແລະ ບ້ານຊະຄຶນເໜືອ.
ລວມໄລຍະ			1.248	

ຕາຕະລາງທີ 5 ຄ່າພິກັດບ້ານທ່າມ່ວງ-ບ້ານຊະຄຶນເໜືອ ເມືອງຈຳພອນ ແຂວງ ສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	527367	1828699		ກຳນົດຈຸດເຄິ່ງກາງຂົວຂ້າມນ້ຳເຊຈຳພອນເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານເຊ, ບ້ານດົງເມືອງ ແລະ ບ້ານທ່າມ່ວງເລາະໄປຕາມເສັ້ນທາງຢາງຮອດປ້າຍບ້ານທ່າມ່ວງເລາະລົງໃສ່ນານາງ ປາພະສອນແລ້ວໄປຕໍ່ໃສ່ນາຂອງ

				ນາງ ຫຼາຍ ແລ້ວໄປຕໍ່ໃສ່ໜອງບຶງແລ້ງແຈປ່າຊ້າຂອງບ້ານ ຊະຄຶນເໜືອເປັນຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານ ທ່າມ່ວງ, ບ້ານດົງເມືອງ ແລະ ບ້ານຊະຄຶນເໜືອ.
2	525714	1828909		ກຳນົດຈຸດແຈປ່າຊ້າຂອງບ້ານຊະຄຶນເໜືອເປັນຈຸດຊາຍ ແດນລະຫວ່າງ 03 ບ້ານຄື: ບ້ານທ່າມ່ວງ, ບ້ານດົງເມືອງ ແລະ ບ້ານຊະຄຶນເໜືອນາທ້າວ ສຸມາເລາະໄປຕາມຮົ້ວທ້າງ ສຸມາຮອດທາງຢາງແລ້ວລົງໄປຫາປາກຄອງເກົ່ານຳຄອງລົງ ໄປຮອດນາລູງກົມແລ້ວລັດໃສ່ຕີນໂນນນາທ້າວ ແຫ້ ໄປຫາ ໂນນນາທ້າວ ໂພແລ້ວຕໍ່ມາໃສ່ໂນນເຄັ່ງເລາະຕາມອ່າງສຸຍ ໄປຈຸດໃສ່ຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານຊະຄຶນ ເໜືອ, ບ້ານດົງເມືອງ ແລະ ບ້ານດົງໝາກກ່ຳ.
ລວມໄລຍະ			3.859	

ຕາຕະລາງທີ 6 ຄ່າພິກັດບ້ານຊະຄຶນເໜືອ-ບ້ານດົງໝາກກ່ຳ ເມືອງຈຳພອນ ແຂວງ ສະຫວັນນະເຂດ

ຄ່າພິກັດ GPS (ລະບົບ WGS 1984 UTM Zone 48)				
ລ/ດ	E	N	Distance (m)	ໝາຍເຫດ
1	525714	1828909		ກຳນົດຈຸດແຈປ່າຊ້າຂອງບ້ານຊະຄຶນເໜືອເປັນຈຸດຊາຍ ແດນລະຫວ່າງ 03 ບ້ານຄື: ບ້ານທ່າມ່ວງ, ບ້ານດົງເມືອງ ແລະ ບ້ານຊະຄຶນເໜືອນາທ້າວ ສຸມາເລາະໄປຕາມຮົ້ວທ້າງ ສຸມາຮອດທາງຢາງແລ້ວລົງໄປຫາປາກຄອງເກົ່ານຳຄອງລົງ ໄປຮອດນາລູງກົມແລ້ວລັດໃສ່ຕີນໂນນນາທ້າວ ແຫ້ ໄປ ຫາໂນນນາທ້າວ ໂພແລ້ວຕໍ່ມາໃສ່ໂນນເຄັ່ງເລາະຕາມອ່າງ ສຸຍໄປຈຸດໃສ່ຈຸດຊາຍແດນລະຫວ່າງ 03 ບ້ານຄື: ບ້ານຊະ ຄຶນເໜືອ, ບ້ານດົງເມືອງ ແລະ ບ້ານດົງໝາກກ່ຳ.
2	524013	1830668		ກຳນົດຈຸດເລີ້ມແຕ່ນານາງ ພົນເປັນຈຸດຊາຍແດນລະຫວ່າງ 03 ບ້ານດົງໝາກກ່ຳ, ດົງເມືອງ ແລະ ບ້ານທ່າເມືອງມາໃສ່ ດິນນາທ້າວ ໜູ, ນາທ້າວ ເທືອງ, ນານາງ ພົນຫານາທ້າວ ເສັ່ງ, ນານາງເກີດ.
ລວມໄລຍະ			3.849	

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ ປີ 2025

ຮູບທີ 2 ແຜນທີ່ຂອບເຂດຄຸ້ມຄອງບ້ານດົງເມືອງ, ເມືອງຈຳພອນ ແຂວງສະຫວັນນະເຂດ

3.3 ການນຳໃຊ້ທີ່ດິນໃນປະຈຸບັນຂອງບ້ານ

ການນຳໃຊ້ທີ່ດິນໃນໄລຍະຜ່ານມາຂອງບ້ານ ຕາມຕົວຈິງແລ້ວເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຖືອາຊີບເຮັດນາເປັນສ່ວນໃຫຍ່ ແລະ ຖືເອົາການເຮັດກະສິກຳປູກຝັງລ້ຽງສັດເປັນສຳຮອງ ໃນໄລຍະຜ່ານມາ ການນຳໃຊ້ທີ່ດິນຂອງປະຊາຊົນພາຍໃນບ້ານມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຄື:

- **ຂໍ້ສະດວກ:** ເນື່ອງຈາກພື້ນທີ່ດັ່ງກ່າວສ່ວນໃຫຍ່ເປັນຮາບພຽງ ແລະ ມີພື້ນທີ່ເປັນລຸບໂນນຈຳນວນໜຶ່ງ ເຊິ່ງມີຄວາມເໝາະສົມສຳລັບການເຮັດກະສິກຳ ໂດຍສະເພາະການເຮັດນາ ແລະ ລ້ຽງສັດໃຫຍ່ເປັນຕົ້ນແມ່ນ ລ້ຽງງົວ, ລ້ຽງຄວາຍ ແລະ ສັດອື່ນໆ.
- **ຂໍ້ຫຍຸ້ງຍາກ:** ເນື້ອທີ່ດິນທີ່ຈະນຳໃຊ້ເຂົ້າໃນການຜະລິດກະສິກຳເຊັ່ນ: ເນື້ອທີ່ ດິນນາ ແລະ ດິນປູກພືດກະສິກຳ ທົ່ວໄປເພື່ອຮັບປະກັບທາງດ້ານສະບຽງອາຫານໃຫ້ແກ່ປະຊາຊົນພາຍໃນບ້ານກໍ່ຄືພາຍໃນເມືອງ ແມ່ນມີຂໍ້ຈຳກັດ ດັງນັ້ນຈຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການຜະລິດ ບໍ່ມີສາຍນ້ຳພຽງພໍ, ບໍ່ມີລະບົບຊົນລະປະທານ ເປັນສາເຫດໃຫ້ການປູກຝັງລ້ຽງສັດຂ້ອນຂ້າງຫຍຸ້ງຍາກ.

ຕາມການວິເຄາະຂໍ້ມູນຂອງບ້ານຕົວຈິງແລ້ວ ເຫັນໄດ້ວ່າປະຊາຊົນພາຍໃນບ້ານສ່ວນໃຫຍ່ແມ່ນຢຶດຖືເອົາການເຮັດກະສິກຳເປັນຕົ້ນ ດັ່ງນັ້ນເປີເຊັນການນຳໃຊ້ທີ່ດິນສ່ວນໃຫຍ່ແມ່ນເນື້ອທີ່ດິນກະສິກຳກວມເຖິງ 523.26 ເຮັກຕາ ກວມເອົາ 80.26% ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫລືອ ແມ່ນເນື້ອທີ່ດິນປະເພດອື່ນໆ.

ຕາຕະລາງທີ 6 ສັງລວມປະເພດການນຳໃຊ້ທີ່ດິນປະຈຸບັນ ບ້ານດົງເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ເນື້ອທີ່ (ຮຕ)	ເປີເຊັນ %
I	**ດິນກະສິກຳ**	**A**	**519.37**	**79.66**
1	ດິນນາ	A_1	519.3698	79.66
II	**ດິນປຸກສ້າງ**	**B**	**19.4511**	**2.98**
1	ດິນປຸກສ້າງບຸກຄົນ	B_1	19.0398	2.92
2	ທີ່ດິນປຸກສ້າງລັດ ຫຼື ດິນລວມບ້ານ	B_2	0.4113	0.063
III	**ດິນວັດທະນະທຳ**	**C**	**23.37**	**3.58**
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	C_1	1.0503	0.16
2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	C_2	22.3187	3.42
IV	**ດິນປ່າໄມ້**	**F**	**20.50**	**3.14**
1	ທີ່ດິນປ່າຊຶມໃຊ້ທົ່ວໄປ	F_1	20.4985	3.14
V	**ດິນຄົມມະນາຄົມ**	**R**	**7.20**	**1.10**
1	ທີ່ດິນທາງປູຢາງ/ເປຕົງ	R_1	3.305955	0.60
2	ທີ່ດິນທາງດິນແດງ ແລະ ທາງປູຢາງ	R_2	3.8931	9.52
VI	**ດິນບໍລິເວນນ້ຳ**	**W**	**62.072**	**9.52**
1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	W_1	15.6828	2.41
2	ທີ່ດິນໜອງນ້ຳທຳມະຊາດ	W_2	45.5560	6.99
3	ທີ່ດິນອ່າງເກັບນ້ຳ	W_3	0.8334	0.13
ລວມທັງໝົດ			**651.9596**	**100.00**

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 3 ແຜນທີ່ການນຳໃຊ້ທີ່ດິນປະຈຸບັນ ບ້ານດົງເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ

IV. ການຈັດສັນການນຳໃຊ້ທີ່ດິນ

4.1 ການກຳນົດເຂດທີ່ດິນຂອງບ້ານ ດົງເມືອງ

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃຫ້ຖືກກັບລະບຽບການ ແລະ ເຫມາະສົມກັບສະພາບຕົວຈິງ ຂອງແຜນພັດທະນາຂອງບ້ານໃຫ້ກາຍເປັນເຂດພັດທະນາເສດຖະກິດ-ສັງຄົມ ໃນອະນາຄົດ ທາງທີມງານຈັດສັນ ແລະ ສ້າງແຜນທີ່ຕາດິນ ໄດ້ປະສານສົມທົບກັບອົງການປົກຄອງບ້ານຂະແໜງການທີ່ກ່ຽວຂ້ອງ ໄດ້ກຳນົດມີ 3 ເຂດ ດັ່ງນີ້:

4.1.1 ເຂດທີ່ດິນອະນຸລັກ

ກ. ທີ່ດິນວັດທະນະທຳ ແມ່ນປະກອບມີ: ທີ່ດິນປ່າຊ້າ, ປ່າສັກສິດ ແລະ ດິນປ່າມະເຫສັກ;

ຂ. ທີ່ດິນປ່າໄມ້ ປະກອບມີ: ປ່າຊຶມໃຊ້ທົ່ວໄປ.

ຄ. ດິນບໍລິເວນນ້ຳຂອງບ້ານ ປະກອບມີ: ເຂດສະຫງວນແຄມເຊ ຈຳພອນ, ອ່າງສຸຍ

4.1.2 ເຂດທີ່ດິນນຳໃຊ້ນຳ

- **ທີ່ດິນກະສິກຳ**: ເຂດທີ່ດິນກະສິກຳຂອງບ້ານດົງເມືອງປະກອບມີ:ດິນນາ ແມ່ນຢູ່ກາງບ້ານ, ທີ່ດິນສາມາດສົ່ງເສີມການລ້ຽງສັດ ແລະ ໝອງປາລວມບ້ານໃນອານາຄົດແມ່ນກຳນົດເອົາຢູ່ທາງທິດຕາເວັນຕົກຂອງບ້ານ
- **ທີ່ດິນນຳໃຊ້ປຸກສ້າງທີ່ຢູ່ອາໃສປະຈຸບັນຂອງບ້ານ**: ແມ່ນຕັ້ງຢູ່ແຄມທາງຂອງບ້ານ.

- **ດິນປຸກສ້າງຂອງລັດປະກອບມີ:** ດິນໂຮງຮຽນ ປະຖົມສົມບູນ ບ້ານດົງເມືອງ ແລະ ໂຮງຮຽນມັດທະຍົມຕົ້ນ ດົງເມືອງ
- **ເຂດທີ່ດິນເພື່ອພັດທະນາ**

ໝາຍເຖິງເຂດພື້ນທີ່ຈະຂະຫຍາຍລະບົບພື້ນຖານໂຄງລ່າງຂອງບ້ານ, ເຂດທີ່ຂະຫຍາຍພື້ນທີ່ປຸກສ້າງ ຂອງບ້ານເພື່ອຮອງຮັບການເພີ່ມຂຶ້ນຂອງປະຊາກອນໃນອະນາຄົດ, ການຂະຫຍາຍພື້ນທີ່ດິນດັ່ງກ່າວ ແມ່ນໄດ້ກຳນົດເອົາລຽບຕາມແຄມສອງຝາກທາງຂອງບ້ານ.

4.1.3 ຄວາມຮັບຮູ້ໂດຍລວມໃນການສຳຫຼວດຈັດສັນທີ່ດິນ

ການສຳຫຼວດຈັດສັນ ແມ່ນຈຸດເລີ້ມຕົ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນບຸລິມະສິດທຳອິດຂອງວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນໃນແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນຕິດພັນກັບການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ເພື່ອຮັກສາແຫຼ່ງນ້ຳ, ຊີວະນາງພັນ ແລະ ຄວາມອຸດົມສົມບູນຂອງດິນໃນແຕ່ລະເຂດໂດຍອີງໃສ່ຈຸດພິເສດ, ທີ່ຕັ້ງ ແລະ ພູມສັນຖານຂອງປະເທດເຮົາເຊິ່ງປະກອບມີເຂດທົ່ງພຽງ, ປ່າໂຄກ. ຂົງເຂດເຫຼົ່ານີ້, ລ້ອນແລ້ວແຕ່ແມ່ນເຂດທີ່ມີປະຊາຊົນບັນດາເຜົ່າໄດ້ຕັ້ງຖິ່ນຖານພູມລຳເນົາຢູ່ຢ່າງກະແຈກກະຈາຍ, ຊຶ່ງເຂົາເຈົ້າໄດ້ດຳລົງຊີວິດ, ທຳມາຫາກິນທີ່ຕິດພັນກັບປ່າໄມ້, ເຄື່ອງປ່າຂອງດົງ ແລະ ອາຫານຈາກທຳມະຊາດຕາມຫ້ວຍ, ໜອງ, ບຶງ ແລະ ແມ່ນ້ຳລຳເຊຕ່າງໆ, ທີ່ເພິ່ງພາອາໄສຄວາມອຸດົມສົມບູນຂອງທຳມະຊາດເປັນຕົ້ນຕໍ, ແຕ່ຖ້າຫາກມີການປ່ຽນແປງ ປະຊາຊົນກໍຈະມີຄວາມຫຍຸ້ງຍາກຂຶ້ນ ແລະ ອີກດ້ານໜຶ່ງການເພີ້ມຂຶ້ນຂອງພົນລະເມືອງກໍເປັນສາຍເຫດໜຶ່ງທີ່ພາໃຫ້ມີຄວາມການຕ້ອງນຳໃຊ້ທີ່ດິນ ແລະຊັບພະຍາກອນທຳມະຊາດເພີ້ມຂຶ້ນ, ມີການຈັບຈອງທີ່ດິນແບບຊະຊາຍອັນກໍ່ໃຫ້ເກີດມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ຖ້າຫາກບໍ່ມີການສຳຫຼວດຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນແລະວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາແລະນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດແລະແຫຼ່ງນ້ຳໃຫ້ເຂົ້າສູ່ລະບຽບຫຼັກການແລະກົດໝາຍທີ່ກຳນົດໄວ້.

ການສຳຫຼວດຈັດສັນທີ່ດິນແຕ່ລະເຂດແລະແຕ່ລະປະເພດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍໄຟຟ້າ, ກົດໝາຍວ່າດ້ວຍບໍ່ແຮ່, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ,ກົດໝາຍວ່າດ້ວຍຜັງເມືອງ, ກົດໝາຍວ່າດ້ວຍທາງຫຼວງ, ກົດໝາຍວ່າດ້ວຍອຸດສະຫະກຳປຸງແຕ່ງ, ບັນດາກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ແລະ ນອກຈາກນີ້ຕ້ອງອີງໃສ່ຈຸດທີ່ຕັ້ງຂອງພື້ນທີ່ຕົວຈິງ ຕາມພູມສັນຖານ ແລະ ຄວາມຄ້ອຍຊັນທີ່ໄດ້ກຳນົດໄວ້ໃນມາດຕະການນຳໃຊ້ທີ່ດິນຄື:

- **ຄວາມຄ້ອຍຊັນແຕ່ 0-5%** ແມ່ນກຳນົດເປັນທີ່ດິນນາສຳລັບປູກເຂົ້າ ແລະ ກະສິກຳອື່ນໆ,ຖ້າຈະປູກພືດລົ້ມລຸກຄວນປຸກພືດຄຸມດິນ ແລະ ຖ້າຈະປູກໄມ້ຢືນຕົ້ນກໍຕ້ອງມີລະບົບລະບາຍນ້ຳຢ່າງເໝາະສົມ.
- **ຄວາມຄ້ອຍຊັນແຕ່ 5-15%** ແມ່ນກຳນົດເປັນພື້ນທີ່ກະສິກຳຫຼືປ່າໄມ້ທຸກປະເພດ(ນອກຈາກການເຮັດຊົນລະປະທານ) ແຕ່ຖ້າຈະປູກພືດລົ້ມລຸກຕ້ອງເຮັດຄັນຄູດິນຕາມແນວລະດັບຂວາງເພື່ອປ້ອງກັນການເຊາະເຈື່ອນ.
- **ຄວາມຄ້ອຍຊັນແຕ່ 15-25%** ແມ່ນກຳນົດເປັນພື້ນທີ່ປູກໄມ້ທຸກປະເພດແຕ່ວ່າຊັນໂພດສຳລັບທົ່ງຫ້ຍາລ້ຽງສັດ,ຖ້າຈະປູກພືດລົ້ມລຸກຕ້ອງເຮັດເປັນນາຂັ້ນໄດເພື່ອເປັນການປົກປັກຮັກສາໜ້າດິນເສຍກ່ອນ.
- **ຄວາມຄ້ອຍຊັນແຕ່ 25-5%** ແມ່ນກຳນົດເປັນພື້ນທີ່ປູກຕົ້ນໄມ້ທຸກຊະນິດຫຼືຖ້າຈະປູກພືດປະສົມປະສານກັບການປູກປ່າຫຼືຈະປູກໄມ້ຊຸມຊົນກໍໄດ້,ຖ້າຈະປູກຫ້ຍາລ້ຽງສັດກໍຕ້ອງກ່ຽວເອົາຫຍ້າໄປໃຫ້ສັດກິນຢູ່ໃນຄອກ ແລະ ຖ້າຈະປູກໄມ້ສວນຕ້ອງມີພືດຄຸມດິນລະຫວ່າງກົກໄມ້ຕະຫຼອດແນວ.

- **ຄວາມຄ້ອຍຊັນສູງກ່ວາ 35-45%** ແມ່ນກຳນົດເປັນປ່າປ້ອງກັນການເຊາະເຈື່ອນຂອງດິນ, ປ່າປ້ອງກັນແຫຼ່ງນ້ຳແລະປ່າປົກປັກຮັກສາຊີວະນາງພັນເທົ່ານັ້ນ,ໃນກໍລະນີໃຊ້ເປັນປ່າຜະລິດເຄື່ອງປ່າຂອງດົງ ກໍຈະຕ້ອງລະມັດລະວັງບໍ່ໃຫ້ທີ່ດິນເກີດການເຊາະເຈື່ອນໃນເວລາຂຸດຄົ້ນເຄື່ອງປ່າຂອງດົງນັ້ນ.
- **ຄວາມຄ້ອຍຊັນ 45% ຂຶ້ນໄປ** ແມ່ນບໍ່ເໝາະສົມສຳລັບປ່າຜະລິດແລ້ວ, ຕ້ອງເປັນປ່າສະຫງວນ,ປ່າປ້ອງກັນແຫຼ່ງນ້ຳ, ຊີວະນາງພັນແລະປ້ອງກັນບໍ່ໃຫ້ດິນເຊາະເຈື່ອນ.

4.2 ການກຳນົດປະເພດທີ່ດິນຂອງບ້ານ

ອີງຕາມຂໍ້ມູນການສຳຫຼວດ ແມ່ນສາມາດສັງລວມ ແລະ ຈັດແບ່ງປະເພດການນຳໃຊ້ທີ່ດິນຂອງບ້ານດົງເມືອງ ອອກເປັນ 6 ປະເພດທີ່ດິນ ເຊິ່ງລາຍລະອຽດຂອງປະເພດທີ່ດິນມີຄື:

❖ ການກຳນົດ ທີ່ດິນກະສິກຳ

ທີ່ດິນກະສິກຳ ແມ່ນທີ່ດິນທີ່ໄດ້ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄ້ວາທົດລອງທາງດ້ານກະສິກຳ. ເຂດທີ່ດິນກະສິກຳຂອງບ້ານດົງເມືອງ ປະກອບມີ: ດິນນາ, ດິນປູກພືດກະສິກຳທົ່ວໄປ, ເຂດລ້ຽງສັດ ແລະ ໝອງລວມບ້ານແມ່ນກຳນົດເອົາຢູ່ທາງທິດຕາເວັນຕົກຂອງບ້ານ.

❖ ການກຳນົດ ທີ່ດິນປຸກສ້າງ

ທີ່ດິນປຸກສ້າງແມ່ນທີ່ດິນທີ່ກຳນົດໄວ້ເພື່ອນຳໃຊ້ເຂົ້າໃນ ການປຸກສ້າງທີ່ຢູ່ອາໄສສຳນັກງານ, ອົງການ ແລະ ເຂດທີ່ດິນປຸກສ້າງຂອງບ້ານ ແມ່ນລຽບຢູ່ຕາມສອງຝາກທາງເຂົ້າບ້ານ.

- ທີ່ດິນປຸກສ້າງທີ່ຢູ່ອາໃສປະຈຸບັນ: ກຳນົດຢູ່ແຄມເຊຈຳພອນ ແລະ ແຄມທາງຂອງບ້ານ.
- ດິນປຸກສ້າງຂະຫຍາຍໃໝ່ໄດ້ກຳນົດຕາມສອງຝາກທາງໄປບ້ານຊະຄຶນເໜືອ ແລະ ບ້ານດົງໝາກກໍ່
- ດິນປຸກສ້າງຂອງລັດປະກອບມີ: ດິນຫ້ອງການບ້ານ ແລະ ດິນປຸກສ້າງໂຮງຮຽນ.

❖ ການກຳນົດ ທີ່ດິນວັດທະນະທຳ

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງ ຂອງມໍລະດົກທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດ ສາດ, ວັດຖຸບູຮານ, ປູສະນີຍະສະຖານ, ທົວທັດທຳມະຊາດ, ສິ່ງປຸກສ້າງດ້ານວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ. ທີ່ດິນວັດທະນະທຳຂອງບ້ານ ດົງເມືອງ ປະກອບມີ:

- ດິນປ່າຊ້າ ກຳນົດຢູ່ທາງທິດເໜືອຂອງບ້ານ
- ດິນປ່າມະເຫສັກ ກຳນົດຢູ່ທາງທິດຕາເວັນອອກຂອງບ້ານ.

❖ ການກຳນົດ ທີ່ດິນປ່າໄມ້

ທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນທີ່ມີປ່າປົກຫຸ້ມ ຫຼື ທີ່ດິນບໍ່ມີປ່າປົກຫຸ້ມ ເຊິ່ງລັດກຳນົດໃຫ້ເປັນທີ່ດິນປ່າໄມ້ຂອງບ້ານ ແມ່ນປະກອບມີ: ປ່າຊົມໃຊ້ທົ່ວໄປ.

❖ ການກຳນົດ ທີ່ດິນຄົມມະນາຄົມ

ທີ່ດິນຄົມມະນາຄົມ ແມ່ນທີ່ດິນສຳລັບໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ເຂດສະຫງວນ ແລວທາງ, ສະຖານທີ່ຕັ້ງຂົວ ແລະ ທີ່ດິນອື່ນໆ ທີ່ໃຊ້ເຂົ້າໃນວຽກງານການຂົນສົ່ງ ປະກອບມີ 2 ປະເພດ:

- ເສັ້ນທາງ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ;
- ເສັ້ນທາງຕັດໃໝ່ ມີຄວາມກວ້າງ 8 ແມັດ ຈາກໃຈກາງທາງເບື້ອງລະ 4 ແມັດ.

❖ **ການກຳນົດ ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນເຊິ່ງຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳເຊັ່ນ: ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປ່ຽງໃໝ່, ທີ່ດິນນ້ຳບົກປະ ຫຼື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ທີ່ດິນບໍລິເວນນ້ຳຂອງບ້ານ ແມ່ນປະກອບມີ: ຫ້ວຍ ແລະ ຮ່ອງຕ່າງໆ ຕ້ອງໄດ້ກຳນົດປ່າປ້ອງກັນການເຊາະເຈື່ອນ, ເພື່ອຮັກສາດິນແຄມອ່າງສຸຍ, ແຄມເຊຈຳພອນ, ແຄມຮ່ອງຕ່າງໆໃຫ້ມີຄວາມຍືນຍົງຕະຫຼອດໄປ.

ຕາຕະລາງທີ 7 ສັງລວມປະເພດການຈັດສັນທີ່ດິນບ້ານສີວິໄລ, ເມືອງຈຳພອນ ແຂວງສະຫວັນນະເຂດ

ລຳດັບ	ປະເພດທີ່ດິນ	ລະຫັດດິນ	ສີ	ເນື້ອທີ່ (ຮຕ)	ເປີເຊັນ %
I	**ດິນກະສິກຳ**	**AZ**		**523.26**	**80.26**
1	ທີ່ດິນນາ	AZ_1		511.0322	78.38
2	ທີ່ດິນແຮຂະຫຍາຍການຜະລິດ	AZ_5		12.2263	1.88
II	**ດິນປຸກສ້າງ**	**BZ**		**20.7068**	**3.18**
1	ດິນປຸກສ້າງບຸກດິນ	BZ_1		17.6035	2.70
2	ທີ່ດິນປຸກສ້າງລັດ ແລະ ດິນລວມບ້ານ	BZ_2		0.3806	0.058
3	ທີ່ດິນແຮຂະຫຍາຍ ປຸກສ້າງ	BZ_3		2.7228	0.418
III	**ດິນວັດທະນະທຳ**	**CZ**		**21.79**	**3.34**
1	ທີ່ດິນສິ່ງປຸກສ້າງທາງ, ວັດທະນະທຳ	CZ_1		1.0142	0.16
2	ທີ່ດິນ ປ່າຊ້າ, ປ່າສັກສິດ, ຫໍມະເຫສັກ	CZ_2		20.7761	3.19
IV	**ດິນປ່າໄມ້**	**FZ**		**8.21**	**1.26**
1	ທີ່ດິນປ່າຊົມໃຊ້ທົ່ວໄປ	FZ_1		8.2054	1.26
V	**ດິນຄົມມະນາຄົມ`**	**RZ**		**10.44**	**1.60**
1	ທີ່ດິນທາງປູຢາງ/ເປຕົງ	RZ_1		3.305955	0.60
2	ທີ່ດິນທາງດິນແດງ ແລະ ທາງປູຢາງ	RZ_2		3.8807	0.50
3	ທີ່ດິນແຮຂະຫຍາຍເສັ້ນທາງ	RZ_3		3.2572	10.36
Vl	**ດິນບໍລິເວນນ້ຳ**	**WZ**		**67.555**	**10.36**
1	ທີ່ດິນແມ່ນ້ຳ, ຫ້ວຍນ້ຳ	WZ_1		15.6828	2.41
2	ທີ່ດິນໜອງນ້ຳທຳມະຊາດ	WZ_2		45.5560	6.99
3	ທີ່ດິນອ່າງເກັບນ້ຳ	WZ_3		0.8334	0.13
3	ທີ່ດິນສະຫງວນແຄມນ້ຳ	WZ_4		5.4826	0.84
ລວມທັງໝົດ				**651.9596**	**100.00**

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ, ປີ 2025



ລຳດັບ	ປະເພດທີ່ດິນ	ລະຫັດທີ່ດິນ	ສີ	ເນື້ອທີ່	ເປີເซັນ %
I	ທີ່ດິນກະສິກຳ	A2		523.26	80.26
1	ທີ່ດິນນາ	A2_1		511.0322	78.38
2	ທີ່ດິນສວນຍານພາຫະນະ	A2_3		12.2263	1.88
II	ທີ່ດິນປຸກສ້າງ	B2		20.7068	3.18
1	ທີ່ຢູ່ອາໄສຫມູ່ບ້ານ	B2_1		17.6035	2.70
2	ທີ່ດິນປຸກສ້າງວັດ ແລະ ປະຫວັດສາດ	B2_2		0.3806	0.058
3	ທີ່ດິນສວນສາທາລະນະ ປຸງແຕ່ງ	B2_3		2.7228	0.418
III	ທີ່ດິນລ້ຽງສັດ	C2		21.79	3.34
1	ທີ່ດິນລ້ຽງສັດຫຼາຍປະເພດ	C2_1		1.0142	0.16
2	ທີ່ດິນ ເນີ້ງ, ຫ້ວຍ, ຫ້ວຍນ້ຳ, ຄົນ	C2_2		20.7761	3.19
IV	ທີ່ດິນປ່າໄມ້	F2		8.21	1.26
2	ທີ່ດິນປ່າໄມ້ເກີດໃຫ່	F2_1		8.2054	1.26
V	ທີ່ດິນສະເພາະ	R2		10.44	1.60
1	ທີ່ດິນສະເພາະປ່ານ້ຳ	R2_1		3.905955	0.60
2	ທີ່ດິນສະເພາະ ແລະ ສະເພາະ	R2_2		3.8807	0.60
3	ທີ່ດິນສວນຍານພາຫະນະ	R2_3		3.2572	10.36
VI	ທີ່ດິນນ້ຳ	W2		67.555	10.36
1	ທີ່ດິນແມ່ນ້ຳ, ຄົນ	W2_1		15.6628	2.41
2	ທີ່ດິນສະຫນ່ວງນ້ຳ	W2_2		45.5560	6.99
3	ທີ່ດິນບ່ອນກັກເກັບ	W2_3		0.8334	0.13
3	ທີ່ດິນສະຫນ່ວງສະແດງ	W2_4		5.4826	0.84
ລວມ				651.9596	100.00

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 4 ແຜນທີ່ຈັດສັນການນຳໃຊ້ທີ່ດິນ ບ້ານດົງເມືອງ ເມືອງຈຳພອນ ແຂວງສະຫວັນນະເຂດ

ພາຍຫຼັງໄດ້ມີການວາງແຜນຈັດສັນ, ຈັດແບ່ງເຂດ ແລະ ຈັດແບ່ງປະເພດທີ່ດິນຂອງບ້ານສີວິໄລ ແລ້ວເຫັນວ່າ: ເນື້ອທີ່ດິນແຕ່ລະປະເພດມີການປ່ຽນແປງບາງປະເພດທີ່ດິນກໍ່ມີການເພີ່ມຂຶ້ນ ແລະ ບາງປະເພດທີ່ດິນກໍ່ມີການລຸດລົງຍ້ອນວ່າ:

1 ທີ່ດິນກະສິກຳ ເນື້ອທີ່ດິນກະສິກຳຫລຸດລົງຍ້ອນວ່າ: ບ້ານໄດ້ກຳນົດເຂດຈະຂະຫຍາຍການປຸກສ້າງ, ກຳນົດເຂດສະຫງວນແຄມນ້ຳເຊຈຳພອນ.

2 ທີ່ດິນປຸກສ້າງ ມີເນື້ອທີ່ເພີ່ມຂຶ້ນຍ້ອນວ່າ: ໄດ້ມີການກຳນົດເຂດຈະຂະຫຍາຍການປຸກສ້າງເພີ່ມຂຶ້ນ ເພື່ອຮອງຮັບການຍ້າຍບ້ານໃນອະນາຄົດ.

3 ທີ່ດິນວັດທະນະທຳ ແມ່ນຄົງທີ່ບໍ່ມີການເພີ່ມຂຶ້ນ.

4 ທີ່ດິນປ່າໄມ້ ມີເນື້ອທີ່ບໍ່ໄດ້ເພີ່ມຂຶ້ນ.

5 ທີ່ດິນຄົມມະນາຄົມ ມີເນື້ອທີ່ບໍ່ມີການເພີ່ມຂຶ້ນຍ້ອນບໍ່ໄດ້ມີການຂະຫຍາຍທາງ

6 ທີ່ດິນບໍລິເວນນ້ຳ ມີເນື້ອທີ່ບໍ່ໄດ້ເພີ່ມຂຶ້ນ

ຕາຕະລາງທີ 8 ສົມທຽບລະຫວ່າງເນື້ອທີ່ການນຳໃຊ້ດິນປະຈຸບັນ ແລະ ເນື້ອທີ່ການຈັດສັນທີ່ດິນ

ລ/ດ	ປະເພດການນຳໃຊ້	ເນື້ອທີ່ນຳໃຊ້ປະຈຸບັນ(ha)	ກວມສ່ວນຮ້ອຍ (%)	ເນື້ອທີ່ແຜນຈັດສັນ (ha)	ກວມສ່ວນຮ້ອຍ (%)	ເປີເซັນການປ່ຽນແປງ(%)

1	ທີ່ດິນທີ່ດິນກະສິກຳ	519.37	79.66	523.26	80.26	
2	ທີ່ດິນປຸກສ້າງ	19.4511	2.98	20.7068	3.18	
3	ທີ່ດິນວັດທະນະທຳ	23.37	3.58	21.79	3.34	
4	ທີ່ດິນປ່າໄມ້	20.50	3.14	8.21	1.26	
5	ທີ່ດິນຄົມມະນາຄົມ	7.20	1.10	10.44	1.6	
6	ທີ່ດິນບໍລິເວນນ້ຳ	60.072	9.52	67.555	10.36	
ລວມເນື້ອທີ່ທັງຫມົດ		651.9596	100.00	651.9596	100	

ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງຈຳພອນ, ປີ 2025



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 5 ສະແດງເຖິງຄວາມແຕກຕ່າງທາງດ້ານເນື້ອທີ່ ລະຫວ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ



ແຫຼ່ງຂໍ້ມູນ: ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງຈຳພອນ, ປີ 2025

ຮູບທີ 6 ສະແດງເຖິງຄວາມແຕກຕ່າງການນຳໃຊ້ທີ່ດິນປະຈຸບັນ ແລະ ການຈັດສັນທີ່ດິນ

V. ທ່າແຮງໃນການພັດທະນາທີ່ດິນ

5.1 ທ່າແຮງໃນການພັດທະນາທີ່ດິນຂອງບ້ານ

ບ້ານ ດົງເມືອງ ເປັນບ້ານໜຶ່ງທີ່ມີທ່າແຮງໃນການປູກພືດອາຍຸສັ້ນ ເປັນຕົ້ນແມ່ນ ປູກເຂົ້າ ແລະ ພືດກະສິກຳທົ່ວໄປ ນອກຈາກນີ້ຍັງມີການລ້ຽງສັດນ້ອຍ ແລະ ຄ້າຂາຍທີ່ເປັນອາຊີບຫຼັກ.

1) ການປູກເຂົ້າ, ແລະ ສາລີ
2) ການລ້ຽງສັດໃຫ່ຍປະເພດງົວຄວາຍ ແລະ ຍັງມີສັດນ້ອຍທີ່ລ້ຽງຕາມບ້ານລະດັບຄອບຄົວ.

5.2 ການຈັດບຸລິມະສິດໂຄງການພັດທະນາທີ່ດິນຂອງບ້ານດົງເມືອງ

ອີງໃສ່ທ່າແຮງໃນການພັດທະນາຂອງບ້ານ ແລະ ຄວາມສາມາດຕົວຈິງຂອງບ້ານທີ່ມີຢູ່ນັ້ນ ສາມາດກຳນົດໂຄງການພັດທະນາທີ່ດິນພາຍໃນບ້ານ ເຄີງ ໄດ້ຈັດໂຄງການບຸລິມະສິດຕົ້ນຕໍດັ່ງນີ້:

- ສືບຕໍ່ໂຄງການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນກະສິກຳ
- ສືບຕໍ່ໂຄງການກໍ່ສ້າງຄູກັນນ້ຳ ແລະ ກັນເຈື່ອນ,
- ພື້ນຖານໂຄງລ່າງ ປັບປຸງ ແລະ ຂະຫຍາຍລະບົບຕາໜ່າງເສັ້ນທາງພາຍໃນບ້ານ.

ທັງ 3 ໂຄງການນີ້ ແມ່ນມອບໃຫ້ຂະແໜນງການທີ່ກ່ຽວຂ້ອງຂອງເມືອງ ໃຫ້ພິຈາລະນາຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດ ເພື່ອລົບລ້າງຄວາມທຸກຈົນຂອງທ້ອງຖິ່ນ ຕາມແນວທາງນະ�โยบายຂອງພັກ ແລະ ລັດຖະບານວາງອອກ.

VI. ລະບຽບການຄຸ້ມຄອງ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ

ພາຍຫລັງທີ່ໄດ້ສຳເລັດ ແລະ ຮັບຮອງເອົາແຜນຈັດສັນ, ຈັດແບ່ງເຂດ, ຈັດແບ່ງປະເພດ, ສ້າງເປັນແຜນທີ່ການນຳໃຊ້ທີ່ດິນຢ່າງເປັນທາງການແລ້ວ ມອບແຜນຈັດສັນທີ່ດິນດັ່ງກ່າວໃຫ້ແກ່ອົງການປົກຄອງທ້ອງຖິ່ນ ບັນດາຂະແໜງ ການຕ່າງໆ ຂອງເມືອງ, ບ້ານເປັນຜູ້ຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບໃຫ້ເຂົ້າສູ່ລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງກັບທີ່ດິນ ແລະ ນຳພາໃນການສ້າງກົດລະບຽບ ໃນການຄຸ້ມຄອງແຜນຈັດສັນທີ່ດິນດັ່ງກ່າວນີ້ໃຫ້ໄດ້ຮັບຜົນດີ.

6.1 ການຄຸ້ມຄອງ ທີ່ດິນກະສິກຳ

ທີ່ດິນກະສິກຳຂອງບ້ານດົງເມືອງ ປະກອບມີ: ດິນນາ, ດິນສວນ, ດິນປູດພືດກະສິກຳທົ່ວໄປ, ດິນສົ່ງເສີມການລ້ຽງສັດນ້ອຍ, ການຄຸ້ມຄອງດິນກະສິກຳແມ່ນຫ້າມບໍ່ໃຫ້ປ່ຽນແປງດິນກະສິກຳໄປເປັນດິນປະເພດອື່ນ ຖ້າຈະຫັນປ່ຽນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງເສຍກ່ອນ.

6.2 ການຄຸ້ມຄອງທີ່ດິນປຸກສ້າງ

ດິນປຸກສ້າງຂອງບ້ານສີວິໄລ ປະຈຸບັນມີທີ່ດິນປຸກສ້າງທີ່ຢູ່ອາໃສ, ດິນຫ້ອງການບ້ານ, ດິນໂຮງຮຽນ ແລະ ດິນແຮຂະຫຍາຍການປຸກສ້າງ; ການຄຸ້ມຄອງປົກປັກຮັກສາແມ່ນໃຫ້ປະຕິບັດຕາມ ກົດໝາຍ ວ່າດ້ວຍ ທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019 ໂດຍສະເພາະ ຢ່າງເຂັ້ມງວດ. ຖ້າຈະມີການຫັນປ່ຽນດິນປະເພດນີ້ໄປເປັນດິນປະເພດອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ.

6.3 ການຄຸ້ມຄອງ ທີ່ດິນວັດທະນາທຳ

